ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ

ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະທີ 2 (ທລຍ 2)





# ປື້ມຄູ່ມື

## ສິດສະເໝີພາບ ຍິງ-ຊາຍ ແລະ ການມີ ສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ

(GENDER EQUALITY AND SOCIAL INCLUSION)

**ສຳລັບພະນັກງານ ທລຍ**





**ກຸມພາ 2015**

# ປື້ມຄູ່ມື

ກ່ຽວກັບ

# ສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ

## (Gender Equarlity And Social Inclusion)

ສຳລັບ

# ພະນັກງານ ທລຍ ຂັ້ນເມືອງ

ຜະລິດໂດຍ: ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ 2 (ທລຍ 2)

ຮຽບຮຽງໂດຍ: ໜ່ວຍງານ ສົ່ງເສີມສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ (GESI)

ກວດກາໂດຍ: ທ່ານຜູ້ອຳນວຍການ ບໍລິຫານ ທລຍ,
ຫົວໜ້າພະແນກພັດທະນາຊຸມຊົນ,
ໜ່ວຍງານຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ (IEC).

ກຸມພາ
2015

# ຄຳນຳ

ການຈັດຕັ້ງປະຕິບັດວຽກງານ ກອງທຶນຫຼຸດຜ່ອນຄວາມທຸກຍາກໄລຍະທີ 2 (ທລຍ 2) ໄດ້ເນັ້ນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ກໍ່ຄືການສ້າງໃຫ້ຊຸມຊົນສາມາດວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານພັດທະນາໄດ້ດ້ວຍຕົວເຂົາເຈົ້າເອງ ໂດຍສະເພາະແມ່ນແມ່ຍິງ, ຊົນເຜົ່າສ່ວນໜ້ອຍ ແລະ ຜູ້ທຸກຍາກໃນຂອບເຂດເປົ້າໝາຍຂອງ ທລຍ, ທັງນີ້ກໍ່ເພື່ອເຮັດໃຫ້ມີຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ມີສ່ວນຮ່ວມຢ່າງເຕັມທີ່ຂອງກຸ່ມຜູ້ດ້ອຍໂອກາດ ຊຶ່ງເປັນຫລັກການທີ່ສຳຄັນຂອງການຈັດຕັ້ງປະຕິບັດວຽກງານ ທລຍ 2 ແລະ ຕ້ອງໄດ້ພັກດັນໃຫ້ເກີດຂື້ນໃນທາງປະຕິບັດຕົວຈິງຂອງການຈັດຕັ້ງປະຕິບັດວຽກງານ ທລຍ 2.

ສະນັ້ນ, ເພື່ອເປັນຄູ່ມືການສອນ ແລະ ບ່ອນອີງໃຫ້ແກ່ພະນັກງານ ທລຍ ຢູ່ຂັ້ນເມືອງ ແລະ ຂັ້ນແຂວງ ນຳໄປເປັນຄູ່ມືການຮຽນການສອນໃຫ້ແກ່ຜູ້ປະສານງານກຸ່ມບ້ານ, ຄະນະຮັບຜິດຊອບໂຄງການ ທລຍ ຂັ້ນສູນກາງ ຈຶ່ງໄດ້ຜະລິດປຶ້ມຄູ່ມືການສອນ ກ່ຽວກັບ **"ສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ"** ຫົວນີ້ຂື້ນມາ. ປຶ້ມຄູ່ມືດັ່ງກ່າວນີ້, ນອກຈາກໄດ້ສັງລວມເອົາເນື້ອໃນພື້ນຖານ ກ່ຽວກັບ ສິດສະເໝີພາບຍິງ-ຊາຍ; ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ແລະ ວິທີການວາງແຜນແບບມີສ່ວນຮ່ວມແລ້ວ ຍັງໄດ້ສັງລວມເອົາວິທີການສົ່ງເສີມສິດສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ພ້ອມທັງບົດສອນກ່ຽວກັບທັກສະໃນການເປັນຜູ້ນຳພາກຸ່ມສົນທະນາໃນເວລາປະຊຸມອີກດ້ວຍ.

ເພື່ອເຮັດໃຫ້ການສຶກສາ ແລະ ການສອນຂອງພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງມີປະສິດທິພາບ ແລະ ປະສິດທິຜົນນັ້ນ, ຄະນະຮັບຜິດຊອບ ທລຍ ຂັ້ນສູນກາງ ຂໍສະເໜີ ແລະ ຮຽກຮ້ອງມາຍັງພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ ຈົ່ງນຳໃຊ້ປຶ້ມຄູ່ມືສະບັບນີ້ ເພື່ອສິດສອນໃຫ້ແກ່ຜູ້ປະສານງານກຸ່ມບ້ານຢ່າງຕໍ່ເນື່ອງ ໂດຍການຍົກເອົາບັນດາເນື້ອໃນບົດສອນແຕ່ລະພາກ ເຂົ້າໃນວາລະການຈັດກອງປະຊຸມປະຈຳເດືອນ ແລະ ຝຶກອົບຮົມຄືນ ໃຫ້ແກ່ຜູ້ປະສານງານກຸ່ມບ້ານໃນແຕ່ລະເດືອນຂອງໄລຍະການຈັດຕັ້ງປະຕິບັດໂຄງການຍ່ອຍດ້ວຍ.

ສະແດງຄວາມນັບຖື,

ຜູ້ອຳນວຍການບໍລິຫານ ທລຍ

ບຸນກວ້າງ ສຸວັນນະພັນ

Bounkhouang SOUVANNAPHANH

## ສາລະບານ ໜ້າ

ກິດຈະກຳຝຶກອົບຮົມກ່ຽວກັບ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ..... iv

ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ (GESI) ..... iv

1. ຈຸດປະສົງຂອງການຝຶກອົບຮົມ: ..... iv
2. ເປົ້າໝາຍທີ່ຄາດວ່າຈະໄດ້ຮັບ: ..... iv
3. ສະຖານທີ່ ແລະ ເວລາໃນການສອນ: ..... iv
4. ຄູຝຶກ/ຄູສອນແມ່ນໃຜ?: ..... v
5. ວິທີການສອນເຮັດແນວໃດ?: ..... v
6. ຜູ້ເຂົ້າຮ່ວມໃນການຮຽນຮູ້ແມ່ນໃຜ: ..... v
7. ສັງລວມຫຍໍ້ບົດສອນ ..... vi

ພາກທີ I: ນະໂຍບາຍ ແລະ ສົນທິສັນຍາທີ່ພົວພັນເຖິງສິດສະເໝີພາບ ຍິງ-ຊາຍ ແລະ ຊົນເຜົ່າ ໃນ ສ ປ ປ ລາວ ..... 1

ບົດທີ 1: ແຜນຍຸດທະສາດແຫ່ງຊາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ 5 ປີ (2011-2015) ຄັ້ງທີ II ..... 1

ບົດທີ 2: ກົດໝາຍຂອງລາວທີ່ກ່າວສິດຂອງພົນລະເມືອງລາວ ຢູ່ໃນລັດຖະທຳມະນູນ ແລະ ກົດໝາຍສັນຊາດລາວ, ກົດໝາຍສື່ມວນຊົນ ..... 2

ບົດທີ 3: ນະໂຍບາຍຂອງລັດຖະບານ ແຫ່ງ ສ ປ ປ ລາວ ..... 3

ພາກທີ II: ເພດ, ບົດບາດ ແລະ ສິດສະເໝີພາບລະຫວ່າງຍິງ-ຊາຍ ..... 8

ບົດທີ 1: ເພດ ແລະ ບົດບາດ ຫລື ສິດທິຂອງຍິ ແລະ ຊາຍ ..... 8

ບົດທີ 2: ສິດສະເໝີພາບ ແລະ ຄວາມທ່ຽງທຳລະຫວ່າງຍິງ-ຊາຍ ..... 14

1. GE = ສິດສະເໝີພາບ ຍິງ-ຊາຍ ໝາຍເຖິງຫຍັງ? ແລະ ສະແດງອອກແນວໃດ ? ..... 14
2. GE = ຄວາມທ່ຽງທຳ ລະຫວ່າງ ຍິງຊາຍ (Gender Equity) ແມ່ນຫຍັງ? ..... 15
3. ສາມຫລັກການ ແລະສາມຮູບແບບ ຂອງສິດສະເໝີພາບ. ..... 15

ພາກທີ III: ການພັດທະນາ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ..... 25

ບົດທີ 1: ການພັດທະນາແບບມີສ່ວນຮ່ວມ ແລະ ການພັດທະນາແມ່ຍິງ ..... 25

A. ຫ້າ (5) ແນວຄວາມຄິດໃນການພັດທະນາແມ່ຍິງ. ..... 28

B. ການພັດທະນາແມ່ຍິງ ໃນການຈັດຕັ້ງປະຕິບັດວຽກງານ ທລຍ ..... 29

A. ແນວຄວາມຄິດແມ່ຍິງໃນການພັດທະນາ. ..... 31

B. "ແມ່ຍິງໃນການພັດທະນາ" (Women in Development): ..... 31

C. ແນວຄວາມຄິດສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາ (Gender And Development): ..... 31

D. ສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາແມ່ນຫັຍງ? ..... 31

ບົດທີ 2: ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ (Social Inclusion=SI) ..... 32

ພາກທີ IV: ການສົ່ງເສີມ ສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດເຂົ້າໃນວຽກງານພັດທະນາ ..... 37

ບົດທີ 1: ການສົ່ງເສີມສິດສະເໝີພາບຍິງ-ຊາຍ ..... 37

1. ຄວາມໝາຍ ແລະ ຄວາມສຳຄັນ ..... 37

2. ເຄື່ອງມືສຳລັບການເຊື່ອມທັດສະນະບົດບາດຍິງ-ຊາຍ: ..... 38

3. ການວາງແຜນພັດທະນາທີ່ເອົາໃຈໃສ່ ສິດສະເໝີພາບ ຍິງ-ຊາຍ ..... 39

ບົດທີ 2: ການສົ່ງເສີມການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ເຂົ້າໃນແຕ່ລະຂັ້ນຕອນຂອງການຈັດຕັ້ງປະຕິບັດວຽກງານ ທລຍ ..... 40

1. ຮອບວຽນໂຄງການຂອງການຈັດຕັ້ງປະຕິບັດໂຄງການຍ່ອຍຂອງ ທລຍ. ..... 40

2. ການສົ່ງເສີມສິດສະເໝີພາບຍິງ-ຊາຍ ໃນແຕ່ລະຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການ ..... 41

ພາກທີ V: ທັກສະຜູ້ພາກຸ່ມສົນທະນາໃນເວລາປະຊຸມ/ຝຶກອົບຮົມ/ຜູ້ດຳເນີການສຳມະນາ ..... 45

(Role and Skill of Facilitator of focus group discussion) ..... 45

ບົດທີ 1: ທັກສະຜູ້ພາກຸ່ມສົນທະນາໃນເວລາປະຊຸມ/ຝຶກອົບຮົມ (Role and Skill of Facilitator of focus group discussion). ..... 45

1) ຜູ້ພາກຸ່ມສົນທະນາ (Facilitator of group discussion) ..... 45

2) ການກະກຽມ: ..... 47

3) ທີມງານ: ..... 48

4) ທັດສະນະການວາງຕົວຂອງຜູ້ພາກຸ່ມສົນທະນາ :..........48

5) ເຕັກນິກການຖາມ:..........48

ບົດທີ 2: ບັນຫາທີ່ຜູ້ພາກຸ່ມສົນທະນາ/ຄູຝຶກອາດປະເຊີນ..........51

1. ຜູ້ເຂົ້າຮ່ວມທີ່ງຽບ/ອາຍ..........51

2. ຜູ້ເຂົ້າຮ່ວມທີ່ເວົ້າຫລາຍ..........51

3. ຜູ້ເຂົ້າຮ່ວມທີ່ຮູ້ໝົດທຸກຢ່າງ..........52

4. ຜູ້ເຂົ້າຮ່ວມເຮັດໂຕເປັນເຈົ້ານາຍ..........52

5. ຜູ້ເຂົ້າຮ່ວມມັກລົມກັນ..........52

6. ຜູ້ເຂົ້າຮ່ວມທີ່ຂັດຄ້ານຕະຫລອດ - ແຂງກະດ້າງ..........53

7. ຜູ້ເຂົ້າຮ່ວມຕະຫລົກ..........53

8. ວິທີຈັດການກັບສິ່ງລົບກວນ, ສິ່ງບົ່ງເບນຄວາມສົນໃຈ..........53

ບົດທີ 3: ກົດເກນ 10 ຢ່າງຂອງການເປັນຜູ້ພາກຸ່ມສົນທະນາ/ຄູຝຶກ..........54

1) ຟັງຫລາຍກວ່າເວົ້າ...........54

2) ຮັບປະກັນການມີສ່ວນຮ່ວມຢ່າງເຕັມສ່ວນ...........54

3) ໝັ້ນໃຈວ່າຈະໄດ້ຍິນສຽງຂອງແມ່ຍິງ ໂດຍສະເພາະແມ່ນແມ່ຍິງຊົນເຜົ່າ ແລະ ແມ່ຍິງທີ່ງຽບ...........54

4) ນຳໃຊ້ອຸປະກອນຊ່ວຍ ດ້ານທັດສະນະວິໄສ (ແບບເຮັດໃຫ້ເຫັນ/ປະຈັກຕາ)...........54

5) ຮັບປະກັນ ການເຂົ້າໃຈເປັນລັກສະນະດຽວກັນ ກ່ຽວກັບຂໍ້ຄິດເຫັນຕົ້ນຕໍ...........54

6) ຈົ່ງກະກຽມເປັນຢ່າງດີ...........55

7) ມີຜູ້ບັນທຶກໜຶ່ງຄົນ...........55

8) ບໍລິຫານເວລາຢ່າງສະຫລາດ...........55

9) ເລັງເປົ້າໝາຍໃສ່ກຸ່ມທີ່ມີຂະໜາດນ້ອຍກວ່າ..........55

10) ຮັກສາການມີອາລົມເບີກບານ ສະນຸກສະໜານ...........55

# ກິດຈະກຳຝຶກອົບຮົມກ່ຽວກັບ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ (GESI)

## 1. ຈຸດປະສົງຂອງການຝຶກອົບຮົມ:




1) ເພື່ອປູກຈິດສຳນຶກໃຫ້ແກ່ຜູ້ປະສານງານກຸ່ມບ້ານ ກ່ຽວກັບ ສິດສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ;
2) ເພື່ອເພີ່ມທັກສະຂອງຜູ້ປະສານງານກຸ່ມບ້ານ ໃນການສົ່ງເສີມສິດສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດໃນການຈັດຕັ້ງປະຕິບັດວຽກງານພັດທະນາ;

## 2. ເປົ້າໝາຍທີ່ຄາດວ່າຈະໄດ້ຮັບ:



1) ຜູ້ເຂົ້າຮ່ວມຝຶກອົບຮົມມີຄວາມຮູ້ ແລະ ເຂົ້າໃຈ ກ່ຽວກັບ ສິດສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ໃຫ້ຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດວຽກງານພັດທະນາແບບມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ.
2) ຜູ້ເຂົ້າຮ່ວມສາມາດປ່ຽນແປງພຶດຕິກຳໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ໃຫ້ມີສິດສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ໄດ້ເປັນກ້າວໆ.

## 3. ສະຖານທີ່ ແລະ ເວລາໃນການສອນ:

ບົດຮຽນທັງໝົດ ປະກອບດ້ວຍ 5 ພາກ, ລວມເວລາການສອນທັງໝົດ 2ມື້, ການຮຽນ-ການສອນ ແມ່ນຈັດຂຶ້ນຢູ່ກອງປະຊຸມປະຈຳເດືອນ ແລະ ຝຶກອົບຮົມຄືນ ສຳງັບຜູ້ປະສານງານກຸ່ມບ້ານ ຢູ່ແຕ່ລະເມືອງເປົ້າໝາຍຂອງ ທລຍ. ການຝຶກແມ່ນຍົກເອົາໄປສອນຜູ້ປະສານງານກຸ່ມບ້ານ ເທື່ອລະພາກ, ແຕ່ລະພາກໃຊ້ເວລາ 4-6 ຊົ່ວໂມງ.

## 4. ຄູຝຶກ/ຄູສອນແມ່ນໃຜ?:



ຄູຝຶກຫລັກ ແມ່ນພະນັກງານ ທລຍ ຂັ້ນເມືອງ ຊຶ່ງເປັນຜູ້ທີ່ເຄີຍໄດ້ຮັບການຝຶກອົບຮົມ ກ່ຽວກັບ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງກຸ່ມຜູ້ດ້ອຍໂອກາດ ໃນວຽກງານ ທລຍ, ຈຸດປະສົງຂອງປື້ມຄູ່ມືນີ້ ແມ່ນເພື່ອເພີ່ມຄວາມຮູ້ ແລະ ສີມື ໃນການຝຶກອົບຮົມໃຫ້ດີຂື້ນ.

## 5. ວິທີການສອນເຮັດແນວໃດ?:



1) ຈັດຝຶກອົບຮົມໃຫ້ຜູ້ປະສານງານກຸ່ມບ້ານ ໃນເວລາຈັດກອງປະຊຸມປະຈຳເດືອນສຳລັບຜູ້ປະສານງານກຸ່ມບ້ານ, ຝຶກ 1-2 ພາກຕໍ່ເດືອນ;
2) ລະດົມເອົາຄວາມຮູ້ ແລະ ຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມຝຶກອົບຮົມກ່ອນ ແລ້ວໃຫ້ຂໍ້ມູນທີ່ມີໃນທິດສະດີ ແລະ ມີຕົວຢ່າງຈາກປະສົບການຜ່ານມາຂອງໂຄງການ ທລຍ;
3) ການສອນໃນແຕ່ລະພາກ ໃຊ້ວິທີລະດົມສະໝອງໃນກຸ່ມໃຫຍ່ ແລະ ຈັດກຸ່ມຄົ້ນຄ້ວາເປັນກຸ່ມນ້ອຍ (ແບ່ງກຸ່ມຍິງ, ຊາຍ ແລະ ກຸ່ມປະສົມ ກຸ່ມລະ 5-8 ຄົນ) ແລະ ກຸ່ມໃຫຍ່ ເພື່ອສົນທະນາຄົ້ນຄ້ວາແບບມີສ່ວນຮ່ວມ,ຮຽນຮູ້ນຳກັນ ລະຫວ່າງ ຜູ້ເຂົ້າຮ່ວມ;
4) ເປີດໂອກາດໃຫ້ແຕ່ລະຄົນຂຶ້ນນຳສະເໜີ ແລະ ສະແດງຄຳຄິດເຫັນໃນຫ້ອງປະຊຸມ;
5) ສະເໜີໃຫ້ແຕ່ລະຄົນສະເໜີຄຳຄິດຄຳເຫັນຕາມຕົນເອງຄິດ ແລະ ບໍ່ຢຶດຕິດກັບຄຳຕອບທີ່ ຜິດ-ຖືກ, ທຸກຄົນມາຮຽນຮູ້ນຳກັນ, ບໍ່ວິຈານກັນ, ຕ່າງຄົນຕ່າງຄິດຢ່າງເປັນທຳມະຊາດ;
6) ກໍລະນີຜູ້ເຂົ້າຮ່ວມສ່ວນໃຫຍ່ບໍ່ເຂົ້າໃຈພາສາລາວດີ (ເປັນຊົນເຜົ່າຈຳນວນຫລາຍຄົນ) ກໍ່ຕ້ອງໄດ້ເຮັດການຮຽນການສອນເປັນພາສາຊົນເຜົ່າ, ດ້ວຍຊົນເຜົ່າເອງ, ຫລືລ້ຽງການໃຊ້ຜູ້ແປ ຖ້າບໍ່ຈຳເປັນ;
7) ໃຊ້ເຄື່ອງມືປະກອບການສອນເຊັ່ນ:
   - ສາຍ Power point, ມີຄູ່ມືປະກອບ, ເອະສານຕ່າງໆ;
   - ໃຊ້ຮູບພາບ, Poster, VDO, ຟີມ;
   - ສະແດງບົດບາດຕົວຈິງ, ຫລີ້ນເກມ ປະກອບບົດຮຽນ

## 6. ຜູ້ເຂົ້າຮ່ວມໃນການຮຽນຮູ້ແມ່ນໃຜ:

ຜູ້ປະສານງານກຸ່ມບ້ານຂອງ ທລຍ ຢູ່ແຕ່ລະເມືອງເປົ້າໝາຍ

# 7. ສັງລວມຫຍໍ້ບົດສອນ

<u>ຕາຕະລາງທີ 1</u>: **ສັງລວມຫຍໍ້ ບົດສອນ ສຳລັບການຝຶກອົບຮົມ**

| **ພາກ** | **ຫົວຂໍ້ບົດສອນ** | **ເວລາ** |
|---|---|---|
| **ພາກທີ I:** ນະໂຍບາຍ ແລະ ສົນທິສັນຍາ ທີ່ພົວພັນເຖິງ ບົດບາດຍິງ-ຊາຍ ໃນ ສປປ ລາວ ແລະ ນະໂຍບາຍຊົນເຜົ່າ | **ບົດທີ 1:** ແຜນຍຸດທະສາດແຫ່ງຊາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ 5 ປີ (2011-2015) ຄັ້ງທີ II<br>ບົດທີ 2: ກົດໝາຍຂອງລາວທີ່ກ່າວສິດຂອງພົນລະເມືອງລາວຢູ່ໃນລັດຖະທຳມະນູນ ແລະ ກົດໝາຍສັນຊາດລາວ, ກົດໝາຍສິ່ມອນຊົນ | 2ຊມ<br>2ຊມ |
| **ພາກທີ II:** ບົດບາດ ແລະ ສິດສະເໝີພາບ ລະຫວ່າງ ຍິງ-ຊາຍ | ບົດທີ 1: ເພດ, ບົດບາດຍິງ-ຊາຍ ຫລື ສິດທິຂອງຍິງ-ຊາຍ.<br>ບົດທີ 2: ສິດສະເໝີພາບ ແລະ ຄວາມທ່ຽງທຳລະຫວ່າງຍິງຊາຍ | 2ຊມ<br>2ຊມ |
| **ພາກທີ III:** ການພັດທະນາ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ | ບົດທີ 1: ການພັດທະນາແບບມີສ່ວນຮ່ວມ ແລະ ການພັດທະນາແມ່ຍິງ<br>ບົດທີ 2: ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ | 2ຊມ<br>2ຊມ |
| **ພາກທີ IV:** ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດເຂົ້າໃນການຈັດຕັ້ງປະຕິບັດວຽກງານພັດທະນາ; | ບົດທີ 1: ການສົ່ງເສີມສິດສະເໝີພາບຍິງ-ຊາຍ<br>ບົດທີ 2: ການສົ່ງເສີມສິດສະເໝີພາບຍິງຊາຍ ແລະການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດເຂົ້າໃນແຕ່ລະຂັ້ນຕອນຂອງການຈັດຕັ້ງປະຕິບັດວຽກງານ ທລຍ | 1ຊມ<br>3ຊມ |
| **ພາກທີ V:** ທັກສະຂອງຜູ້ພາກຸ່ມສົນທະນາໃນເວລາປະຊຸມ/ຝຶກອົບຮົມ/ດຳເນີນການສຳມະນາ | ບົດທີ 1: ທັກສະຂອງຜູ້ພາກຸ່ມສົນທະນາໃນເວລາປະຊຸມ/ຝຶກອົບຮົມ<br>ບົດທີ 2: ບັນຫາທີ່ຜູ້ພາກຸ່ມສົນທະນາ/ຄູຝຶກອາດປະເຊີນ<br>ບົດທີ 3: ກົດເກນ 10 ຢ່າງຂອງການເປັນຜູ້ພາກຸ່ມສົນທະນາ/ຄູຝຶກ | 2ຊມ<br>2ຊມ<br>2ຊມ |

# ພາກທີ I
# ນະໂຍບາຍ ແລະ ສົນທິສັນຍາທີ່ພົວພັນເຖິງສິດສະເໝີພາບ ຍິງ-ຊາຍ ແລະ ຊົນເຜົ່າ ໃນ ສ ປ ປ ລາວ

## ບົດທີ 1:
## ແຜນຍຸດທະສາດແຫ່ງຊາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ 5 ປີ (2011-2015) ຄັ້ງທີ II

ຄະນະກຳມະການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຫ່ງຊາດ ໄດ້ມີແຜນຍຸດທະສາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງໃນໄລຍະ 5 ປີ, 2011-2015 ຄັ້ງທີ II ຊຶ່ງປະກອບມີ 4 ແຜນງານຄື:

1) **ແຜນງານທີ I:** ພັດທະນາລະບົບຂໍ້ມູນຂ່າວສານ, ສະຖິຕິແຍກເພດ ແລະ ດຳເນີນການໂຄສະນາເຜີຍແຜ່, ປູກຈິດສຳນຶກ ແລະ ສ້າງຂະບວນການ ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມອບສິດເປັນເຈົ້າໃຫ້ແກ່ແມ່ຍິງ.
   - ❖ **ຄາດໝາຍສູ້ຊົນ:**
     - ➢ ເຊື່ອມຊຶມ
     - ➢ ຈັດຕັ້ງການສຶກສາຄົ້ນຄ້ວາ,
2) **ແຜນງານທີ II:** ສ້າງຄວາມເຂັ້ມແຂງໃຫ້ບັນດາອົງການຈັດຕັ້ງ ແລະ ບຸກຄະລາກອນທີ່ເຮັດວຽກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ.
   - ❖ **ຄາດໝາຍສູ້ຊົນ:**
     - ➢ ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ,
3) **ແຜນງານທີ III:** ຮັບປະກັນສິດສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມອບສິດເປັນເຈົ້າໃນທຸກດ້ານ.
   - ❖ **ຄາດໝາຍສູ້ຊົນ:**
     - ➢ ສູ້ຊົນໃຫ້ຈຳນວນເພດຍິງ ເປັນສະມາຊິກສະພາແຫ່ງຊາດໃຫ້ໄດ້ 30% ຂຶ້ນໄປ;
     - ➢ ສູ້ຊົນເພີ່ມຈຳນວນແມ່ຍິງ
4) **ແຜນງານທີ IV** : ການປະຕິບັດພັນທະຂອງສປປລາວຕໍ່ສົນທິສັນຍາຊີດໍ ແລະ ສົນທິສັນຍາສາກົນຕ່າງໆທີ່ກ່ຽວພັນເຖິງແມ່ຍິງ (ລວມມີ 2 ຄາດໝາຍ ແລະ 10 ແຜນດຳເນີນງານ).

- **ຄາດໝາຍສູ້ຊົນ:**
  - ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ,
  - ການຈັດຕັ້ງ

## ບົດທີ 2:
## ກົດໝາຍຂອງລາວທີ່ກ່າວສິດຂອງພົນລະເມືອງລາວ ຢູ່ໃນລັດຖະທຳມະນູນ ແລະ ກົດໝາຍສັນຊາດລາວ, ກົດໝາຍສິ່ງແວດລ້ອມ

ລັດຖະທຳມະນູນລາວກ່າວເຖິງສິດພື້ນຖານຂອງປະຊາຊົນລາວດັ່ງນີ້ :

**ມາດຕາ 21.** ພົນລະເມືອງລາວ ແມ່ນ ຜູ້ຖືສັນຊາດລາວ ຕາມທີ່ກົດໝາຍລະບຸ.

**ມາດຕາ 22.** ພົນລະເມືອງລາວ ໂດຍບໍ່ຈຳແນກ ເພດ, ຖານະພາບສັງຄົມ, ການສຶກສາ, ຄວາມເຊື່ອ ແລະ ຊົນເຜົ່າ ທຸກຄົນ ເທົ່າທຽມກັນ ຕໍ່ໜ້າກົດໝາຍ.

**ມາດຕາ 23.** ພົນລະເມືອງລາວ ອາຍຸ 18 ປີ ຂຶ້ນໄປ ມີສິດ ເລືອກຕັ້ງ ແລະ ມີສິດ ຖືກເລືອກຕັ້ງ ເວລາໄດ້ 21 ປີ ຂຶ້ນໄປ ຍົກເວັ້ນ ບຸກຄົນເສຍສະຕິ ແລະ ບຸກຄົນທີ່ຖືກຕັດສິດ ເລືອກຕັ້ງ ແລະ ສິດຖືກເລືອກຕັ້ງ ໂດຍສານ.

**ມາດຕາ24.** ພົນລະເມືອງລາວ ທັງສອງເພດ ມີສິດເທົ່າທຽມກັນໃນທາງການເມືອງ, ເສດຖະກິດ, ວັດທະນະທຳ ແລະ ທາງສັງຄົມ ແລະ ພາຍໃນຄອບຄົວ.

**ມາດຕາ 25.** ພົນລະເມືອງລາວ ມີສິດ ໄດ້ຮັບການສຶກສາ.

**ມາດຕາ 26.** ພົນລະເມືອງລາວ ມີສິດເຮັດວຽກ ແລະ ມີອາຊີບ ທີ່ບໍ່ຜິດກົດໝາຍ. ຄົນເຮັດວຽກມີສິດພັກຜ່ອນ, ມີສິດໄດ້ຮັບການປິ່ນປົວຈາກແພດໝໍເວລາເຈັບເປັນ, ລວມທັງ ຜູ້ເສຍອົງຄະ ແລະ ພິການ, ຜູ້ມີອາຍຸສູງ, ແລະ ກໍລະນີອື່ນໆ ຕາມກົດໝາຍລະບຸ.

**ມາດຕາ 27.** ພົນລະເມືອງລາວ ມີອິດສະຫລະພາບ ຕັ້ງຖິ່ນຖານ ແລະ ຍົກຍ້າຍ ຕາມກົດໝາຍລະບຸ.

**ມາດຕາ 28.** ພົນລະເມືອງລາວ ມີສິດ ທີ່ຈະຮ້ອງທຸກ ແລະ ຟ້ອງຮ້ອງ ແລະ ສະເໜີ ແນວຄິດ ຕໍ່ອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງ ໃນກໍລະນີທີ່ເປັນປະເດັນ ກ່ຽວກັບສິດ ແລະ ຜົນປະໂຫຍດຂອງສ່ວນລວມ ແລະ ຂອງສ່ວນບຸກຄົນ. ຄຳຮ້ອງທຸກ, ຄຳຟ້ອງຮ້ອງ ແລະ ແນວຄວາມຄິດຂອງພົນລະເມືອງ ຕ້ອງຖືກພິຈາລະນາ ເພື່ອແກ້ໃຂຕາມກົດໝາຍລະບຸ.

**ມາດຕາ 29**. ສິດທິຂອງພົນລະເມືອງລາວ ຕໍ່ຮ່າງກາຍ ແລະ ຕໍ່ເຄຫາສະໂນຂອງເຂົາເຈົ້າ ແມ່ນລ່ວງເກີນບໍ່ໄດ້. ພົນລະເມືອງລາວ ບໍ່ສາມາດຖືກຈັບກຸມ ຫລື ເປັນຜູ້ຕ້ອງຫາ ໂດຍປັດສະຈາກ ການຢັ້ງຢືນ ຫລື ອະນຸມັດ ໂດຍອົງການຈັດຕັ້ງກ່ຽວຂ້ອງ, ນອກຈາກ ກໍລະນີ ທີ່ກົດໝາຍລະບຸ.

**ມາດຕາ 30**. ພົນລະເມືອງລາວ ມີສິດ ແລະ ມີອິດສະຫລະພາບທີ່ຈະເຊື່ອຫລື ບໍ່ເຊື່ອຖືສາສະໜາ.

**ມາດຕາ 31**. ພົນລະເມືອງລາວ ມີສິດ ແລະ ອິດສະຫລະພາບໃນການປາກເວົ້າ, ໃຫ້ຂ່າວກັນ ແລະ ລວມກັນ; ແລະ ມີສິດ ທີ່ຈະສ້າງຕັ້ງສະມາຄົມ ແລະ ສ້າງການເດີນຂະບວນທີ່ບໍ່ຕ້ານກັບກົດໝາຍ.

**ມາດຕາ 32**. ພົນລະເມືອງລາວມີສິດ ແລະ ອິດສະຫລະພາບ ທີ່ຈະສຶກສາຄົ້ນຄວ້າ ແລະ ຈະນຳໃຊ້ວິທະຍາສາດ; ເຕັກນິກ ແລະ ເຕັກໂນໂລຊີ ທີ່ນຳໜ້າ; ແລະ ທີ່ຈະສ້າງສິລະປະ ແລະ ວັນນະກຳ ແລະ ດຳເນີນກິດຈະກຳວັດທະນະທຳ ທີ່ບໍ່ຕ້ານກັບກົດໝາຍ.

**ມາດຕາ 33**. ລັດປົກປ້ອງ ສິດທິທາງກົດໝາຍ ແລະ ຜົນປະໂຫຍດຂອງພົນລະເມືອງລາວ ທີ່ຢູ່ຕ່າງປະເທດ.

**ມາດຕາ 34**. ພົນລະເມືອງລາວ ມີ ພັນທະ ໃນການນັບຖື ລັດຖະທຳມະນູນ ແລະ ກົດໝາຍ, ແລະ ໃນການປະຕິບັດວິໄນການເຮັດວຽກ, ກົດລະບຽບການດຳລົງຊີວິດໃນສັງຄົມ ແລະ ກົດລະບຽບ ແລະ ລະບຽບການໃນປະເທດ.

**ມາດຕາ 35**. ພົນລະເມືອງລາວມີພັນທະໃນການຈ່າຍພາສີ ແລະ ອາກອນ ໂດຍສອດຄ່ອງຕາມກົດໝາຍ.

**ມາດຕາ 36**. ພົນລະເມືອງລາວມີພັນທະປ້ອງກັນປະເທດ, ປົກປັກຮັກສາຄວາມສະຫງົບຂອງປະຊາຊົນ ແລະ ປະຕິບັດພັນທະ ທາງທະຫານ ຕາມກົດໝາຍລະບຸ.

## ບົດທີ 3:

## ນະໂຍບາຍຂອງລັດຖະບານ ແຫ່ງ ສ ປ ປ ລາວ

ນະໂຍບາຍ ຂອງລັດຖະບານລາວ ທີ່ສະໜັບສະໜູນ ສິດສະເໝີພາບ ຍິງ-ຊາຍ (ສິດສະເໝີພາບລະຫວ່າງເພດ) ແລະ ການມີສ່ວນຮ່ວມຂອງສັງຄົມ.

ລັດຖະບານ ສປປ ລາວ ເປັນພາຄີ ຂອງ ສົນທິສັນຍາສາກົນ ວ່າດ້ວຍ ສິດທິມະນຸດ, ແລະ ຖະແຫລງການອາຊຽນ ເຊັ່ນ :

**<u>ຕາຕະລາງທີ 2:</u> ສົນທິສັນຍາ ແລະ ນະໂຍບາຍ ຕ່າງໆ ກ່ຽວກັບ ສິດສະເໝີພາບຍິງຊາຍ**

| ລ/ດ | ຊື່ຂອງສົນທິສັນຍາ ແລະ ຖະແຫລງການ | ຖານະພາບຕໍ່ສົນທິສັນຍາ | ຕາມລໍາດັບປີ |
|---|---|---|---|
| 1 | ຖະແຫຼງ ກາ ສາກົ ວ່າດ້ວຍ ສິດທິມະ ຸດ (Universal Declaration of Human Rights–UDHR) ທີ່ ຮັບຮອງ ໂດຍ ສະຫະປະຊາຊາດ ໃ ປີ 1948. | ພາຄີ | 1948 |
| 2 | ສົນທິສັນຍາວ່າດ້ວຍສິດທິທາງການເມືອງຂອງແມ່ຍິງ | ພາຄີ | 1969 |
| 3 | ສົນທິສັນຍາ ວ່າດ້ວຍ ການກໍາຈັດ ການຈໍາແນກເຊື້ອຊາດ ໃນທຸກຮູບການ | ຮັບຮອງປະຕິບັດ | 1974 |
| 4 | ສົນທິສັນຍາ ວ່າດ້ວຍ ການຈໍາແນກ ທຸກຮູບການຈໍາແນກ ຕໍ່ແມ່ຍິງ (ຊີດໍ) | ລົງນາມ ສັດຕະຍາບັນ | 1980<br>1981 |
| 5 | ສົນທິສັນຍາ ວ່າດ້ວຍ ສິດທິເດັກ | ຮັບຮອງ | 1991 |
| 6 | ສົ ທິສັ ຍາ ສາກົ ວ່າດ້ວຍ ສິດທິ ທາງເສດຖະກິດ-ສັງຄົມ ແລະ ວັດທະນະທໍາ. | ລົງນາມສັດຕະຍາບັນ | 2000<br>2007 |
| 7 | ສົ ທິ ສັ ຍາສາກົ ວ່າດ້ວຍ ສິດທິ ພົ ລະເມືອງ ແລະ ສິດທິ ທາງກາ ເມືອງ. | ລົງນາມ ສັດຕະຍາບັນ | 2000<br>2009 |
| 8 | ຖະແຫລງການ ສະຫະປະຊາຊາດ ວ່າດ້ວຍ ສິດທິຂອງ ຄົນພື້ນເມືອງ (UNDRIP) | ລົງຄະແນນສຽງທີ່ສະມັດຊາໃຫຍ່ສະຫະປະຊາຊາດ | 2007 |
| 9 | ສົນທິສັນຍາ ວ່າດ້ວຍສິດທິຄົນພິການ | ລົງນາມ ສັດຕະຍາບັນ | 2008-2009 |
| 10 | ການປົກປ້ອງ ທຸກຄົນທີ່ສູນຫາຍແບບຖືກບັງຄັບ | ລົງນາມ | 2008 |
| 11 | ສົນທິສັນຍາ ຕ້ານ ການທໍລະມານ ແລະ ການລົງໂທດ ແບບໂຫດຮ້າຍ, ໄຮ້ມະນຸດສະທໍາ ແລະ ປະຈານ; | ລົງນາມ ສັດຕະຍາບັນ | 2010<br>2012 |
| | ຖະແຫລງການ ອາຊຽນ | | |
| 1 | ຖະແຫລງການ ວ່າດ້ວຍ ການລົບລ້າງ ຄວາມຮຸນແຮງຕໍ່ແມ່ຍິງ ໃນຂົງເຂດ ອາຊຽນ | ລົງນາມຮ່ວມ | 2004 |
| 2 | ຖະແຫລງການ ສິດທິມະນຸດ ຂອງ ອາຊຽນ | ລົງນາມຮ່ວມ | 2012 |
| 3 | ຖະແຫລງການ ວຽງຈັນ ວ່າດ້ວຍ ການຍົກລະດັບ ທັດສະນະ ຕໍ່ Gender ແລະ ການຮ່ວມມືກັນຂອງແມ່ຍິງອາຊຽນເພື່ອຄວາມຍືນຍົງຂອງສະພາບແວດລ້ອມ | ລົງນາມຮ່ວມ | 2012 |

| ລ/ດ | ຊື່ຂອງສົນທິສັນຍາ ແລະ ຖະແຫລງການ | ຖານະພາບຕໍ່ສົນທິສັນຍາ | ຕາມລໍາດັບປີ |
|---|---|---|---|
| 4 | ຖະແຫລງການວ່າດ້ວຍ ການລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ລົບລ້າງຄວາມຮຸນແຮງຕໍ່ເດັກນ້ອຍໃນຂົງເຂດອາຊຽນ | ລົງນາມຮ່ວມ | 2013 |
| 5 | ຖະແຫລງການຂອງ ອາຊຽນ ວ່າດ້ວຍ ການຍົກລະດັບການປ້ອງກັນໃນສັງຄົມ. | ລົງນາມຮ່ວມ | 2013 |

1) **ລັດຖະທໍາມະນູນສປປລາວ (1991 ແລະ 2003):**

ພົນລະເມືອງລາວທຸກຊົນເຜົ່າ ທຸກຄົນ ມີສິດເທົ່າທຽມກັນ ໃນທາງສັງຄົມ, ການເມືອງ, ເສດຖະກິດ ແລະ ກົດໝາຍ.

ມາດຕາ 8 "ທຸກກຸ່ມຊົນເຜົ່າ ມີສິດທິ ຮັກສາຮີດຄອງປະເພນີ ແລະ ວັດທະນະທໍາຂອງຕົນ, ແລະ ຂອງຊາດ. ການຈໍາແນກ ລະຫວ່າງ ກຸ່ມຊົນເຜົ່າ ແມ່ນສິ່ງຕ້ອງຫ້າມ. (ຜິດກົດໝາຍ).

2) **ອອກກົດໝາຍ** :

ກົດໝາຍ ວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ພະຈິກ 2004, (ສິດເທົ່າທຽມກັນ ຂອງແມ່ຍິງ ຕໍ່ທີ່ດິນ ແລະ ກໍາມະສິດ, ແລະ ສິດທິ ໄດ້ຮັບຄ່າຈ້າງເທົ່າທຽມກັບຜູ້ຊາຍຕໍ່ວຽກທີ່ເທົ່າທຽມກັນ).

ດໍາລັດ ວ່າດ້ວຍການ ພັດທະນາຊົນນະບົດ ແລະ ການຫລຸດຜ່ອນຄວາມທຸກຍາກ (ນຍ/201) ກ່າວເຖິງ ສິດສະເໝີພາບ ຍິງ-ຊາຍ ທີ່ເປັນມາດຖານຂອງການພັດທະນາ.

3) **ສ້າງຕັ້ງ ອົງການຈັດຕັ້ງຕ່າງໆ** :

- ຄະນະກໍາມະການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງ ແມ່ຍິງ
- ສະຫະພັນແມ່ຍິງລາວ (ສູນໃຫ້ຄໍາປຶກແມ່ຍິງທີ່ປະສົບກັບຄວາມຮຸນແຮງ, ຄະນະກໍາມະການແຫ່ງຊາດຕ້ານການຄ້າມະນຸດ)
- ສະຫະພັນກໍາມະບານ

4) **ອອກນະໂຍບາຍຕ່າງໆ** :

- ແຜນການຫ້າປີ ສໍາລັບ ການພັດທະນາ ເສດຖະກິດ-ສັງຄົມ (NSEDP).

- ສິດສະເໝີພາບ ຍິງ-ຊາຍ : ໃນຂະແໜງການ ສາທາລະນະສຸກ, ການສຶກສາ, ການຝຶກອົບຮົມວິຊາຊີບ, ການໃຊ້ແຮງງານ, ແລະ ໃນການເມືອງ (ການບໍລິການຂອງສັງຄົມ ແລະ ສະພາແຫ່ງຊາດ)
- ແຜນການພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ (2011 – 2015) (NRDPEP) ກ່າວວ່າ ທຸກກຸ່ມຊົນເຜົ່າທົ່ວປະເທດຕ້ອງມີສ່ວນຮ່ວມໃນການພັດທະນາຊົນນະບົດ ແລະ ການຫລຸດຜ່ອນຄວາມທຸກຍາກ.

5) ***ຄຳເຫັ ນົວ ທ້າຍຂອງກຳມະກາ*** ວ່າດ້ວຍກາ ລົບລ້າງກາ ຈຳແ ກຕໍ່ແມ່ຍິງຂອງລັດຖະບານ ສປປ ລາວ ໃນປີ 2009 (ຂໍ້ 44 ແລະ ຂໍ້ 45; ກອງປະຊຸມສະໄໝທີ່ 44,30 ກໍລະກົດ - 7 ສິງຫາ 2009).

## ຂໍ້44. ແມ່ຍິງຊົ ະບົດ

8. ຄະ ະກຳມະກາ ຮັບຮູ້ ແຜ ງາ ຫຼຸດຜ່ອ ຄວາມທຸກຍາກ, ກາ ສ້າງຕັ້ງ ຄະນະກຳມະກາ ຄຸ້ມຄອງກາ ພັດທະ າຊົ ະບົດ ແລະ ລົບລ້າງຄວາມທຸກຍາກແຫ່ງຊາດ, ໂຄງກາ ພັດທະ າ, ແຜ ງາ ແລະ ມາດຕາກາ ຕ່າງໆ ຊຶ່ງໄດ້ຮັບກາ ລິເລີ່ມ ໂດຍລັດພາຄີ, ລວມທັງ ຢູ່ໃ ເຂດຊົ ະບົດ ແລະ ຫ່າງໄກສອກຫຼີກ, ແລະ ໂຄງກາ ອອກໃບຕາດິ ໄລຍະ 1 ແລະ 2. ຢ່າງໃດກໍ່ຕາມ, ຄະ ະກຳມະກາ ສະແດງຄວາມເປັ ຫ່ວງ ອັ ຮ້າຍແຮງຂອງຕົ ຕໍ່ຖາ ະທີ່ເສຍປຽບ ຂອງແມ່ຍິງ ຢູ່ໃ ເຂດຊົ ະບົດ ແລະ ຫ່າງໄກສອກຫຼີກ ທີ່ປະກອບເປັ ຊັດສ່ວ ໃຫຍ່ ຂອງແມ່ຍິງ ຢູ່ສປປ ລາວ, ຊຶ່ງສະແດງໃຫ້ເຫັ ໂດຍຄວາມທຸກຍາກ, ຄວາມກືກໜັງສື, ຄວາມຫຍຸ້ງຍາກຕ່າງໆ ໃ ກາ ເຂົ້າຫາກາ ປິ່ນປົວ ສຸຂະພາບ, ການສຶກສາ ແລະ ກາ ບໍລິກາ ສັງຄົມ, ແລະ ກາ ເຂົ້າຮ່ວມ ທີ່ບໍ່ທັ ພຽງພໍ ໃ ຂະບວ ກາ ຕັດສິ ບັ ຫາ ໃ ລະດັບຊຸມຊົ , ລວມທັງສະພາບ້າ . ຄຽງຄູ່ກັນນີ້ ກໍ່ຍັງມີຄວາມເປັ ຫ່ວງວ່າ ໂຄງກາ ພັດທະ າຕ່າງໆ ອາດຈະບໍ່ລວມເອົາ ທັດສະ ະກ່ຽວກັບເພດເຂົ້າ ສະເໝີໄປ ກໍ່ເປັ ໄດ້. ຄະ ະກຳມະກາ ຍັງມີຄວາມເປັ ຫ່ວງຕື່ມວ່າ ຮີດເກົ່າຄອງເດີມ ກ່ຽວກັບ ເພດຍິງ ຍັງຄົງແຜ່ຂະຫຍາຍ ຢ່າງກວ້າງຂວາງ ໃ ຊຸມຊົ ຊົ ະບົດຕ່າງໆ. .......ແລະ ເປັ ຫ່ວງວ່າ ບັ ດາໂຄງກາ ລົງທຶ ຂອງຕ່າງປະເທດ ອາດຈະມີຜົ ກະທົບທາງລົບຕໍ່ສະພາບແມ່ຍິງຊົ ະບົດ ກໍ່ເປັ ໄດ້.
9. ຄະ ະກຳມະກາ ສະເໜີໃຫ້ ລັດພາຄີ ດຳເ ີ ມາດຕາກາ ອັ ຈຳເປັນ ເພື່ອເພີ່ມ ແລະ ເສີມຂະຫຍາຍກາ ເຂົ້າຮ່ວມຂອງແມ່ຍິງ ໃ ກາ ອອກແບບ ແລະ ຈັດຕັ້ງ ປະຕິບັດແຜ ກາ ພັດທະ າທ້ອງຖິ່ນ, ແລະ ເອົາໃຈໃສ່ ເປັ ພິເສດ ຕໍ່ຄວາມຕ້ອງກາ ຂອງແມ່ຍິງຊົ ະບົດ ໂດຍຮັບປະກັ ໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມ ໃ ຂະບວ ກາ ຕັດສິ ບັ ຫາ ແລະ ມີຄວາມສາມາດດີຂຶ້ນ ໃ ກາ ເຂົ້າຫາ, ເປັ ຕົ້ ແມ່ ກາ ປິ່ນປົວສຸຂະພາບ, ກາ ສຶກສາ ແລະ ກາ ບໍລິກາ ສັງຄົມ. ຍິ່ງກວ່ານັ້ນ, ລັດພາຄີ ຄວ ຮັບປະກັ ໃຫ້ ໂຄງກາ ພັດທະ າຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດ ກໍ່ຕໍ່ເມື່ອ ກາ ປະເມີ ຜົ ກະທົບທາງເພດ ກ່ຽວກັບ ແມ່ຍິງຊົ ະບົດ ໄດ້ຮັບກາ ດຳເ ີ ຢ່າງສຳເລັດຜົ ເທົ່ານັ້ນ.....ຄະ ະກຳມະກາ

ສະເໜີໃຫ້ ລັດພາຄີ ເອົາຜົ ສຳເລັດ ຂອງກາ ປະຕິບັດແບບສ້າງສັ ຂອງລັດຖະບາ ແລະ ສະຖິຕິ ຮອບດ້າ ກ່ຽວກັບ ສະພາບຂອງແມ່ຍິງຊີ ະບົດໃ ທຸກຂົງເຂດ ທີ່ກ່ຽວຂ້ອງກັບສິ ທີສັ ຍາ ເຂົ້າໃ ບົດ ລາຍງາ ສະບັບຕໍ່ໄປຂອງຕົ .

## ❖ ວິທີການສອນພາກທີ 1



1) ສົນທະນາກຸ່ມໃຫຍ່ກ່ຽວກັບ ການສະໜັບສະໜຸນນະໂຍບາຍຕ່າງໆ, ການຊ່ວຍເຫລືອ ຈາກບັນຫາໂຄງການ, ຫ້ອງການ ເພື່ອສົ່ງເສີມສິດສະເໝີພາບຍິງ-ຊາຍ, ຊົນເຜົ່າ, ຜູ້ດ້ອຍໂອກາດ ແລະ ຜູ້ທຸກຍາກພາຍໃນບ້ານ, ກຸ່ມບ້ານ ແລະ ເມືອງ. ໃຊ້ເວລາ ປະມານ 30ນາທີ
2) ນຳສະເໜີທິດສະດີໃນພາກນີ້ໃສ່ Power Point ຫລື ເຈ້ຍແຜ່ນໃຫຍ່; ພ້ອມທັງແຈກຢາຍເອກະສານ,
3) ສົມທຽບທິດສະດີນີ້ໃສ່ນະໂຍບາຍ ແລະ ວິທີການທີ່ ທລຍ ກຳລັງຈັດຕັ້ງປະຕິບັດຢູ່ເຊັ່ນ:
   1. ການພັດທະນາໃນຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ທີ່ລົງໄປຈັດກອງປະຊຸມວາງແຜນແຕ່ລະຄຸ້ມບ້ານ, ແບ່ງກຸ່ມຍິງຊາຍ , ແບ່ງກຸ່ມຊົນເຜົ່າຖ້າຈຳເປັນ, ໃຊ້ພາສາຊົນເຜົ່າໃນການສົນທະນາ, ໃຫ້ຕົວແທນຊຸມຊົນຄືປະສານງານກຸ່ມບ້ານເປັນຜູ້ອຳນວຍຄວາມສະດວກໃນເວລາປະຊຸມ.
   2. ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ເຊັ່ນ: ຈຳນວນໂຕເລກແມ່ຍິງເຂົ້າຮ່ວມກອງປະຊຸມ, 3 ບູລິມະສິດທຳອິດແມ່ນມາຈາກກຸ່ມຍິງ.....
   3. ການສົ່ງເສີມແມ່ຍິງມາເປັນຄະນະທີມງານຕ່າງໆຂັ້ນບ້ານ ແລະ ກຸ່ມບ້ານ ໃນວຽກງານ ທລຍ ໃຫ້ຫລາຍກວ່າແຕ່ກ່ອນ,
   4. ນຳຮູບພາບການຈັດກອງປະຊຸມ ແລະ ຮູບພາແມ່ຍິງນຳສະເໜີ ຫລື ປະສານງານກຸ່ມບ້ານຍິງ, ການເງິນ ທີມງານຈັດຕັ້ງປະຕິບັດທີ່ເປັນຕົວແບບມາສະແດງໃຫ້ຜູ້ເຂົ້າຮ່ວມເຫັນ.

## ❖ ອຸປະກອນ:



1) Power point ;
2) ເຈ້ຍແຜນໃຫຍ່;
3) ເຝີດ 2 ຫົວ;
4) ຮູບພາບ
5) ກະດານຂາວ.

# ພາກທີ II

# ເພດ, ບົດບາດ ແລະ ສິດສະເໝີພາບລະຫວ່າງຍິງ-ຊາຍ

## ບົດທີ 1:

## ເພດ ແລະ ບົດບາດ ຫລື ສິດທິຂອງຍິ ແລະ ຊາຍ

### 1) ຄໍາວ່າ "sex" ຫລືເພດ

ໃນທິດສະດີຄໍາວ່າ Sex **ຫລື ເພດ** ໝາຍເຖິງຄວາມແຕກຕ່າງທາງລັກສະນະຮ່າງກາຍລະຫວ່າງຍິງ-ຊາຍ[1], ເປັນສິ່ງທີ່ທໍາມະຊາດສ້າງຂຶ້ນມາ.

### 2) ຄໍາວ່າ "Gender" ຫລື ບົດບາດ

**ບົດບາດ/ສິດທິຂອງຍິງຊາຍ** ໝາຍເຖິງ ສິ່ງທີ່ສັງຄົມສ້າງຂຶ້ນເປັນເອກະລັກໃນຕົວຕົນ (ອັດຕະລັກ), ເປັນຄຸນສົມບັດ ແລະ ເປັນບົດບາດ ສະເພາະ **ຍິງ-ຊາຍ** ແລະ ໃຫ້ຄວາມສໍາຄັນທາງສັງຄົມ ແລະ ທາງວັດທະນະທໍາ ແບບແຕກຕ່າງກັນຕໍ່ຮ່າງກາຍຂອງ **ຍິງ ແລະ ຊາຍ**, ເຊິ່ງມັນສົ່ງຜົນໃຫ້ເກີດເປັນສາຍພົວພັນປົກຄອງກັນແບບເລື່ອມລໍ້າຕໍ່າສູງ ເປັນລໍາດັບຊັ້ນລະຫວ່າງ **ຍິງ-ຊາຍ** ແລະ ເກີດເປັນການກະຈາຍອໍານາດທີ່ໃຫ້ສິດທິ ທີ່ເອື້ອອໍານວຍແກ່ຜູ້ຊາຍຫລາຍກວ່າ ແລະ ສ້າງຂໍ້ເສຍປຽບໃຫ້ແມ່ຍິງຫລາຍກວ່າ.

**ການ**ສ້າງຕໍາແໜ່ງໃນສັງຄົມໃຫ້ສະເພາະ **ຍິງ** ແລະ ສະເພາະ **ຊາຍ** ປະກົດຕົວຂຶ້ນດ້ວຍການກະທົບໃສ່ຂອງປັດໃຈທາງການເມືອງ, ເສດຖະກິດ,ວັດທະນະທໍາ, ສັງຄົມ, ສາສະໜາ, ອຸດົມການ ແລະ ສິ່ງແວດລ້ອມຊຶ່ງມັນກໍ່ສາມາດປ່ຽນແປງໄດ້ ໂດຍອີງຕາມປັດໃຈດັ່ງກ່າວນັ້ນ.

### 3) ສັງລວມຫຍໍ້:

ຄວາມແຕ່ກຕ່າງ ລະຫວ່າງ ເພດ ແລະ ບົດບາດ ຫລື ສິດທິຂອງແມ່ຍິງ ແລະ ຜູ້ຊາຍໃນສັງຄົມ.

---

[1] ຂໍ້ແນະນໍາລວມທົ່ວໄປ ຂອງຄະນະກໍາມະການ ສົນທິສັນຍາສາກົນ ວ່າດ້ວຍການລຶບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ (ຊີດໍ) ເລກທີ 28 ຂໍ້ 5;

<u>ຕາຕະລາງທີ 3: </u>ຄວາມແຕກຕ່າງ ລະຫວ່າງ ເພດ ແລະ ບົດບາດ/ສິດທິຂອງຍິງ, ຊາຍ

| ເພດ (Sex) | ບົດບາດຍິງ-ຊາຍ (Gender) |
|---|---|
| ທຳມະຊາດເປັນຜູ້ສ້າງຂຶ້ນ<br>ເປັນມາແຕ່ເກີດ/ແຕ່ກຳເນີດ<br>ຄືກັນໝົດໃນທົ່ວໂລກ<br>ບໍ່ສາມາດປ່ຽນແປງໄດ້ | ສັງຄົມ ແລະ ວັດທະນະທຳເປັນຜູ້ສ້າງຂຶ້ນ;<br>ຖືກສ້າງໃຫ້ເປັນແບບນີ້-ແບບນີ້ ໂດຍການອົບລົມສັ່ງສອນໂດຍກົງ ແລະ ຈາກສະພາບແວດລ້ອມ;<br>ແຕກຕ່າງກັນຕາມແຕ່ລະບ່ອນ, ແຕ່ລະສັງຄົມ, ແຕ່ລະຊົນເຜົ່າ;<br>ສາມາດປ່ຽນແປງໄດ້. |

**4) ຂໍ້ຄວນຄຳນຶງ:**

- **<u>ບໍ່ຄວນພິຈາລະນາ ຄິດແບບຕາຍຕົວຢ່າງດຽວ ຕໍ່ຍິງ, ຕໍ່ຊາຍ (Do not Stereotype Gender) ຕົວຢ່າງ</u>:**

  ຄິດແບບຕາຍຕົວວ່າ: ແມ່ຍິງບໍ່ກ້າຕັດສິນໃຈ, ແມ່ຍິງເຮັດວຽກໜັກບໍ່ໄດ້ ແຕ່ໃນຄວາມເປັນຈິງມັນບໍ່ແມ່ນເປັນແບບນັ້ນທຸກຄົນ, ໃນສັງຄົມ ມີແມ່ຍິງທີ່ກ້າຕັດສິນໃຈ ແລະ ມີຜູ້ຊາຍທີ່ບໍ່ກ້າຕັດສິນໃຈ, ມີແມ່ຍິງທີ່ເຮັດວຽກໜັກໄດ້ ແລະ ມີແມ່ຍິງທີ່ເຮັດວຽກໜັກບໍ່ໄດ້, ບໍ່ແມ່ນຜູ້ຊາຍທຸກຄົນກ້າຕັດສິນໃຈ, ມັນເປັນສະເພາະບຸກຄົນ, ບໍ່ແມ່ນເປັນສະເພາະເພດ.

- <u>ບໍ່ຄວນ**ຈຳແນກ ດ້ວຍເຫດຜົນ ຍ້ອນວ່າເປັນເພດຍິງ ຫລື ເພດຊາຍ,**</u> ລວມທັງການເຮັດວຽກມັນບໍ່ມີວຽກແມ່ຍິງວຽກຜູ້ຊາຍ, ທຸກວຽກ ແມ່ນວຽກທີ່ມະນຸດເຮັດ, ຄົນໃດເຮັດກໍໄດ້ ອີງຕາມເຫື່ອແຮງ ແລະ ຄວາມສາມາດຂອງແຕ່ລະຄົນ.

  ແນວຄິດແບບເດີມໆຄິດວ່າ <u>ວຽກໜັກ ແມ່ນວຽກຜູ້ຊາຍ (ວຽກໃຫ່ຍ) ວຽກເບົາແມ່ນວຽກແມ່ຍິງ (ແມ່ຍິງເຮັດວຽກເອກະສານໃນຫ້ອງການ, ຜູ້ຊາຍເຮັດວຽກກໍ່ສ້າງໃນສະໜາມ)</u>. **ຄວນຫລີກລ້ຽງການພິຈາລະນາແບບນັ້ນ**, ແຕ່ພິຈາລະນາວ່າ ເຮັດວຽກໃດແລ້ວມັນເຮັດໃຫ້ສູນເສຍສຸຂະພາບຫລາຍກວ່າ, ວຽກນັ້ນ ແມ່ນວຽກໜັກກວ່າ.



### 5) ຂໍ້ສັງເກດກ່ຽວກັບ ການປ່ຽນແປງທາງເພດ:

ສະຖານະພາບທາງເພດ ກໍ່ຄືເພດເຄົ້າເປັນສິ່ງທີ່ຕິດຕົວເຮົາມາແຕ່ກຳເນີດ ຊຶ່ງເອີ້ນກັນວ່າ **"ເພດເຄົ້າ"**, ສະຖານະພາບທາງເພດກໍ່ອາດບໍ່ແມ່ນປັດໃຈກຳນົດຄວາມເປັນຍິງ ຄວາມເປັນຊາຍໄດ້ຢ່າງແທ້ຈິງ, ທັງໝົດທັງມວນແມ່ນເນື່ອງຈາກບຸກຄົນ ບາງຄົນ/ບາງກຸ່ມ ອາດເກີດມີການປ່ຽນແປງທາງເພດ ຊຶ່ງເອີ້ນກັນວ່າ **"ເພດເກີດ".**

ການປ່ຽນແປງທາງເພດ (**Sexual Deviations**) ແມ່ນກຸ່ມຄົນທີ່ມີພຶດຕິກຳທາງເພດຜິດປົກກະຕິ ຊຶ່ງເກີດຈາກການປ່ຽນແປງຂອງຮໍໂມນໃນຮ່າງກາຍ ທີ່ອາດມີສາຍເຫດມາຈາກປັດໃຈທາງດ້ານສັງຄົມ, ສິ່ງແວດລ້ອມ ແລະ ເສດຖະກິດ. ກຸ່ມຄົນທີ່ມີພຶດຕິກຳທາງເພດຜິດປົກກະຕິ ແບ່ງອອກເປັນ 3 ປະເພດຄື:

1. **ກຸ່ມປະຕິເສດເພດ** (Transexual):

   ແມ່ນກຸ່ມຄົນທີ່ບໍ່ຍອມຮັບ ຫລື ປະຕິເສດເພດເກີດຂອງຕົນເອງ ສ່ວນໃຫຍ່ແມ່ນມັກເກີດຂຶ້ນກັບເພດຊາຍ ໂດຍຊາຍເຫລົ່ານີ້ຈະມີລັກສະນະທ່າທາງສະແດງອອກຄືແມ່ຍິງ ແລະ ກໍ່ມັກແຕ່ງກາຍເປັນຍິງ, ຖ້າແມ່ຍິງກໍ່ມັກແຕ່ງກາຍເປັນຊາຍ.

2. **ຮັກຮ່ວມເພດ** (Homosexual):

   ແມ່ນກຸ່ມຄົນທີ່ມີຄວາມເພິ່ງພໍໃຈທີ່ຈະມີເພດສຳພັນກັບເພດດຽວກັນ ເຊັ່ນ: ຊາຍມີເພດສຳພັນກັບຊາຍ, ຍິງມີເພດສຳພັນກັບຍິງ.

   ກ. **ຊາຍຮັກຊາຍ ຫລື ເກ** (Gay): **ເກ** ແບ່ງອອກເປັນ 2 ປະເພດຄື: **ເກຄິງ** ໝາຍເຖິງຜູ້ທີ່ສະແດງບົດບາດທາງເພດເປັນຊາຍ ຫລື **ຝ່າຍກະທຳ**ເມື່ອມີເພດສຳພັນ, ສ່ວນອີກປະເພດນຶ່ງແມ່ນ **ເກ ຄວີນ** ໝາຍເຖິງຜູ້ທີ່ສະແດງບົດບາດທາງເພດເປັນຍິງ ຫລື **ຝ່າຍຖືກກະທຳ** ເມື່ອມີເພດສຳພັນ.

   ຂ. **ຍິງຮັກຍິງ** (Lesbian): ຄົນລວມມັກຮອງກັນວ່າ ທອມ, ທອມມີ 2 ປະເພດຄື: **ທອມ** ທີ່ສະແດງອອກພາຍນອກມີລັກສະນະກາຍພາຍນອກເປັນຊາຍ, ສ່ວນອີກປະເພດນຶ່ງແມ່ນ " **ດີ້** " ໝາຍເຖິງ ການສະແດງອອກພາຍນອກຈະມີລັກສະນະເປັນຍິງ.

**3. ຮັກສອງເພດ (Besexuality):**

ໝາຍເຖິງ ຜູ້ທີ່ສາມາດມີເພດສຳພັນໄດ້ກັບທັງຍິງ ແລະ ຊາຍ.

<u>ຕາຕະລາງທີ 4:</u> ສັງລວມຄວາມແຕກຕ່າງລະຫວ່າງເພດເຄົ້າ ແລະ ເພດເກີດ

| ເພດ | ຍິງ | ຊາຍ | ຄວາມແຕກຕ່າງ |
|---|---|---|---|
| ເພດເຄົ້າ | ແມ່ພັນ | ພໍ່ພັນ | ເປັນມາແຕ່ກຳເນີດ |
| ເພດເກີດ | - ແຕ່ງກາຍເປັນຊາຍ(ທອມ);<br>- ແຕ່ງກາຍເປັນຍິງ (ດີ້)<br>- ມີເພດສຳພັນກັບເພດດຽວກັນ;<br>- ມີເພດສຳພັນໄດ້ກັບທັງເພດຍິງ ແລະ ເພດຊາຍ. | - ຊາຍແຕ່ງກາຍເປັນຍິງ (ກະເທີຍ);<br>- ຮ່ວມເພດດຽວກັນ (ເກ-ຝ່າຍກະທຳ);<br>- ຮ່ວມເພດດຽວກັນ (ເກ-ຝ່າຍຖືກກະທຳ);<br>- ຮ່ວມເພດໄດ້ທັງຍິງ ແລະ ຊາຍ). | ເພດເກີດ ແມ່ນ ເກີດຈາກການປຸງນ ແປງທາງດ້ານ:<br>1. ຮໍໂມນໃນຮ່າງກາຍ;<br>2. ສັງຄົມ ແລະ ສິ່ງແວດລ້ອມ;<br>3. ເສດຖະກິດ. |

6) ຮູບພາບປະກອບການຄົ້ນຄ້ວາກ່ຽວກັບ ເພດ ແລະ ບົດບາດ/ສິດທິຂອງຍິງ,ຊາຍ

ຮູບພາບທີ 1 : ສະແດງເຖິງເພດ ເພາະເປັນສິ່ງທີ່ໄດ້ມາແຕ່ກຳເນີດ ບອກວ່າເປັນຍິງ ຫລື ຊາຍ ໂດຍເບິ່ງຈາກອະໄວຍະວະເພດ



**ຮູບພາບທີ 2:** ສະແດງໃຫ້ເຫັນເຖິງບົດບາດ ຄື: ຜູ້ຊາຍຕັດຜົມສັ້ນ ໃສ່ເຄື່ອງສີບົວ, ນຸ່ງສົ້ງ; ຜູ້ຍິງຈົ່ງຜົມຍາວໃສ່ເຄື່ອງສີບົວ, ນຸ່ງສິ້ນ ຫລື ກະໂປ່ງ.



**7) ສິດທິມະນຸດ.**

5.1 ຫຼັກການພື້ນຖານຂອງສິດທິມະນຸດ:[2]

1. ສິດທິມະນຸດ ເປັນສິດທິຂອງທຸກຄົນທີ່ຕິດຕົວມາຕັ້ງແຕ່ເກີດ;
2. ມະນຸດທຸກຄົນມີກຽດສັກສີຂອງຄວາມເປັນຄົນເທົ່າທຽມກັ  ແລະ ມີຄວາມສະເໝີພາບກັ ;
3. ສິດທິມະນຸດ ເປັນສິດທິພື້ນຖານທີ່ທຸກຄົນຕ້ອງມີ ແລະ ບໍ່ສາມາດປ່ຽນແທນກັນໄດ້;
4. ສິດທິມະ ຸດ ບໍ່ຖືກຈຳກັດດ້ວຍເຂດແດ , ເຊື້ອຊາດ, ສາສະໜາ ແລະ ວັດທະນະທຳ;
5. ສິດທິມະ ຸດ ເປັ ເອກະພາບ, ທຸກໆສິດລ້ວ ແຕ່ມີຄວາມສຳຄັ ໂດຍບໍ່ຈຳແ ກຖາ ະທາງ ດ້າ ກາ ເມືອງ ຫຼື ເສດຖະກິດສຳຄັ ກວ່າ;
6. ສິດທິມະ ຸດໄດ້ກຳ ົດໄວ້ໃ ລັດຖະທຳມະ ູ ແລະ ກົດໝາຍພາຍໃ ປະເທດ ແລະ ສາກົ ;

[2] ຂໍ້ມູນ "ຫລັກການພື້ນຖານຂອງສິດທິມະນຸດ" ໄດ້ມາຈາກບົດນຳສະເໜີຂອງທ່ານ ນາງ ດຣ. ຈອມຄຳ ບຸບຜາລີວັນ ຫົວໜ້າສະຖາບັນອົບຮົມກົດໝາຍ ແລະ ວຽກງານຍຸຕິທຳ. ວັນທີ 3 ກັນຍາ 2014

7. ລັດຕ້ອງເຄົາລົບ, ປົກປ້ອງ ແລະ ອຳນວຍເງື່ອນໄຂໃຫ້ທຸກຄົນໄດ້ເຂົ້າເຖິງ, ໄດ້ຊົມໃຊ້ສິດທິພື້ນຖານ ແລະ ລັດບໍ່ສາມາດລະເມີດໄດ້.

5.2 ສິດທິມະນຸດ ຂັ້ນພື້ນຖານອັນຈຳເປັນ :

1. ສິດທິ ໃນການມີຊີວິດ
2. ສິດທິ ໃນການບໍ່ຖືກຈຳແນກ
3. ສິດທິ ໃນການມີທີ່ຢູ່ອາໃສ
4. ສິດທິ ໃນການຮັກສາສຸຂະພາບ
5. ສິດທິ ໃນການມີວຽກເຮັດງານທຳ
6. ສິດທິ ໃນການສຶກສາ
7. ສິດທິ ໃນການດຳລົງຊີວິດຕາມມາດຖານ ທີ່ເໝາະສົມ

5.3 ອິດສະຫລະພາບອັນຈຳເປັນຂອງ ມະນຸດ :

1. ແຕ່ລະຄົນ ມີສິດ ທີ່ຖືກນັບຖື (ຖືກປະຕິບັດດ້ວຍຄວາມນັບຖື) ;
2. ແຕ່ລະຄົນ ມີສິດ ທີ່ຈະເວົ້າວ່າ **ບໍ່** (ສິດປະຕິເສດ) ໂດຍປັດສະຈາກການອະທິບາຍ ແລະ ປັດສະຈາກຄວາມລະອາຍໃຈ;
3. ແຕ່ລະຄົນ ມີສິດ ທີ່ຈະໃຊ້ເວລາຊ້າ ຫລື ແກ່ຍາວເວລາ ເພື່ອຄິດ;
4. ແຕ່ລະຄົນ ມີສິດ ທີ່ຈະປ່ຽນແນວຄິດຂອງຕົນ;
5. ແຕ່ລະຄົນ ມີສິດ ທີ່ຈະຂໍສິ່ງທີ່ຕົນເອງຢາກຂໍ ;
6. ແຕ່ລະຄົນມີສິດ ທີ່ຈະຂໍຂໍ້ມູນ;
7. ແຕ່ລະຄົນ ມີສິດ ທີ່ຈະຜິດພາດ;
8. ແຕ່ລະຄົນ ມີສິດ ທີ່ຈະເລືອກ ແລະ ຮັບເອົາສິ່ງເປັນຜົນມາຈາກການເລືອກ;
9. ແຕ່ລະຄົນ ມີສິດ ທີ່ຈະມີ ແລະ ສະແດງອອກ ຄວາມຮູ້ສຶກຂອງຕົນ;
10. ແຕ່ລະຄົນ ມີສິດ ທີ່ຈະຂໍໃຫ້ຊ່ວຍເຫລືອ;
11. ແຕ່ລະຄົນ ມີສິດ ທີ່ຈະແຍກຕົນເອງອອກຕ່າງຫາກ ເພື່ອເປັນອິດສະຫລະ ຈາກ ຄວາມຄາດຫວັງ, ການຍອມຮັບ/ຮັບຮູ້, ອິດທິພົນ ຂອງຄົນອື່ນ .

ລາຍລະອຽດເບິ່ງໃນ Wikipedia: http://en.wikipedia.org/wiki/Human_rights

# ບົດທີ 2:
# ສິດສະເໝີພາບ ແລະ ຄວາມທ່ຽງທຳລະຫວ່າງຍິງ-ຊາຍ

## 1. GE (Gender Equality) ສິດສະເໝີພາບ ຍິງ-ຊາຍ ໝາຍເຖິງຫຍັງ? ແລະ ສະແດງອອກແນວໃດ ?

ສິດສະເໝີພາບຍິງ-ຊາຍ ໝາຍເຖິງ ການທີ່ເພດຊາຍ ແລະ ເພດຍິງ ມີສິດທິ ແລະ ເສລີພາບໃນການສະແດງບົດບາດຂອງຕົນເອງຕໍ່ສັງຄົມໄດ້ຢ່າງເທົ່າທຽມກັນ, ບົດບາດຂອງຍິງ ແລະ ຊາຍໃນສັງຄົມເທົ່າທຽມກັນ ຍິງ ແລະ ຊາຍ ຖືກຮັບຮູ້ວ່າມີສະຖານະພາບເຊັ່ນດຽວກັນ ແລະ ໄດ້ຮັບເງື່ອນໄຂເຊັ່ນດຽວກັນ ບໍ່ມີການກີດກັ້ນທາງເພດ ເພື່ອຊົມໃຊ້ສິດທິມະນຸດຂອງເຂົາເຈົ້າ, ເພື່ອສະແດງສັກກາຍະພາບຂອງເຂົາເຈົ້າໃນທຸກຂົງເຂດການພັດທະນາຍິງ ແລະ ຊາຍ ໄດ້ຮັບຜົນປະໂຫຍດດັ່ງດຽວກັນຈາກການພັດທະນາ, ຄວາມສຳຄັນຂອງສິດສະເໝີພາບຍິງ-ຊາຍ ຈຶ່ງຂຶ້ນຢູ່ກັບຄວາມເຂົ້າໃຈໃນບົດບາດທາງເພດ.

ຄວາມສະເໝີພາບ ແລະ ການສ້າງຄວາມເຂັ້ມແຂງ ແມ່ນໄປຄຽງຄູ່ກັນ, ຖ້າແມ່ຍິງບໍ່ມີຄວາມເຂັ້ມແຂງ ຄວາມສາມາດກໍ່ຈະບໍ່ຖືກປັບປຸງ[3]. ແມ່ຍິງຈະເຂັ້ມແຂງກໍ່ຕໍ່ເມື່ອ ຜູ້ຊາຍພ້ອມທີ່ຈະໃຫ້ໂອກາດແກ່ແມ່ຍິງ ແລະ ພ້ອມທີ່ຈະປ່ຽນແປງ ໃຫ້ແມ່ຍິງມີສິດ, ມີບົດບາດ, ເຂົ້າຮ່ວມໃນທຸກຂັ້ນຕອນຂອງການພັດທະນາ ຈຶ່ງຈະເຮັດໃຫ້ແມ່ຍິງ ແລະ ຜູ້ຊາຍມີສິດສະເໝີພາບກັນ, ໄດ້ຮັບຜົນ






ປະໂຫຍດຈາກການພັດທະນາເຊັ່ນດຽວກັນ ດັ່ງ 2 ຮູບພາບທີ່ສະແດງໃຫ້ເຫັນລຸ່ມນີ້ :

ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແມ່ນຂະບວນການພັດທະນາ ແລະ ຂະບວນການປ່ຽນແປງແບບຕໍ່ເນື່ອງຍາວນານ ແລະ ເປັນກ້າວໆ ເພື່ອບັນລຸເປົ້າໝາຍໃນການສ້າງຄວາມສະເໝີພາບລະຫວ່າງຍິງ-ຊາຍເທື່ອລະກ້າວ.

---

[3]ເນື້ອໃນຈາກປຶ້ມຄູ່ມື ການຝຶກອົບຮົມຂອງອົງການ ຢູນິເຊັບ ຄວາມສະເໝີພາບ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ

## 2. GE = ຄວາມທ່ຽງທຳ ລະຫວ່າງ ຍິງຊາຍ (Gender Equity) ແມ່ນຫຍັງ?

ແມ່ນຂັ້ນຕອນ ແລະ ໝາກຜົນການປະຕິບັດຢ່າງເປັນທຳຕໍ່ຍິງຕໍ່ຊາຍ, ເຊິ່ງລວມມີການປະຕິບັດຍຸດທະສາດ ແລະ ມາດຕະການຕ່າງໆ (ລວມທັງມາດຕະການສະເພາະຊົ່ວຄາວ) ທີ່ລົບລ້າງການເອົາປຽບທາງສັງຄົມຕໍ່ແມ່ຍິງ ແລະ ເຮັດໃຫ້ແມ່ຍິງຕົກຢູ່ໃນສະພາບບໍ່ສາມາດຊົມໃຊ້ສິດທິຂອງເຂົາເຈົ້າຢ່າງເທົ່າກັບຜູ້ຊາຍ, ສະແດງໃຫ້ເຫັນດັ່ງ 2 ຮູບພາບລຸ່ມນີ້:




## 3. ສາມຫລັກການ ແລະສາມຮູບແບບ ຂອງສິດສະເໝີພາບ.

❖ <u>ສາມຫລັກການ ຂອງສິດສະເໝີພາບ (ລະບຸໃນສົນທິສັນຍາຊີດໍ)</u>

2) ສົ ທິສັ ຍາ ອະທິບາຍວ່າ ສິດສະເໝີພາບ (ຄວາມສະເໝີພາບ) ລະຫວ່າງ ຍິງ ແລະ ຊາຍ ແມ່ ແມ່ຍິງ ແລະ ຜູ້ຊາຍ ຕ້ອງ: **1). ມີໂອກາດ ຄືກັ , 2). ເຂົ້າເຖິງໄດ້ ຄືກັ , ໄດ້ຜົ ອອກ, 3). ຜົ ຮັບ ຫຼື ໄດ້ຜົ ປະໂຫຍດ ຄືກັ .**

❖ **<u>ສາມຮູບແບບຂອງ ສິດສະເໝີພາບ</u>**

1) ແບບທາງກາ ໝາຍຄວາມວ່າ ສິດສະເໝີພາບລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ ກຳ ົດໄວ້ພາຍໃຕ້ກົດໝາຍ;
2) ແບບປົກປ້ອງ ໝາຍຄວາມວ່າ ແມ່ຍິງ ຫຼື ຜູ້ຊາຍ ມີສິດສະເໝີພາບກັນ ທີ່ຈະໄດ້ສິດທິໃດໜຶ່ງສະເພາະ, ຍ້ອນວ່າເປັນ ແມ່ຍິງ, ຫຼື ຍ້ອ ວ່າ ເປັ ຜູ້ຊາຍ;
3) ແບບດັດສົມ ໝາຍຄວາມວ່າ ມີກາ ດັດສົມ (ດັດປັບ) ໃດໜຶ່ງ ເພື່ອໃຫ້ແມ່ຍິງມີສິດທິເທົ່າທຽມກັບຜູ້ຊາຍໄດ້ແທ້ໆໃ ຕົວຈິງຂອງແຕ່ລະເລື້ອງ (ແຕ່ລະເນື້ອຫາ).

- **ການກຳນົດສິດສະເໝີພາບລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ**

1) ມັນເປັນການຍາກໃນການກຳນົດວ່າອັນໃດແມ່ນໄດ້ສິດທິຄືກັນ ແລະ ໄດ້ສິດທິຕ່າງກັນ;

2) ແມ່ຍິງ ແມ່ນຄົນຄືກັນກັບຜູ້ຊາຍ ໄດ້ຮັບການປະຕິບັດສິດທິມະນຸດສະຍະຊົນຄືກັນ;

ມັນຈຳເປັນຕ້ອງດັດສົມເພາະວ່າ ສິດສະເໝີພາບແບບທາງການ ບໍ່ສາມາດຮັບປະກັນໃຫ້ເກີດສິດສະເໝີພາບໄດ້ໃນຕົວຈິງດ້ວຍຕົວຂອງມັນເອງ ເຊັ່ນວ່າ ການໃຫ້ສິດທິ ແມ່ຍິງເທົ່າທຽມກັບຜູ້ຊາຍນັ້ນ ແຕ່ແມ່ຍິງຍັງໃຊ້ສິດນັ້ນບໍ່ໄດ້ ຍ້ອນໃນຕົວຈິງຍັງມີການຈຳແນກຕໍ່ແມ່ຍິງຢູ່ ອັນເນື່ອງມາຈາກບາງຢ່າງໃນວັດທະນະທຳທີ່ມີມາແຕ່ປະຫວັດສາດມີການເອົາປຽບແມ່ຍິງ, ແລະ ສິ່ງໃໝ່ທີ່ເກີດຂຶ້ນໃນປັດຈຸບັນທີ່ຈຳແນກແມ່ຍິງໃນແງ່ມຸມໃດໜຶ່ງຂອງຊີວິດ.



ດັ່ງນັ້ນ, ເພື່ອໃຫ້ເກີດມີສິດສະເໝີພາບທີ່ແທ້ຈິງລະຫວ່າງ ຍິງຊາຍ, ມັນຈຳເປັນຕ້ອງດັດສົມໃນການປະຕິບັດຕົວຈິງດ້ວຍການໃຊ້ມາດຕະການພິເສດຊົ່ວຄາວ / Temporary special Measures/ ລະບຸໃນມາດຕາ 4 ຂອງສົນທິສັນຍາຊີດໍ.

- **ຄວາມສະເໝີພາບສະແດງອອກໃນ 2 ດ້ານ, ດ້ານປະລິມານ ແລະດ້ານຄຸນນະພາບ**
  - ✓ **ດ້ານປະລິມານ:** ການມີສ່ວນຮ່ວມທີ່ເປັນຈຳນວນຂອງຍິງ-ຊາຍໃນວຽກງານ ແລະ ກິດຈະກຳຕ່າງໆ, ໜ້າທີ່ຕຳແໜ່ງໃນອົງການຈັດຕັ້ງ ແລະ ອື່ນໆທີ່ສາມາດສະແດງອອກເປັນຈຳນວນຕົວເລກ (ແບບແຍກເພດ) ທີ່ເທົ່າທຽມກັນ



- ✓ **ດ້ານຄຸນນະພາບ:** ໝາຍເຖິງຄວາມຮູ້, ຄວາມສາມາດຄ່ານິຍົມ, ການຍອມຮັບ, ຄວາມຄິດ ຄວາມເຫັນຂອງຍິງ-ຊາຍ. ຂໍ້ມູນທາງດ້ານຄຸນນະພາບໂດຍທົ່ວໄປແລ້ວສະແດງອອກເປັນພາສາຄວາມເວົ້າ.



ຮູບແບບທີ 1: ............................................ສິດສະເໝີພາບແບບທາງການ..................................................



ຮູບແບບທີ 2: ................................ສິດສະເໝີພາບແບບປົກປ້ອງ ແຕ່ຈຳແນກ................................



ຮູບແບບທີ 3: .................................ສິດສະເໝີພາບທີ່ແທ້ຈິງ.......................................



## ❖ ວິທີການສອນໃນພາກທີ່ II:



### ຂັ້ນຕອນທີ 1 ໃຊ້ເວລາປະມານ 1 ຊົ່ວໂມງ

- ແບ່ງຜູ້ເຂົ້າຮ່ວມອອກເປັນ 2 ກຸ່ມໃຫຍ່, ສະມາຊິກພາຍໃນກຸ່ມຈັບຄູ່ກັນ;
- ຄູຝຶກໃຫ້ຄຳຖາມແຕ່ລະຄູ່ສົນທະນາ ແລະ ສອບຖາມຕາມຄຳຖາມທີ່ມີ (ໃຫ້ເວລາແຕ່ລະຄູ່ຄົ້ນຄ້ວາ 5 ນາທີ);

ຄຳຖາມກຸ່ມ 1 :

1. ແນະນຳຊື່ ແລະ ນາມສະກຸນ, ບ່ອນເຮັດວຽກ
2. ທ່ານຄິດວ່າໃນຕົວຈິງທ່ານເປັນຜູ້ນຳ ຫລື ເປັນຜູ້ຕາມໃນຄອບຄົວ, ຍ້ອນຫຍັງ?
3. ຖ້າທ່ານຈະໄດ້ລູກ ທ່ານປາດຖະໜາຢາກໄດ້ລູກທີ່ເກີດມາ ເປັນເພດຍິງ ຫລື ເພດຊາຍ ຍ້ອນຫຍັງ?

ຄຳຖາມກຸ່ມ 2 :

1. ແນະນຳຊື່ ແລະ ນາມສະກຸນ, ບ່ອນເຮັດວຽກ
2. ທ່ານຄິດວ່າ ໃນຕົວຈິງທ່ານເປັນຜູ້ນຳ ຫລື ເປັນຜູ້ຕາມໃນຄອບຄົວ, ຍ້ອນຫຍັງ?
3. ຖ້າຊາດໜ້າມີຈິງທ່ານຢາກເກີດເປັນ ເພດຍິງ, ເພດຊາຍ ຫລື ເພດແນວໃດ, ຍ້ອນຫຍັງ?.

- ຫລັງຈາກນັ້ນແຕ່ລະຄູ່ຂຶ້ນແນະນຳຄູ່ຂອງຕົນເອງ ແລະ ຕັ້ງຄຳຖາມສຳລັບຄູ່ຂອງຕົນເອງ (ຂຶ້ນເທື່ອລະຄູ່) ;
- ຄູຝຶກບັນທຶກປະເດັນທີ່ຜູ້ເຂົ້າຮ່ວມຕອບ ແລະ ສະຫລຸບຜົນການຂຶ້ນອະທິບາຍຂອງຜູ້ເຂົ້າຮ່ວມທັງໝົດ ແລະ ຍົກເອົາແຕ່ປະເດັນທີ່ເຫັນວ່າແຕກຕ່າງກັນຢ່າງຊັດເຈນເພື່ອນຳມາປະກອບກັບທິດສະດີ;
- ຍົກທິດສະດີໃນບົດທີ 2: ຕາຕະລາງສົມທຽບເພດ ແລະ ບົດບາດ, ເພດເຄົ້າ ແລະ ເພດເກີດ), ເພດປະສົມ (ເປັນເພດທີ່ບໍ່ສົມບູນ ຫລື ສົມບູນກວ່າເພດໃດນຶ່ງ) ແລະ ທິດສະດີກ່ຽວກັບສິດທິມະນຸດ 7 ຂໍ້ ແລະ ອິດສະຫລະພາບທີ່ຈຳເປັນຂອງມະນຸດ ໃນພາກນີ້.

## ຂັ້ນຕອນທີ 2 ໃຊ້ເວລາປະມານ 1 ຊົ່ວໂມງ

- ແນະນຳໃຫ້ຜູ້ເຂົ້າຮ່ວມອ່ານທິດສະດີໃນ Power Point ກ່ຽວກັບ**ເພດ ແລະ ບົດບາດ ແລະ ການປຸ່ງແປງເພດ** (10 ນາທີ)
- ເອົາຮູບພາບເດັກນ້ອຍ ຮູບທີ່ 1 ແລະ 2-3 ມາໃຫ້ຜູ້ເຂົ້າຮ່ວມສັງເກດເບິ່ງ ແລະ ຕັ້ງຄຳຖາມສຳລັບກຸ່ມໃຫຍ່.

  <u>ຄຳຖາມ</u> :

  1. ທ່ານຄິດວ່າຮູບໃດຊີ້ໃຫ້ເຫັນເຖິງເພດຍ້ອນຫຍັງ ?

  ທ່ານຄິດວ່າຮູບໃດຊີ້ໃຫ້ເຫັນເຖິງບົດບາດ/ສິດທິຂອງຍິງ, ຊາຍ ຍ້ອນຫຍັງ ?

- ດຶງເອົາຄຳຕອບຈາກຜູ້ເຂົ້າຮ່ວມໃຫ້ໄດ້ຫລາຍກວ່າ 50% ຂອງຜູ້ເຂົ້າຮ່ວມ, ຢ່າຟ້າວໃຫ້ທິດສະດີ;
- ສັງເກດເບິ່ງວ່າ ຖ້າຄຳຕອບທີ່ໄດ້ສ່ວນຫລາຍນັ້ນຖືກຕ້ອງກັບທິດສະດີ ຄູຝຶກກໍ່ສະຫລຸບທິດສະດີ ໃຫ້ຜູ້ເຂົ້າຮ່ວມທັງໝົດຟັງຕື່ມອີກ ຫລື ໃຫ້ຜູ້ເຂົ້າຮ່ວມຜູ້ໃດໜຶ່ງອ່ານທິດສະດີຄຳວ່າເພດ ແລະ ບົດບາດໃຫ້ໝູ່ຟັງດັງໆອີກ 1 ຄັ້ງຈົນໝັ້ນໃຈວ່າທຸກຄົນມີຄວາມເຂົ້າໃຈຖືກຕ້ອງແລ້ວ.
- ຫລັງຈາກນັ້ນສາຍ VDO ເດັກນ້ອຍຜູ້ຍິງ ແລະ ເດັກນ້ອຍຜູ້ຊາຍ ໃຫ້ຜູ້ເຂົ້າຮ່ວມອະທິບາຍຄວາມເຂົ້າໃຈຂອງຕົນເອງພາຍຫັລງໄດ້ເບິ່ງ VDO 2-3 ແລ້ວ. (ບໍ່ໃຫ້ຄູຝຶກສະເຫລີຍຄຳຕອບກ່ອນ).
- ຫລັງຈາກຜູ້ເຂົ້າຮ່ວມອະທິບາຍຄວາມເຂົ້າໃຈຂອງຕົນເອງປະມານ 2-3 ຄົນແລ້ວ, ຄູຝຶກກໍ່ສາຍ VDO ຄືນໃໝ່ ແລະ ເຮັດສຽງພາກພ້ອມ.
- **ຄູຝຶກອະທິບາຍ VDO ໂດຍສົມທຽບໃສ່ທິດສະດີຄຳວ່າ ເພດ ແລະ ບົດບາດ/ສິດທິ ຂອງຍິງ, ຊາຍ. ຄຳອະທິບາຍ VDO ເດັກນ້ອຍຜູ້ຍິງ ແລະ ເດັກນ້ອຍຜູ້ຊາຍມີຄື:**
  - ເດັກນ້ອຍທັງຍິງ ແລະ ຊາຍ ເກີດຂຶ້ນມາສັງຄົມກໍ່ກຳນົດສັນຍາລັກໃຫ້ຄື: ຜູ້ຍິງສີບົວ, ຜູ້ຊາຍສີຟ້າ, ຜູ້ຍິງຜົມຍາວ, ຜູ້ຊາຍຜົມສັ້ນ (ມີຄົນທີ່ເຫັນໃນ VDO ແມ່ນສັງຄົມ);
  - ແຕ່ໃນຄວາມເປັນຈິງທັງເດັກຍິງ ແລະ ຊາຍອາດຈະບໍ່ຕ້ອງການສິ່ງທີ່ສັງຄົມກຳນົດມາໃຫ້ຄື ຍິງຕ້ອງສີບົວ ຊາຍຕ້ອງສີຟ້າ;
  - ແມ່ຍິງຕ້ອງເປັນແມ່ບ້ານຢູ່ເຮືອນຢ່າງດຽວບໍ່ອອກໄປໃສ ແລະ ຍົກສູງໃຫ້ຜູ້ຊາຍໄດ້ມີໂອກາດໄປຮຳຮຽນ, ອອກໄປເຮັດວຽກນອກບ້ານ ແລະ ມີຖານະເໜືອກວ່າເພດຍິງ

ແຕ່ບາງຄັ້ງທັງຍິງ ແລະ ຊາຍເຂົາເຈົ້າ ກໍ່ບໍ່ຕ້ອງການໃຫ້ເປັນເປັນໃນແບບທີ່ສັງຄົມກຳນົດໃຫ້ຄືແນວນັ້ນ;

– ສັງຄົມໄດ້ສ້າງຮີດຄອງປະເພນີໄວ້ ແນວນັ້ນ ແລະ ເຮັດໃຫ້ເຂົາເຈົ້າຍຶດຕິດຢູ່ກັບຮີດຄອງປະເພນີອັນນັ້ນ ໂດຍທີ່ເຂົາເຈົ້າກໍ່ບໍ່ຕ້ອງການ;
– VDO ຄືຄວາມເປັນຈິງທີ່ມີໃນສັງຄົມມາດົນນານ ແລະ ນີ້ຄືຄວາມບໍ່ທ່ຽງທຳ ແລະ ບໍ່ມີຄວາມສະເໝີພາບກັນຂອງຍິງ ແລະ ຊາຍໃນສັງຄົມ.

- ຄູຝຶກອະທິບາຍທິດສະດີສິດທິມະນຸດເພີ່ມອີກ ເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈວ່າ ບໍ່ວ່າຍິງຫລືຊາຍ, ຊົນເຜົ່າ, ຜູ້ທຸກຍາກ, ຄົນພິການ ຫລື ສັງຄົມອັນໃດກໍ່ຕາມທັງຍິງ ແລະ ຊາຍ ແມ່ນມີສິດທິມະນຸດຄືກັນ ແລະ ມີອິດສະຫລະພາບຂອງການເປັນມະນຸດຄືກັນ.

## ຂັ້ນຕອນທີ 3 ໃຊ້ເວລາປະມານ 1.5-2 ຊົ່ວໂມງ

- ຕິດ 3 ຮູບພາບ ກ່ຽວກັບ ສັດກິນອາຫານທີ່ມີຢູ່ໃນບົດທີ 2ຂອງພາກນີ້, ຕິດໃສ່ຝາ 2-3 ຈຸດ ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດສັງເກດເຫັນ ແລະ ສາມາດອະທິບາຍໄດ້ຢ່າງຫລາກຫລາຍ,
- ຢາຍເຈ້ຍໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ 4 ໃບ (ເຈ້ຍສີ 4 ສີຍິ່ງເໝາະສົມ)
- ໃຫ້ຄຳຖາມແກ່ຜູ້ເຂົ້າຮ່ວມ 3 ຄຳຖາມຄື:

1. ຮູບແຕ່ລະອັນມີຄວາມໝາຍຫຍັງແນ່, ອະທິບາຍ?
2. ທ່ານມັກຮູບໃດຫລາຍກວ່າ ໃນ 3 ຮູບນັ້ນ? ຍ້ອນຫຍັງ? (ຕອບຕາມແຕ່ລະທ່ານເຂົ້າໃຈ)

- ຫລັງຈາກນັ້ນອະທິບາຍວິທີການຕອບໃຫ້ແກ່ຜູ້ເຂົ້າຮ່ວມຄື : ຂຽນເລກຮູບຢອງໃສ່ເຈ້ຍ (1, 2, 3) ແລະ ອະທິບາຍຄວາມໝາຍຂອງແຕ່ລະຮູບພາບໃສ່ເຈ້ຍຂອງໃຜລາວ (ອະທິບາຍທຸກຮູບ ແລະ ເຮັດຄືກັນໝົດທຸກຄົນ), ຂຽນເລກ (ເບີ) ຮູບທີ່ທ່ານມັກ (ຂຽນຕົວໃຫຍ່) ໃນເຈ້ຍໃບທີ່ 4,
- ຄົ້ນຄ້ວາກຸ່ມໃຫຍ່ເລີຍ ໃຊ້ເວລາປະມານ 40 ນາທີ ;
- ຫລັງຈາກສຳເລັດແລ້ວຄູຝຶກສະເໜີໃຫ້ຜູ້ເຂົ້າຮ່ວມຂຶ້ນອະທິບາຍແຕ່ລະຄຳຕອບຂອງຕົນເອງເທື່ອລະຄົນ ແລະ ຕິດຄຳຕອບຂອງຕົນເອງໃສ່ກະດານ (ຄູຝຶກຢ່າຟ້າວສະເຫລີຍຄຳຕອບ) ແຕ່ຕ້ອງບັນທຶກສິ່ງທີ່ຜູ້ເຂົ້າຮ່ວມອະທິບາຍ ແລະ ຖາມຄືນເພື່ອຄວາມແນ່ໃຈ;
- ຍົກຄຳຕອບຂອງຜູ້ເຂົ້າຮ່ວມສົມທຽບໃສ່ການຈັດຕັ້ງປະຕິບັດວຽກງານ ທລຍ ຂອງເຂົາເຈົ້າໃນໄລຍະຜ່ານມາ (ໄດ້ພົບປະຜູ້ດ້ອຍໂອກາດບໍ່, ທຸກຄົນໄດ້ຮັບຜົນປະໂຫຍດແນວໃດ ?.....)

- ທຸກຄົນຂຶ້ນໝົດແລ້ວ ຄູຝຶກສະຫລຸບຜົນການຄົ້ນຄ້ວາ ແລະ ຍົກທິດສະດີສາມຫລັກການ ແລະ ສາມຮູບແບບຂອງສິດສະເໝີພາບ ໃນບົດທີ 3 ພາກທີ I, ສິດທິມະນຸດໃນພາກທີ III ແລະ ທິດສະດີການພັດທະນາແບບມີສ່ວນຮ່ວມ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດຢູ່ພາກທີ II ເພື່ອປະກອບໃສ່ ;
- ຮູບທີ່ຊີ້ໃຫ້ເຫັນເຖິງສິດສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມຄືຮູບທີ 3 ຊຶ່ງປະກອບດ້ວຍ 3 ຫລັກການຂອງສິດສະເໝີພາບ ແລະ ຮູບແບບດັດສົມຂອງສິດສະເໝີພາບ.

## ❖ ອຸປະກອນຮັບໃຊ້ໃນພາກທີ່ II:



- ສາມຮູບພາບຂອງ (ຮູບເດັກນ້ອຍ);
- Power point ສຳລັບສະຫລຸບໃຫ້ເຫັນທິດສະດີປະກອບ ແລະ ຕົວຢ່າງຈາກປະສົບການຕົວຈິງຂອງຊີວິດໃສ່ ເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈງ່າຍ.
- ເຈ້ຍຂາວແຜນໃຫຍ່ (ເຈ້ຍ A0);
- ເຟີດ 2 ທີວ;
- ບັດຄຳ;
- ກະດານຂາວ;
- ເຂັມປັກເຈ້ຍ;
- ສະກອດເຈ້ຍ;
- ຮູບພາບສາມຫລັກການ;
- VDO ເດັກນ້ອຍແມ່ຍິງ ແລະ ເດັກນ້ອຍຜູ້ຊາຍ.

# ພາກທີ III
# ການພັດທະນາ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ

## ບົດທີ 1:
## ການພັດທະນາແບບມີສ່ວນຮ່ວມ ແລະ ການພັດທະນາແມ່ຍິງ

ໃນຊຸມປີ 1950-1970 ໂຄງການພັດທະນາໄດ້ຖືກສ້າງຂຶ້ນຢ່າງຫລວງຫລາຍ ແຕ່ໂຄງການເຫລົ່ານັ້ນ ເຄີຍມີລັກສະນະສະຫວັດດີການໝາຍຄວາມວ່າ: ***ມີແຕ່ຝ່າຍໃຫ້ເປັນຜູ້ເຄື່ອນໄຫວ ແລະຝ່າຍຮັບມີແຕ່ຄອຍຖ້າຮັບ.*** ຜ່ານການປະຕິບັດແບບໃຫ້ສະຫວັດດີການດັ່ງກ່າວນີ້ ນັກພັດທະນາໄດ້ຖອດຖອນບົດຮຽນໃນລະດັບສາກົນວ່າ:

> ການດຳເນີນການພັດທະນາແບບມີແຕ່ຝ່າຍດຽວເປັນຜູ້ໃຫ້
> ໂດຍຜູ້ຮັບບໍ່ໄດ້ເປັນເຈົ້າການນຳ ແລະບໍ່ມີສ່ວນຮ່ວມນຳກັນໃນຊຸມຊົນນັ້ນ,
> ການພັດທະນາແມ່ນບໍ່ມີປະສິດທິຜົນ ແລະບໍ່ຍືນຍົງຄົງຕົວ[4].

ດັ່ງນັ້ນ, ໃນຊຸມປີຫລັງໆມານີ້ ນັກທິດສະດີກໍ່ຄືນັກພັດທະນາຈຶ່ງໄດ້ຮັບເອົາແນວຄິດ ແລະ ວິທີການໃໝ່ອັນໄດ້ແກ່: ວິທີການພັດທະນາແບບມີສ່ວນຮ່ວມ (Participatory Development) ໂດຍສະເພາະແມ່ນຮູບແບບຂອງວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (Community Driven Development ຫລື CDD) ຈຶ່ງຈະພາໃຫ້ການພັດທະນາບັນລຸຜົນສຳເລັດ ແລະຍືນຍົງ (Sustainable).

### 1) ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ແມ່ນຫຍັງ?

ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ແມ່ນຂະບວນການໜຶ່ງຊຶ່ງ:

- ຊຸມຊົນເປັນຜູ້ຮັບຜິດຊອບໃນການພັດທະນາຊຸມຊົນຂອງເຂົາເຈົ້າ;
- ຊຸມຊົນເປັນຜູ້ຄວບຄຸມການຕັດສິນບັນຫາ ແລະ ຊັບພະຍາກອນຕ່າງໆ;
- ຊຸມຊົນເປັນຜູ້ໄດ້ຮັບຜົນປະໂຫຍດຈາກການພັດທະນາຊຸມຊົນຂອງເຂົາເຈົ້າເອງ.

---

[4] *ທິດສະດີການພັດທະນາແບບມີສ່ວຮ່ວມແມ່ນ ສັງລວມຈາກປຶ້ມຄູ່ມືກ່ຽວກັບ ບົດບາດຍິງ-ຊາຍຂອງ ທລຍ, ສິງຫາ 2004*



## 2) ເປັນຫຍັງຈຶ່ງໃຊ້ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ?

- ບໍ່ມີລັດຖະບານ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານໃດໆ ສາມາດສະໜັບສະໜູນທຸກໆບ້ານ ໃນທຸກໆມື້ ໂດຍບໍ່ຄິດມູນຄ່າ;
- ຊຸມຊົນ ສາມາດລະດົມທ່າແຮງທີ່ມີຢູ່ຂອງເຂົາເຈົ້າເພື່ອເຮັດວຽກງານຮ່ວມກັນ, ຖ້າໄດ້ຮັບການອໍານວຍຄວາມສະດວກຢ່າງເໝາະສົມ;
- ເປັນການພິສູດແລ້ວວ່າ ຖ້າຫາກຂໍ້ມູນຂ່າວສານ, ອໍານາດໃນການຕັດສິນບັນຫາ ແລະ ຊັບພະຍາກອນ ຖືກສະໜອງໃຫ້ຊຸມຊົນ ເຂົາເຈົ້າສາມາດຄຸ້ມຄອງບໍລິຫານຊັບພະຍາກອນໄດ້ດີກວ່າ ແລະ ມີປະສິດທິພາບກວ່າ ໂດຍການປະກອບສ່ວນ ແລະ ຄວາມເປັນເຈົ້າການຂອງເຂົາເຈົ້າ;
- ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ສ້າງເງື່ອນໄຂສໍາລັບການຈັດຕັ້ງຂັ້ນຊຸມຊົນໃຫ້ຍືນຍົງ ເພື່ອປະຕິບັດຕາມຫລັກການ ແລະ ກົດລະບຽບທີ່ກໍານົດໄວ້, ລະດົມຊັບພະຍາກອນ ແລະ ແບ່ງປັນປະໂຫຍດຢ່າງສະເໝີພາບກັນ ແລະ ຄົງຮັກສາໄວ້ສິ່ງກໍ່ສ້າງທີ່ພັກ-ລັດໄດ້ລົງທຶນໃຫ້.

## 3) ການພັດທະນາແບບມີສ່ວນຮ່ວມ ປະກອບດ້ວຍ 5 ຮ່ວມຄື:

### *1.* ຮ່ວມຄິດ:

**ແມ່ນການຮ່ວມຄົ້ນຄ້ວາ, ປຶກສາຫາລືກັນ ກ່ຽວກັບ ບັນຫາທີ່ພົວພັນເຖິງ:**

- ຊຸມຊົນກໍານົດບັນຫາຂອງຊຸມຊົນເອງວ່າມີຫຍັງແນ່?;
- ຊຸມຊົນຈັດລຽງວ່າ ອັນໃດເປັນບັນຫາທີ່ສໍາຄັນກວ່າໝູ່ (ຈັດບຸລິມະສິດ)?;

- ຊຸມຊົນຜູ້ໃດຕ້ອງການເຮັດຫຍັງ? (ຮ່ວມເລື່ອງການວາງແຜນ ແລະ ວິທີຈັດຕັ້ງປະຕິບັດຕົວຈິງ);
- ເວລາປະຕິບັດແລ້ວກໍ່ຮ່ວມຄິດ-ຄົ້ນ, ຮ່ວມຄົ້ນຄ້ວາ ເພື່ອຕີລາຄາຜົນສຳເລັດ.

*2.* **ຮ່ວມຕັດສິນໃຈ:**

**ຫລັງຈາກຄົ້ນຄ້ວາຄັກແນ່ແລ້ວ ແມ່ນຕ້ອງຕົກລົງຮ່ວມກັນຢ່າງເປັນເອກະພາບໃນການ:**

- ເຮັດໃນສິ່ງທີ່ເຫັນວ່າຈຳເປັນ ເພື່ອໃຫ້ຄຸນນະພາບຊີວິດດີຂຶ້ນ;
- ເຮັດໃນສິ່ງທີ່ເຫັນວ່າເໝາະສົມ ແລ້ວສາມາດເຮັດໄດ້;
- ຕົກລົງໃນການກຳນົດໂຄງການ ແລະ ເຮັດແຜນການຈັດຕັ້ງປະຕິບັດ.

*3.* **ຮ່ວມຈັດຕັ້ງປະຕິບັດ.**

**ຮ່ວມຕັດສິນໃຈແລ້ວຕ້ອງ:** ຮ່ວມໃຈ; ຮ່ວມມືໃນການຈັດຕັ້ງປະຕິບັດຕົວຈິງ ແບບເປັນການແບ່ງງານ, ການຮ່ວມງານ, ການປະສານງານ, ປະຕິບັດຕາມພາລະໜ້າທີ່ຂອງໃຜລາວທີ່ໄດ້ຕົກລົງກັນ.

*4.* **ຮ່ວມຮັບຜິດຊອບ.**

**ຮ່ວມຈັດຕັ້ງປະຕິບັດແລ້ວຍັງບໍ່ພຽງພໍ, ແຕ່ຕ້ອງໄດ້**ຮ່ວມຮັບຜິດຊອບແຕ່ຕົ້ນຕະຫລອດປາຍຮ່ວມນຳກັນອີກ. ຖ້າແມ່ນໂຄງການພັດທະນາຂະໜາດໃຫຍ່ມີຂອບເຂດກ້ວາງຂວາງກໍ່ຕ້ອງໄດ້ແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານ, ຕິດຕາມຜົນການຈັດຕັ້ງປະຕິບັດໄປຕາມພາກສ່ວນ ຫລື ໜ່ວຍງານ. ແຕ່ສຸດທ້າຍກໍ່ຕ້ອງຮັບປະກັນໃຫ້ມີສ່ວນຮ່ວມຂອງຊຸມຊົນທັງໝົດທັງຍິງ ແລະ ຊາຍ ໂດຍສະເພາະກຸ່ມຜູ້ດ້ອຍໂອກາດກວ່າໝູ່ພາຍໃນຊຸມຊົນນັ້ນ ໃຫ້ມາມີສ່ວນຮ່ວມໃນທຸກຂັ້ນຕອນຂອງຂະບວນການພັດທະນາ.



*5.* **ຮ່ວມຜົນປະໂຫຍດ.**

**ໂຄງການພັດທະນາ** ຕ້ອງນຳເອົາຜົນປະໂຫຍດມາໃຫ້ຊຸມຊົນກຸ່ມເປົ້າໝາຍ. ດັ່ງນັ້ນ, ຕ້ອງໄດ້ເອົາໃຈໃສ່ວ່າຜົນປະໂຫຍດນັ້ນໄດ້ຖືກແຈກຢາຍໃຫ້ຜູ້ເຂົ້າຮ່ວມ ແລະ ມີສ່ວນຮ່ວມໃນໂຄງການຢ່າງທົ່ວເຖິງ ແລະຍຸດຕິທຳແລ້ວບໍ່? ຜົນປະໂຫຍດແມ່ນລວມທັງດ້ານວັດຖຸ ແລະຈິດໃຈ (ການໃຫ້ກຳລັງໃຈການຍອມຮັບຈາກສັງຄົມ, ກຽດສັກສີ, ຖານະບົດບາດ...)

## 4) ການພັດທະນາແມ່ຍິງ

ການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາເຫັນວ່າ ພົບຂໍ້ຫຍຸ້ງຍາກຫລາຍທີ່ຈະໃຫ້ໂອກາດເທົ່າທຽມກັນແກ່ແມ່ຍິງ ເນື່ອງຈາກແມ່ຍິງສ່ວນຫລາຍຍັງຖືກຈຳກັດຢູ່ໃນສະພາບທີ່ຂາດອຳນາດ ແລະ ຄວາມເຂັ້ມແຂງພາຍໃນຕົວແມ່ຍິງເອງໃນການກ້າຄິດກ້າຕັດສິນໃຈໃນສິ່ງທີ່ຕົນເອງຢາກເຮັດ. ຂະບວນການສົ່ງເສີມຄວາມເຂັ້ມແຂງໃຫ້ແກ່ແມ່ຍິງຮັບຮູ້ວ່າ ຄວາມສະເໝີພາບບໍ່ແມ່ນວ່າຈະມອບໃຫ້ໄດ້ກໍ່ໄດ້ໂລດ, ແຕ່ຈະຕ້ອງແມ່ນແມ່ຍິງເອງເປັນຜູ້ສ້າງມັນຈາກໂອກາດທີ່ມີມາໃນແຕ່ລະຊ່ອງທາງ ໂດຍຜ່ານຂະບວນການຝຶກຝົນຕົນເອງ, ເລີ່ມຈາກການຊອກຮູ້ຮໍ່າຮຽນ ແລະ ນຳລົງປະຕິບັດໃນຊີວິດຕົວຈິງ. ດັ່ງນັ້ນ ສັງຄົມ, ອົງການຈັດຕັ້ງ, ການຈັດຕັ້ງ, ຄອບຄົວ ຕ້ອງໄດ້ສ້າງໂອກາດ ສ້າງເງື່ອນໄຂໃຫ້ແມ່ຍິງສາມາດເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດຕາມຂະບວນການໄດ້ ແລະ ຍັງຕ້ອງໄດ້ຊ່ວຍເຫລືອ, ອຳນວຍຄວາມສະດວກ ແລະ ໃຫ້ຄຳປຶກສາແກ່ແມ່ຍິງ ເພື່ອເພີ່ມຄວາມເຊື່ອໝັ້ນໃຫ້ແກ່ແມ່ຍິງຕື່ມ ໂດຍສະເພາະໃນໄລຍະຕົ້ນຂອງການຝຶກຝົນ ຫລື ພັດທະນາຕົນເອງ.

### A. ຫ້າ (5) ແນວຄວາມຄິດໃນການພັດທະນາແມ່ຍິງ.

1. ການໃຫ້ສະຫວັດດີການ
2. ການສົ່ງເສີມການກຸ້ມຕົນເອງທາງດ້ານເສດຖະກິດ
3. ການສົ່ງເສີມປະສິດທິພາບຂອງຍິງ-ຊາຍ
4. ການສົ່ງເສີມສິດສະເໝີພາບ
5. ການສົ່ງເສີມຄວາມເຂັ້ມແຂງໃຫ້ແມ່ຍິງ (ການມອບໃຫ້ແມ່ຍິງເປັນເຈົ້າການໃນການຕັດສິນບັນຫາຕ່າງໆ).

B. ການພັດທະນາແມ່ຍິງ ໃນການຈັດຕັ້ງປະຕິບັດວຽກງານ ທລຍ

- ✓ ການສົ່ງເສີມ ແລະ ໃຫ້ສິດທິແມ່ຍິງເປັນພິເສດໃນການເຂົ້າມາບັນຈຸເປັນພະນັກງານ ທລຍ ໃນແຕ່ລະຂັ້ນ,
- ✓ ການສົ່ງເສີມການກຸ້ມຕົນເອງທາງດ້ານເສດຖະກິດ ທລຍ ຈັດຕັ້ງປະຕິບັດໂດຍທາງກົງ ແລະ ທາງອ້ອມ ແມ່ນ ການຈັດຕັ້ງປະຕິບັດໂຄງການທົດລອງຂອງ ທລຍ (LONG),
- ✓ ການສົ່ງເສີມປະສິດທິພາບ ແລະ ສົ່ງເສີມຄວາມເຂັ້ມແຂງຂອງແມ່ຍິງ ຜ່ານຂະບວນການສ້າງທີມງານຂັ້ນບ້ານ ແລະ ຂັ້ນກຸ່ມກໍ່ຄືການສົ່ງເສີມໃຫ້ແມ່ຍິງປະກອບເຂົ້າເປັນຜູ້ປະສານງານກຸ່ມບ້ານ, ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ສ້າງຄວາມເຂັ້ມແຂງໃນດ້ານຕ່າງໆທີ່ຕິດພັນກັບວຽກງານພັດທະນາ ແລະ ແກ້ໄຂຄວາມທຸກຍາກ, ໃຫ້ແມ່ຍິງເປັນເຈົ້າການ ແລະ ຕັດສິນບັນຫາເອງ;
- ✓ ທລຍ ກໍານົດໂຕເລກຜູ້ເຂົ້າຮ່ວມທີ່ເປັນແມ່ຍິງຢ່າງຊັດເຈນໃນຂອງການຈັດຕັ້ງປະຕິບັດວຽກງານ ທລຍ ໂດຍມີລະບຽບຫລັກການ ແລະ ຕົວຊີ້ວັດທີ່ແນ່ນອນໃນການສົ່ງເສີມ;

## 5) ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນການຈັດຕັ້ງປະຕິບັດວຽກງານ ທລຍ

1. ການເສີມສ້າງຄວາມເຂັ້ມແຂງຜ່ານ ການສ້າງຕັ້ງຜູ້ປະສານງານກຸ່ມບ້ານ ແລະ ຜ່ານຂະບວນການໃຫ້ໂອກາດ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າຕາມຂະບວນການຂອງ ທລຍ;
2. ການເສີມສ້າງຄວາມເຂັ້ມແຂງຜ່ານ ການສ້າງຕັ້ງທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ຜ່ານຂະບວນການໃຫ້ໂອກາດ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າຕາມຂະບວນການຂອງ ທລຍ;






3. ການເສີມສ້າງຄວາມເຂັ້ມແຂງຜ່ານຂະບວນການເຂົ້າຮ່ວມ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ໃນຮອບວຽນຂອງໂຄງການຄື:
   - ແມ່ຍິງໄດ້ເຂົ້າຮ່ວມ ແລະ ມີສ່ວນຮ່ວມຕັດສິນໃຈໃນການວາງແຜນພັດທະນາບ້ານ, ແຜນພັດທະນາກຸ່ມບ້ານ;
   - ມີສ່ວນຮ່ວມຕັດສິນໃຈ ແລະ ເຂົ້າຮ່ວມໃນຂະບວນການສຳຫລວດອອກແບບ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍທີ່ເຂົາເຈົ້າຈະໄດ້ຮັບຜົນປະໂຍດ;
   - ຊ່ວຍເຫລືອ, ອຳນວຍຄວາມສະດວກ ແລະ ໃຫ້ຄຳປຶກສາແກ່ແມ່ຍິງ ເພື່ອເພີ່ມຄວາມເຊື່ອໝັ້ນໃຫ້ແກ່ແມ່ຍິງ ໃຫ້ກ້າຄິດກ້າຕັດສິນໃຈໃນສິ່ງທີ່ຕົນເອງຢາກເຮັດ;





   - ມີສ່ວນຮ່ວມຕັດສິນໃຈ, ມອບໃຫ້ເຂົາເຈົ້າຕັດສິນ ແລະ ຮ່ວມກັນໃນການຄຸ້ມຄອງນຳໃຊ້ໂດຍເຂົາເຈົ້າເອງ,
   - ມີສ່ວນຮ່ວມຕັດສິນໃຈໃນຂະບວນການເສີມສ້າງຄວາມເຂັ້ມແຂງອີງຕາມກິດຈະກຳຕ່າງໆທີ່ ທລຍ ມີໃນຮອບວຽນໂຄງການເຊັ່ນ: ບໍລິຫານການເງິນ, ຈັດຊື້ຈັດຈ້າງ, ການຈັດຕັ້ງປະຕິບັດໂຄງລ່າງ, ການຄຸ້ມຄອງ ແລະ ບູລະນະສ້ອມແປງໂຄງລ່າງ, ການຮັບຄຳຄິດຄຳເຫັນ ແລະ ຕັດສິນໃຈແກ້ໄຂບັນຫາ;





- ມີສ່ວນຮ່ວມໃນການກວດສອບ ແລະ ສະແດງຄວາມຄິດຄວາມເຫັນ ແລະ ອື່ນໆ.

4. ການຈັດຝຶກອົບຮົມ ເພື່ອເພີ່ມຄວາມສາມາດໃຫ້ແກ່ເຂົາເຈົ້າ ແລະ ສ້າງເງື່ອນໄຂສະເພາະໃຫ້ແມ່ຍິງໄດ້ມີໂອກາດໃນການຕັດສິນໃຈໃນຊຸມຊົນຂອງເຂົາເຈົ້າ.

**"ການສ້າງຄວາມເຂັ້ມແຂງໃຫ້ແກ່ຄົນ"**
**ຫລື ພັດທະນາທັງຍິງ ແລະ ຊາຍ ໃຫ້ມີໂອກາດເທົ່າທຽມກັນໄດ້**
**ກາຍເປັນສ່ວນປະກອບທີ່ແຍກອອກຈາກກັນບໍ່ໄດ້ກັບຂະບວນການພັດທະນາ**

## 6) ການຫັນຈາກແນວຄວາມຄິດ "ແມ່ຍິງໃນການພັດທະນາ ຫລື WID ກ້າວໄປຫາສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາຫລື GAD"

### A. ແນວຄວາມຄິດແມ່ຍິງໃນການພັດທະນາ.

ແມ່ນເລີ່ມເກີດມີ ແລະ ຂະຫຍາຍຕົວແຕ່ຊຸມປີ 1970 ພ້ອມໆກັບການຈັດຕັ້ງຈຸດປະສົງ ແລະ ວາງນະໂຍບາຍ, ພ້ອມທັງການອອກແບບກິດຈະກຳ**ທີ່ດຶງເອົາແມ່ຍິງເຂົ້າຮ່ວມການພັດທະນາຢ່າງເຕັມສ່ວນ.**

### B. "ແມ່ຍິງໃນການພັດທະນາ" (Women in Development):

ສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາບໍ່ແມ່ນເລື້ອງດຽວກັນກັບ "ແມ່ຍິງໃນການພັດທະນາ"(Gender and Development is not Women in Development).

### C. ແນວຄວາມຄິດສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາ (Gender And Development):

ແນວຄວາມຄິດນີ້ ໄດ້ຖືກພັດທະນາຂຶ້ນໃນຊຸມປີ 1980 ພ້ອມໆກັບການຈັດຕັ້ງຈຸດປະສົງທີ່ເລັ່ງໃສ່ ຫລຸດຜ່ອນສະພາບຄວາມແຕກຕ່າງລະຫວ່າງຍິງ ແລະ ຊາຍທາງດ້ານເສດຖະກິດ ແລະ ການເມືອງຊຶ່ງນັ້ນຖືວ່າ ເປັນປະຖົມປັດໃຈທີ່ກ້າວໄປເຖິງການບັນລຸເປົ້າໝາຍຂອງການພັດທະນາທີ່ມີຄົນເປັນໃຈກາງ.

### D. ສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາແມ່ນຫັຍງ?

**ສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາ ແມ່ນ:**

- ພິຈາລະນາທັງສອງເພດ (ຍິງ-ຊາຍ), ແລະ ພິຈາລະນາສາຍພົວພັນທາງບົດບາດ (ແລະສິດທິ) ທີ່ທັງສອງເພດມີ (ຄືກັນ, ຫລື ຕ່າງກັນ);

- ບໍ່ພິຈາລະນາ ບັນຫາຂອງແມ່ຍິງ ສະເພາະ, ແຕ່ພິຈາລະນາເບິ່ງບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ສະຖານະພາບຂອງແມ່ຍິງ ໂດຍສົມທຽບໃສ່ ຜູ້ຊາຍ;
- ພິຈາລະນາ ຄວາມຈຳເປັນ ທີ່ທັງສອງເພດ ຕ້ອງປ່ຽນແປງ ເພື່ອສະໜັບສະໜູນ ເຊິ່ງກັນ ແລະ ກັນ ເຮັດການປ່ຽນແປງນັ້ນ;






- ຄວນຮັບຮູ້ວ່າ ຖ້າບໍ່ມີຍິງ ແລະ ມີພຽງຜູ້ຊາຍ ກໍຈະບໍ່ມີຄຳວ່າ ສິດສະເໝີພາບຍິງຊາຍ ແລະ ການພັດທະນາແນວຄວາມຄິດ 2 ປະເພດນີ້ (ແມ່ຍິງໃນການພັດທະນາ-WID ແລະ ສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາ-GAD) ເກີດຂຶ້ນມາໃນຂະບວນການພັດທະນາ ແມ່ນຄຳສັບສະເພາະທີ່ໝາຍເຖິງ: ແນວຄວາມຄິດ/ທັດສະນະ ຫລື ວິທີການທີ່ກ່ຽວຂ້ອງກັບຂະບວນການພັດທະນາ ແລະ ໂດຍສະເພາະກ່ຽວຂ້ອງກັບຂະບວນການພັດທະນາແມ່ຍິງ. ໃນປະຈຸບັນ 2 ແນວຄວາມຄິດນີ້ຍັງຖືກນຳໃຊ້ໄປພ້ອມໆກັນຢູ່ໃນຂົງເຂດທີ່ມີສະພາບດ້ອຍພັດທະນາ, ໂດຍສະເພາະໃນເວລາ ຫລື ໃນສະພາບທີ່ແມ່ຍິງຢູ່ບ່ອນນັ້ນ ຍັງດ້ອຍໂອກາດຫລາຍ ແລະ ສະຖານະພາບຍັງຕ່ຳຫລາຍຈຳເປັນຕ້ອງເລັ່ງໃສ່ແມ່ຍິງໂດຍສະເພາະເສຍກ່ອນ ຫລື ອາດພ້ອມໆກັນກໍ່ໄດ້.

## ບົດທີ 2:
## ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ (Social Inclusion=SI)

**"ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ"**ຄຳສັບນີ້ ມີຄວາມໝາຍກວ້າງກວ່າ ຄຳວ່າ "ສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາ".

ກົດໝາຍວ່າດ້ວຍ ສິດທິມະນຸດ ແລະ ວິທີການປະຕິບັດສິດທິມະນຸດ ລະບຸວ່າ: "ມະນຸດແຕ່ລະຄົນບໍ່ວ່າຈະມີອັດຕະລັກແນວໃດກໍ່ຕາມ ມີສິດທິທີ່ຈະປົກປ້ອງ ແລະ ນຳໃຊ້ສິດທິມະນຸດ ຂອງຕົນໄດ້ຢ່າງເຕັມປ່ຽມ".

ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ແມ່ນ "ກຸ່ມພວກນີ້ໄດ້ເຂົ້າຮ່ວມ ຢ່າງມີບົດບາດໃນສັງຄົມ ແລະ ໃນທຸກແງ່ຂອງການພັດທະນາ ເພື່ອຍົກລະດັບຄວາມສາມາດ/ຄວາມຊຳນານ, ເພື່ອໄດ້ຮັບໂອກາດ, ໄດ້ຮັບສັກສີໃນຄວາມເປັນມະນຸດ ເຖິງຈະເປັນຜູ້ດ້ອຍໂອກາດຍ້ອນອັດຕະລັກໃນຕົວຕົນກໍຕາມ"

ເປັນທີ່ຮັບຮູ້ກັນວ່າ ກຸ່ມຜູ້ດ້ອຍໂອກາດ ອາດສາມາດ ຖືກຕັດອອກຈາກການເຂົ້າຮ່ວມໃນສັງຄົມ, ຈາກການເຮັດການຕັດສິນໃຈ ແລະ ຈາກການພັດທະນາດ້ວຍເຫດຜົນຫລາຍຢ່າງ ທີ່ອີງໃສ່ອັດຕະລັກຂອງເຂົາເຈົ້າ, ເຊັ່ນ :

- ຍ້ອນ ສິດທິ ຍິງ-ຊາຍ ຕ່າງກັນ;
- ຍ້ອນ ເປັນຊົນເຜົ່າ ຫລື ເຊື້ອຊາດ ສີຜິວ ໃດໜຶ່ງ;
- ຍ້ອນ ມີພາສາປາກເວົ້າ ຕ່າງກັບໝູ່;
- ຍ້ອນສາສະໜາ, ຄວາມເຊື່ອຖື, ຜີສາງ, ຮີດຄອງຕ່າງໆ;
- ຍ້ອນຊົນຊັ້ນ ຫລື ຖານະເສດຖະກິດ, ລວມທັງຕຳແໜ່ງໃນວຽກງານ, ແຮງງານເຄື່ອນຍ້າຍ;
- ຍ້ອນມີພາວະທາງເພດຕ່າງກັນ;
- ຍ້ອນ ອາຍຸ;
- ຍ້ອນລະດັບ ການສຶກສາ;
- ຍ້ອນຂາດຄວາມສາມາດດ້ານໃດໜຶ່ງໃນຮ່າງກາຍ (ພິການ);
- ຍ້ອນມາຈາກພູມສັນຖານຕ່າງກັນ (ເຊັ່ນ : ມາຈາກຊຸມຊົນທຸກຍາກ/ສະລຳ, ມາຈາກປ່າຈາກດົງ, ຈາກພູດອຍ).

ການຖືກຕັດອອກ ເປັນເລື່ອງທີ່ເກີດຂຶ້ນເລື້ອຍໆທີ່ເໜັງຕີງປ່ຽນແປງໄປມາຢູ່ເລື້ອຍໆ: ເຊິ່ງເປັນການປະຕິບັດ ແລະ ມີປະຕິກິລິຍາຕໍ່ກັນຂອງທັງສອງຝ່າຍ, ຝ່າຍຜູ້ຕັດແຍກຄົນອື່ນອອກ (ຜູ້ບອກບໍ່ໃຫ້ເຂົ້າຮ່ວມແມ່ນຜູ້ມີສິດກວ່າ) ແລະ ຝ່າຍຜູ້ຖືກຕັດແຍກ (ບໍ່ໄດ້ເຂົ້າຮ່ວມ, ມີສິດບໍ່ເທົ່າທຽມກັບໝູ່ ຫລື ຄົນອື່ນ). ການຕັດແຍກກັນ ແມ່ນເນື່ອງມາຈາກຄວາມຄິດຄວາມເຂົ້າໃຈ ແລະ ຄວາມອັກຄະຕິຕໍ່ກັນ.

ການຕັດແຍກອອກ ອາດເຮັດໃຫ້ຜູ້ຖືກຕັດແຍກກາຍເປັນຜູ້ທີ່ຢູ່ເສີຍໆ, ບໍ່ກ້າ/ບໍ່ສະແດງທ່າທີຫຍັງອອກ, ບໍ່ມີປະຕິກິລິຍາ, ບໍ່ໂຕ້ຕອບ, ບໍ່ຕໍ່ສູ້, ບໍ່ສົນໃຈ.

**ເປັນຫຍັງ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ຈຶ່ງເປັນສິ່ງສຳຄັນ ?**

ເພາະມັນເປັນເງື່ອນໄຂຮັບປະກັນ:

- ຜົນສຳເລັດຂອງການເຮັດວຽກ, ການຫລຸດຜ່ອນຄວາມທຸກຍາກ;
- ຄວາມຍືນຍົງຂອງການພັດທະນາ;
- ການຕັດແຍກກັນເປັນສາເຫດ ຂອງການສູນເສຍເສດຖະກິດຂອງສັງຄົມທັງໝົດ;
- ການຕັດແຍກກັນ ແມ່ນການລະເມີດສິດທິມະນຸດຂອງກັນ ແລະ ກັນ.

ຄວາມຕ້ອງການໃຫ້ມີການເອົາໃຈໃສ່ເລື່ອງການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ແລະ ໂອກາດໄດ້ຮັບການພັດທະນາ ແລະ ຫລຸດຜ່ອນຄວາມທຸກຍາກ ເພື່ອໃຫ້ເຂົາເຈົ້າມີຊີວິດການເປັນຢູ່ທີ່ດີຂຶ້ນທຽບເທົ່າກັບກຸ່ມອື່ນໃນສັງຄົມ. ຂໍ້ມູນເປີເຊັນ (%) ຄວາມທຸກຍາກ ທີ່ສາມາດເບິ່ງໄດ້ຢ່າງເດັ່ນຊັດ ເຖິງຄວາມທຸກຍາກຂອງກຸ່ມຊົນເຜົ່າສ່ວນໜ້ອຍ ດັ່ງລາຍລະອຽດຢູ່ຕາຕະລາງລຸ່ມນີ້:

**<u>ຕາຕະລາງທີ 5:</u> ສະພາບຄວາມທຸກຍາກຂອງຊົນເຜົ່າໃນ ສ ປ ປ ລາວ, LECS 2007/08**

| ຊົນເຜົ່າໃນສປປລາວ | ຈຳນວນປະຊາກອນຕໍ່ປະຊາກອນທັງໝົດໃນປະເທດ (%) | ອັດຕາຄວາມທຸກຍາກຕໍ່ປະຊາກອນທັງໝົດໃນປະເທດ (%) |
|---|---|---|
| **ລາວ-ໄຕ, 8 ຊົນເຜົ່າ:** ແຊກ; ຍວນ; ໄຕ; ໄທ ເໜືອ; ຜູ້ໄທ; ຢັ້ງ; ລາວ; ລື້. | **65%** | **19%** |
| **ມອນ-ຂະແມ, 32 ຊົນເຜົ່າ:** ກຶມມຸ; ກະຕາງ; ກະຕູ; ກຣຽງ; ກຣີ; ຂະແມ; ງວນ; ເຈັງ; ສາມຕ່າວ; ສະດາງ; ຊ່ວຍ; ຊິງມູນ; ຍະເຫີນ, ຕະໂອ້ຍ, ຕຣຽງ; ຕຣີ; ຕຸມ; ແທ່ນ; ບິດ; ເບຣົາ; ປະໂກະ; ໄປຣ; ຜ້ອງ; ມະກອງ; ມ້ອຍ; ຢຣຸ; ແຢະ; ລະເມດ; ລະວີ; ໂອຍ; ເອີດູ; ຮ່າຮັກ. | **24%** | **47%** |
| **ມົ້ງ-ອີ້ວມ້ຽນ, 2 ຊົນເຜົ່າ:** ມົ້ງ; ອີວມຽນ | **8%** | **43%** |
| **ຈີນ-ຕິເບດ, 7 ຊົນເຜົ່າ:** ສິງສີລີ; ສີລາ; ລາຫູ, ໂລໂລ; ຫໍ້, ອາຄາ, ຮ່າຍີ່. | **3%** | **42%** |

## ❖ ວິທີການສອນໃນພາກທີ III:



1) ແບ່ງເປັນ 4 ກຸ່ມຍ່ອຍ (ກຸ່ມປະສົມ 2 ກຸ່ມ, ກຸ່ມຍິງ 1 ກຸ່ມ, ຊາຍ 1 ກຸ່ມ),
2) ຄຳຖາມສຳລັບກຸ່ມຄົ້ນຄ້ວາທີ່ເປັນກຸ່ມປະສົມມີຄື:
    1. ການມີສ່ວນຮ່ວມມີຄວາມສຳຄັນຄືແນວໃດແນ່?
    2. ການພັດທະນາ ແລະ ຫລຸດຜ່ອນຄວາມທຸກຍາກຂອງ ທລຍ ຄວນໄດ້ຮັບການມີສ່ວນຮ່ວມຈາກຊຸມຊົນບໍ່? ຖ້າບໍ່ມີ, ຍ້ອນຫຍັງຈຶ່ງບໍ່ມີ?; ຖ້າມີ, ຍ້ອນຫຍັງ ແລະ ຄວນມີສ່ວນຮ່ວມໃນຂັ້ນຕອນໃດແນ່?

**ຄຳຖາມ ຄົ້ນຄ້ວາ ສຳລັບກຸ່ມຍິງ ແລະ ກຸ່ມຊາຍ:**

1. ກະລຸນາ ໃຫ້ຄຳຕອບວ່າ ແມ່ນໃຜ ທີ່ຢູ່ໃນເຂດເປົ້າໝາຍຂອງໂຄງການ ທລຍ ອາດເປັນຜູ້ທີ່ເວົ້າຂໍ້ຄວາມ ແຕ່ລະຂໍ້ຄວາມຢູ່ຂ້າງລຸ່ມນີ້. (ແຕ່ລະຂໍ້ຄວາມອາດມີຄົນຈາກຫລາຍກຸ່ມຄົນແຕກຕ່າງກັນ ຊຶ່ງເປັນຜູ້ເວົ້າ, ດັ່ງນັ້ນ ທ່ານສາມາດຕອບໄດ້ ຫລາຍກວ່າ 1 ຄຳຕອບ).

*ເອົາບັດຄຳໃຫ້ກຸ່ມຄົ້ນຄ້ວາກຸ່ມຍິງ ແລະ ກຸ່ມຊາຍເພື່ອຄົ້ນຄ້ວາກ່ຽວກັບການເຂົ້າຮ່ວມ ແລະ ຜູ້ຖືກຕັດອອກຂອງກຸ່ມຜູ້ດ້ອຍໂອກາດ ໂດຍການຂຽນຄຳຕອບໃສ່ບັດຄຳ.*

**ຂໍ້ຄວາມມີຄື :**

- ☞ ນາຍບ້ານ ບອກໃຫ້ພວກເຮົາມາປະຊຸມມື້ນີ້, ແຕ່ພວກເຮົາບໍ່ຮູ້ວ່າ ຈະປະຊຸມກ່ຽວກັບເລື້ອງໃດ;
- ☞ ມື້ນີ້ ທລຍ ຈະມາເຮັດວຽກຢູ່ບ້ານພວກເຮົາ ເລື້ອງໂຄງລ່າງພື້ນຖານຂອງບ້ານພວກເຮົາ;
- ☞ ພວກເຮົາສິນັ່ງຢູ່ທາງຫລັງໝູ່ ເພາະພວກເຮົາໜ້າອາຍ ບໍ່ຮູ້ຈະອອກຄຳຄິດຄຳເຫັນ;
- ☞ ພວກເຮົາສິນັ່ງຢູ່ແຖວໜ້າ ເພື່ອໃຫ້ແນ່ໃຈວ່າພະນັກງານ ທລຍ ຈະໄດ້ຍິນຄຳຄິດຄຳເຫັນຂອງພວກເຮົາ;
- ☞ ພວກເຮົາສິນັ່ງຢູ່ທາງຫລັງ ເພາະພວກເຮົາບໍ່ເຂົ້າໃຈພາສາລາວດີ;
- ☞ ບຸລິມະສິດຂອງພວກເຮົາ ບໍ່ໄດ້ຮັບການລົງຄະແນນສຽງ;
- ☞ ພວກເຮົາດີໃຈ ທີ່ໄດ້ ລົງຄະແນນສຽງ ໃຫ້ບຸລິມະສິດ ຂອງພວກເຮົາ;
- ☞ ພວກເຮົາ ບໍ່ສາມາດເຂົ້າຮ່ວມການສຳຫລວດໂຄງການຍ່ອຍຈົນແລ້ວ, ພວກເຮົາເຂົ້າຮ່ວມໄດ້ພຽງໜ້ອຍດຽວ.
- ☞ ເພິ່ນສ້າງນ້ຳລິນໃຫ້ພວກເຮົາຢູ່ໄກກັບບ່ອນພວກເຮົາຢູ່, ພວກເຮົາກໍເລີຍຍັງຕ້ອງໄດ້ໄປຕັກນ້ຳຢູ່ຫວ້ຍມາໃຊ້ຄືເກົ່າ;
- ☞ ພວກເຮົາພໍໃຈນຳ ທລຍ ເພາະເພິ່ນສ້າງ ນ້ຳລິນ ໄດ້ຕາມວິທີ ທີ່ພວກເຮົາສະເໜີ
- ☞ ພວກເຮົາດີໃຈຫລາຍເພາະດຽວນີ້ມີໂຮງຮຽນຢູ່ໃກ້ບ້ານແລ້ວ ແລະ ລູກຂອງພວກເຮົາກໍສາມາດຍ່າງໄປໂຮງຮຽນໄດ້ງ່າຍໆ.
- ☞ ດີທີ່ດຽວນີ້ ມີໂຮງຮຽນຫລັງໃໝ່, ແຕ່ວ່າ ມັນຍາກສຳລັບເດັກນ້ອຍ ທີ່ຕ້ອງຍ່າງຂ້າມຫວ້ຍໄປໃນລະດູຝົນ.

3) ຕາງໜ້າກຸ່ມຂຶ້ນນຳສະເໜີຜົນການຄົ້ນຄ້ວາ;

4) ຄູຝຶກສະຫລຸບຜົນການຄົ້ນຂອງກຸ່ມປະສົມ ແລະ ນຳເອົາທິດສະດີການພັດທະນາ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດມາປະກອບ;
5) ສະຫລຸບຜົນການຄົ້ນຄ້ວາຂອງກຸ່ມຍິງ ແລະ ຊາຍ ໂດຍສົມທຽບຄວາມສຳຄັນ ແລະ ຄວາມເປັນຈິງທີ່ເຫັນຄື: ຕົວຈິງອາດປ່ອຍປະຜູ້ດ້ອຍໂອກາດຈາກການມີສ່ວນຮ່ວມໃນວຽກງານພັດທະນາ ໂດຍຈະເຫັນໃນຄຳຕອບຂອງກຸ່ມຍິງ ແລະ ກຸ່ມຊາຍ, ຫລັງຈາກນັ້ນນຳເອົາທິດສະດີ ກ່ຽວກັບຜູ້ດ້ອຍໂອກາດ ມາປະກອບໃສ່,
6) ນຳສະເໜີທິດສະດີ ໃນພາກນີ້ທັງໝົດ ແລະ ຮູບພາບການມີສ່ວນ ແລະ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງໃນວຽກງານ ທລຍ ຕົວຈິງໃສ່ Power Point.

### ❖ ອຸປະກອນຮັບໃຊ້ໃນພາກທີ່ III:



1) ສາມຮູບພາບຂອງສິດສະເໜີພາບຂະໜາດ A3 ຈຳນວນ 3 ຊຸດ
2) Power point ສຳລັບສະຫລຸບໃຫ້ເຫັນທິດສະດີປະກອບ
3) ເຈ້ຍແຜນໃຫຍ່
4) ບັດຄຳ 2-4 ສີ
5) ເຝີດ 2 ຫົວ
6) ສະກ໊ອດຕິດເຈ້ຍ

# ພາກທີ IV
# ການສົ່ງເສີມ ສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງກຸ່ມຜູ້ດ້ອຍໂອກາດເຂົ້າໃນວຽກງານພັດທະນາ

## ບົດທີ 1:
## ການສົ່ງເສີມສິດສະເໝີພາບຍິງ-ຊາຍ

### 1. ຄວາມໝາຍ ແລະ ຄວາມສໍາຄັນ

ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແມ່ນຂະບວນການພັດທະນາ ແລະ ຂະບວນການປ່ຽນແປງແບບຕໍ່ເນື່ອງຍາວນານ ແລະ ເປັນກ້າວໆ ເພື່ອບັນລຸເປົ້າໝາຍ ໃນການສ້າງຄວາມສະເໝີພາບລະຫວ່າງຍິງ-ຊາຍ ເທື່ອລະກ້າວ.

- ❖ **ການສົ່ງເສີມສິດສະເໝີພາບຍິງ-ຊາຍ**: ແມ່ນຍຸດທະສາດລະດັບສາກົນທີ່ໄດ້ຖືກຮັບຮອງເອົາໃນແຜນປະຕິບັດງານປັກກິ່ງກ່ຽວກັບ 12 ຂົງເຂດຄວາມເປັນຫ່ວງທີ່ແມ່ນອຸປະສັກຕໍ່ຄວາມກ້າວໜ້າຂອງແມ່ຍິງ (ກອງປະຊຸມແມ່ຍິງໂລກຄັ້ງທີ 4 ປີ 1995).
- ❖ **ຈຸດປະສົງ**: ຍຸດທະສາດການສົ່ງເສີມສິດສະເໝີພາບຍິງ-ຊາຍ ໄດ້ຖືກວາງອອກ ເພື່ອບັນລຸເປົ້າໝາຍຂອງການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW).
- ❖ **ການປະຕິບັດ**: ຢູ່ຫລາຍປະເທດທົ່ວໂລກຍຸດທະສາດດັ່ງກ່າວ ໄດ້ເອົາເຂົ້າໃນນະໂຍບາຍ, ກົດໝາຍ, ການຈັດຕັ້ງ, ການພັດທະນາຊັບພະຍາກອນມະນຸດ, ການວາງແຜນສ້າງເສດຖະກິດ-ສັງຄົມຂອງທຸກຂະແໜງການ.

  ປະຈຸບັນຢູ່ ສປປ ລາວ ວິທີການສົ່ງເສີມສິດສະເໝີພາບຍິງ-ຊາຍ ຖືກນຳມາປະຕິບັດນັບມື້ນັບຫລາຍຂຶ້ນ ເປັນຕົ້ນໃນຂອບເຂດຂອງໂຄງການຕາມຂະແໜງການຕ່າງໆ. ຂະບວນການສົ່ງເສີມສິດສະເໝີພາບຍິງ-ຊາຍນີ້ ຍັງມີທ່າກ້າວຂະຫຍາຍຕົວໄປໃນຂົງເຂດອື່ນໆອີກເຊັ່ນ: ຄະນະກຳມະການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ສະຫະພັນຍິງລາວ, ຊາວໜຸ່ມ, ສາທາລະນະສຸກ ແລະ ອື່ນໆ.

❖ **ເນື້ອໃນການສົ່ງເສີມສິດສະເໝີພາບຍິງ-ຊາຍ**: ແມ່ນການຍົກສູງຈິດສຳນຶກ ແລະ ຄວາມເຂົ້າໃຈໃນຄວາມສະເໝີພາບ (ຄວາມເລື່ອມລ້ຳຕ່ຳສູງ) ລະຫວ່າງເພດຢູ່ໃນສັງຄົມ ແລະ ພ້ອມທັງມີການດຳເນີນບາດກ້າວຊຶ່ງນຳເອົາຄວາມຮູ້ເລົ່ານັ້ນ ເຂົ້າໃນການວາງແຜນ, ການເຄື່ອນໄຫວວຽກໃດໜຶ່ງ ແລະ ການຕິດຕາມປະເມີນຜົນ.

**2. ເຄື່ອງມືສຳລັບການເຊື່ອມທັດສະນະບົດບາດຍິງ-ຊາຍ:**

ມີ 3 ຂົງເຂດຕົ້ນຕໍຄື:

**ຂົງເຂດທີ 1: ການວິເຄາະບົດບາດຍິງ-ຊາຍ;**

ຂະບວນການນີ້ ແມ່ນຮຽກຮ້ອງໃຫ້ມີການວິເຄາະ ບົດບາດຍິງ-ຊາຍຢ່າງເລິກເຊິ່ງ ໂດຍມີທັດສະນະຢ່າງໜັກແໜ້ນວ່າ ຈະນຳເອົາບັນຫາທີ່ວິເຄາະແລ້ວ ເຂົ້າໄປນຳໃຊ້ໃນຂະບວນການພັດທະນານັບແຕ່ຂັ້ນຕອນທຳອິດຈົນເຖິງຂັ້ນຕອນສຸດທ້າຍ.

ການວິເຄາະສິດສະເໝີພາບຍິງ-ຊາຍ ແມ່ນໄດ້ຈາກການເກັບກຳຂໍ້ມູນ ແລະ ຄົ້ນຄ້ວາວິໃຈພາບຄວາມເປັນຈິງກ່ຽວກັບຍິງ-ຊາຍໃນທຸກຂົງເຂດ ແລະ ໜ້າວຽກ.

**ຂົງເຂດທີ 2: ຂໍ້ມູນແຍກເພດຍິງ-ຊາຍ ໃນທຸກຂົງເຂດ ແລະ ການເຄື່ອນໄຫວ;**

ຮຽກຮ້ອງໃຫ້ມີສະຖິຕິແຍກເພດ ຍິງ-ຊາຍ ສຳລັບການວິໃຈທີ່ມີຄວາມໝາຍ ແລະ ສາມາດເຮັດການແນະນຳແບບຊຸກຍູ້ ສົ່ງເສີມບາດກ້າວໃນການແກ້ໄຂຕົວຈິງ (ການວາງຂໍ້ກຳນົດກ່ຽວກັບການພັດທະນາ, ອອກຂໍ້ແນະນຳເພື່ອຈັດຕັ້ງປະຕິບັດ).

ຂໍ້ມູນທີ່ແຍກເພດ ຫລື ສະຖິຕິບົດບາດຍິງ-ຊາຍ ໄດ້ມາຈາກການເກັບກຳຂໍ້ມູນຢ່າງເປັນລະບົບ ໂດຍອົງການທີ່ຮັບຜິດຊອບ, ສະຖິຕິແຍກເພດ ຊ່ອງແສງໃຫ້ເຫັນເຖິງຄວາມຮັບຜິດຊອບຂອງຍິງ-ຊາຍ ໃນຂົງເຂດນັ້ນໆ.

**ຂົງເຂດທີ 3: ການວາງແຜນທີ່ເອົາໃຈໃສ່ບົດບາດຍິງ-ຊາຍ.**

ການວາງແຜນ ທີ່ເອົາໃຈໃສ່ ສົ່ງເສີມສິດສະເໝີພາບ ຍິງ-ຊາຍ ແມ່ນເຄື່ອງມືທີ່ມີປະສິດທິຜົນ ແລະ ເປັນມາດຕະການໜຶ່ງທີ່ສັກສິດ ໃນການເຮັດໃຫ້ແນວຄິດອຸດົມຄະຕິທີ່ຢາກສ້າງຄວາມສາມາດ ແລະ ຄວາມເຂັ້ມແຂງທັງສອງເພດ ໄດ້ປະກົດເປັນຈິງ ໃນທຸກຂົງເຂດ ແລະ ທຸກລະດັບ.

ທລຍ ໄລຍະທີ I ຈົນເຖິງໄລຍະທີ II ໄດ້ເອົາໃຈໃສ່ ສົ່ງເສີມສິດສະເໝີພາບ ຍິງ-ຊາຍ ໃນທຸກໆກິດຈະກຳ ຢູ່ໃນຂົງເຂດພື້ນທີ່ເປົ້າໝາຍຂອງ ທລຍ ໂດຍສະເພາະແມ່ນໃນຂັ້ນຕອນການວາງແຜນ, ທລຍ ສ້າງຄວາມເຂັ້ມແຂງໃຫ້ແກ່ຕົວແທນຊຸມຊົນທັງຍິງ ແລະ ຊາຍ (ຝຶກອົບຮົມ) ກ່ຽວກັບ ຮູບແບບ ແລະ ວິທີການວາງແຜນພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ, ວິທີການຈັດຕັ້ງ

ປະຕິບັດໂຄງການຍ່ອຍ, ການບໍລິຫານການເງິນງົບປະມານໂຄງການຍ່ອຍ, ຈັດຊື້ຈັດຈ້າງ, ຕິດຕາມ, ຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງ ທີ່ເນັ້ນ ການເອົາໃຈໃສ່ສົ່ງເສີມສິດສະເໝີພາບ ຍິງ-ຊາຍໃນແຕ່ລະບາດກ້າວຂອງແຕ່ລະກິດຈະກຳ.

## 3. ການວາງແຜນພັດທະນາທີ່ເອົາໃຈໃສ່ ສິດສະເໝີພາບ ຍິງ-ຊາຍ

**ຈຸດປະສົງ:** ເພື່ອເຮັດໃຫ້ແຜນພັດທະນາ ສາມາດຕອບສະໜອງຄວາມຕ້ອງການທາງດ້ານການພັດທະນາຂອງແມ່ຍິງ ແລະ ຜູ້ຊາຍ ຊຶ່ງແນໃສ່ແກ້ໄຂ ຫລື ປັບປຸງສະພາບການ ແລະ ສະຖານະພາບຂອງ ແມ່ຍິງໃຫ້ດີຂື້ນ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງໄປພ້ອມໆກັບວຽກງານວິຊາສະເພາະ.

**ເນື້ອໃນ**: ແມ່ນການສ້າງໂອກາດໃຫ້ທັງຍິງຊາຍໄດ້ຊົມໃຊ້ຊັບພະຍາກອນອັນຈຳເປັນ ເພື່ອຊີວິດການເປັນຢູ່ທີ່ດີຂື້ນ ແລະ ເຮັດໃຫ້ແມ່ຍິງມີບົດບາດຫລາຍຂື້ນ.

# ບົດທີ 2
# ການສົ່ງເສີມສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ເຂົ້າໃນແຕ່ລະຂັ້ນຕອນຂອງການຈັດຕັ້ງປະຕິບັດວຽກງານ ທລຍ

## 1. ຮອບວຽນການຈັດຕັ້ງປະຕິບັດໂຄງການຍ່ອຍຂອງ ທລຍ.



## 2. ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດເຂົ້າໃນແຕ່ລະຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການ

**ຕາຕະລາງທີ 6: ຂັ້ນຕອນ ແລະ ເຄື່ອງມືທີ່ນໍາໃຊ້**

| ຂັ້ນຕອນ | ການສົ່ງເສີມສິດສເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງກຸ່ມຜູ້ດ້ອຍໂອກາດ | ເຄື່ອງມືທີ່ໃຊ້ |
|---|---|---|
| **ແນະນໍາໂຄງການ** | • ຢ່າງໜ້ອຍ 50% ຂອງປະຊາຊົນທີ່ເປັນຜູ້ໃຫຍ່ພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມ,<br>• 40% ຂອງຜູ້ເຂົ້າຮ່ວມທັງຫມົດ ຕ້ອງເປັນແມ່ຍິງ,<br>• ຢ່າງໜ້ອຍ 60% ຂອງຄອບຄົວທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມປະຊຸມ,<br>• ຜູ້ທຸກຍາກທັງຍິງ-ຊາຍ ໃນທຸກໆຊົນເຜົ່າ, ຜູ້ໄດ້ຮັບຂໍ້ມູນທີ່ຖືກຕ້ອງ ແລະ ມີຄວາມເຂົ້າໃຈທີ່ເປັນອັນດຽວກັນ ກ່ຽວກັບ ໂຄງການ,<br>• ໃຫ້ສິດແກ່ຜູ້ທຸກຍາກ, ທຸກຊົນເຜົ່າ, ຜູ້ດ້ອຍໂອກາດ ທັງຍິງ ແລະ ຊາຍ ປະກອບຄໍາເຫັນໃນບັນຫາ ແລະ ຂໍ້ຂ້ອງໃຈທີ່ເຂົາເຈົ້າມີ. | • ໃຊ້ຮູບພາບ ເປັນເຄື່ອງມືໃນການສົ່ງຂໍ້ມູນຂ່າວສານ ແລະ ສ້າງຄວາມເຂົ້າໃຈ ໃນແຕ່ລະຂັ້ນຕອນຂອງການວາງແຜນ.<br>• ໃຊ້ພາສາແປສໍາລັບກຸ່ມຄົນສ່ວນໜ້ອຍທີ່ບໍ່ເຂົ້າໃຈພາສາລາວດີ,<br>• ໃຊ້ພາສາຊົນເຜົ່າ ກໍລະນີຊຸມຊົນບໍ່ເຂົ້າໃຈພາສາລາວເປັນສ່ວນຫລາຍ |
| **ວາງແຜນພັດທະນາແບບມີສ່ວນຮ່ວມຂັ້ນບ້ານ** | • ອໍານວຍຄວາມສະດວກໃຫ້ທັງຍິງ-ຊາຍ ແລະ ຜູ້ທຸກຍາກທຸກໆຊົນເຜົ່າ ມີສ່ວນຮ່ວມໃນການວາງແຜນ ແລະ ສະແດງຄໍາຄິດຄໍາເຫັນ (ຢ່າງໜ້ອຍ 50% ຂອງປະຊາຊົນທີ່ເປັນຜູ້ໃຫຍ່ພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມ, 40% ຂອງຜູ້ເຂົ້າຮ່ວມທັງຫມົດ ຕ້ອງເປັນແມ່ຍິງ, ຢ່າງໜ້ອຍ 60% ຂອງຄອບຄົວທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມປະຊຸມ).<br>• ຕ້ອງເກັບກໍາຂໍ້ມູນສະພາບບັນຫາທີ່ກ່ຽວຂ້ອງກັບຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຊົນເຜົ່າຕ່າງໆທັງຍິງ ແລະ ຊາຍ,<br>• ເຮັດການວາງແຜນເປັນແຕ່ລະບ້ານ ແຍກກຸ່ມຍິງ-ຊາຍ, ຊົນເຜົ່າ.<br>• ກໍານົດເອົາ 3 ໃນ 5 ບູລິມະສິດທໍາອິດຕ້ອງແມ່ນບູລິມະສິດທີ່ມາຈາກກຸ່ມຍິງ ແລະ ພິຈາລະນາເອົາບູລິມະສິດຂອງກຸ່ມຜູ້ດ້ອຍໂອກາດ ແລະ ແມ່ຍິງເປັນພິເສດ ເພື່ອເອົາເຂົ້າໃສ່ລົດລາຍການແຜນພັດທະນາບ້ານ,<br>• ຮັບປະກັນໄດ້ວ່າ ບັນຫາຂອງຍິງ-ຊາຍ ເຂົ້າໃນແຜນພັດທະນາ, | • ຈັດກອງປະຊຸມຢູ່ແຕ່ລະຄຸ້ມບ້ານ,<br>• ແຕ້ມແຜນວາດທາງທາງຄົມຂອງບ້ານ,<br>• ການວິເຄາະຕົ້ນໄມ້ບັນຫາ,<br>• ການຈັດລະດັບຄວາມທຸກຍາກຂອງຄົວເຮືອນ,<br>• ການຈັດລຽງບູລິມະສິດຄວາມຕ້ອງການພັດທະນາບ້ານ,<br>• ລົງຄະແນນສຽງຮັບສະໝັກ ຕົວແທນບ້ານ |

| ຂັ້ນຕອນ | ການສົ່ງເສີມສິດສີເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງກຸ່ມຜູ້ດ້ອຍໂອກາດ | ເຄື່ອງມືທີ່ໃຊ້ |
|---|---|---|
| | • ຄັດເລືອກຕົວແທນບ້ານ/ກຸ່ມບ້ານ ໂດຍຊຸມຊົນໃນບ້ານ ເພື່ອເປັນຕົວແທນໃຫ້ບ້ານເຂົ້າຮ່ວມວາງແຜນ ແລະ ສະເໜີບູລິມະສິດແຜນພັດທະນາບ້ານຢູ່ກອງປະຊຸມຂັ້ນກຸ່ມບ້ານ (ຖ້າໃນບ້ານມີ 3 ຊົນເຜົ່າກໍ່ຕ້ອງມີຕົວແທນທີ່ມາຈາກ 3 ຊົນເຜົ່າ). | |
| **ວາງແຜນພັດທະນາ ແບບມີສ່ວນຮ່ວມ ຂັ້ນ ກຸ່ມບ້ານ** | • ອຳນວຍຄວາມສະດວກໃຫ້ທັງຕົວແທນແຕ່ລະບ້ານຍິງ-ຊາຍ ແລະ ຜູ້ທຸກຍາກທຸກໆຊົນເຜົ່າມີສ່ວນຮ່ວມໃນການວາງແຜນ ແລະ ສະແດງຄຳຄິດຄຳເຫັນໃນກອງປະຊຸມ (ຢ່າງໜ້ອຍ 50% ຂອງປະຊາຊົນທີ່ເປັນຜູ້ໃຫຍ່ພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມ, 40% ຂອງຜູ້ເຂົ້າຮ່ວມທັງໝົດ ຕ້ອງເປັນແມ່ ຍິງ, ຢ່າງໜ້ອຍ 60% ຂອງຄອບຄົວທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມປະຊຸມ).<br>• ຕ້ອງເກັບກຳຂໍ້ມູນສະພາບບັນຫາທີ່ກ່ຽວຂ້ອງກັບບ້ານທຸກຍາກພາຍໃນກຸ່ມບ້ານ, ຜູ້ດ້ອຍໂອກາດ, ຊົນເຜົ່າຕ່າງໆ ທັງຍິງ ແລະ ຊາຍ,<br>• ກຳນົດເອົາ 3 ໃນ 5 ບູລິມະສິດທຳອິດຕ້ອງ ມາຈາກແຜນຂອງກຸ່ມຍິງ ແລະ ພິຈາລະນາເອົາບູລິມະສິດຂອງກຸ່ມຜູ້ດ້ອຍໂອກາດ ແລະ ແມ່ຍິງເປັນພິເສດ ເພື່ອເອົາໃສ່ລົດລາຍການແຜນພັດທະນາກຸ່ມບ້ານໄລຍະ 5 ປີ ແລະ ເຂົາໃນແຜນການລົງທຶນຂອງໂຄງການ, ຮັບປະກັນໄດ້ວ່າ ບັນຫາຂອງຍິງ-ຊາຍ, ຜູ້ທຸກຍາກ, ຊົນເຜົ່າສ່ວນໜ້ອຍ ເຂົ້າໃນແຜນພັດທະນາ,<br>• ຄັດເລືອກຕົວແທນກຸ່ມບ້ານ ເພື່ອເຂົ້າຮ່ວມກອງປະຊຸມ ປະສານງານການວາງແຜນພັດທະນາກຸ່ມບ້ານຂັ້ນເມືອງ ຍິງ 3, ຊາຍ 3 (ຖ້າໃນບ້ານມີ 3 ຊົນເຜົ່າກໍ່ຕ້ອງມີຕົວແທນທີ່ມາຈາກ 3 ຊົນເຜົ່າ).<br>• 60% ຂອງງົບປະມານກຸ່ມບ້ານຕ້ອງຕົກໃສ່ບ້ານທຸກ, 66% ຂອງຈຳນວນໂຄງການຍ່ອຍ ຕ້ອງຕົກໃສ່ບ້ານທຸກ. | • ຈັດກອງປະຊຸມຢູ່ແຕ່ລະຄຸ້ມບ້ານ,<br>• ແຕ້ມແຜນວາດທາງທາງຄົມຂອງບ້ານ,<br>• ການວິເຄາະເບິ່ງຈຸດແຂງ, ກາລະໂອກາດ, ຈຸດອ່ອນ ແລະ ຄວາມມຸ້ງມາດປາດຖະໜາ.<br>• ການຈັດລະດັບຄວາມທຸກຍາກຂອງບ້ານ,<br>• ການຈັດລຽງບູລິມະສິດຄວາມຕ້ອງການພັດທະນາກຸ່ມບ້ານ,<br>• ລົງຄະແນນສຽງຮັບສະໝັກ ຕົວແທນກຸ່ມບ້ານ.<br>• ຝຶກອົບຮົມ ຕົວແທນບ້ານ<br>• ສ້າງຜູ້ອຳນວຍຄວາມສະດວກຈາກຊຸມຊົນເອງ ຊຶ່ງບໍ່ແມ່ນອຳນາດການປົກຄອງບ້ານ ຫລື ກຸ່ມບ້ານ (ຄັດເລືອກຜູ້ປະສານງານກຸ່ມບ້ານ 3 ທ່ານ/ກຸ່ມບ້ານ ຍິງ 2 ທ່ານ ຊາຍ 1 ທ່ານ) |
| **ກອງປະຊຸມປະສານງານ ແລະ ວາງ** | • ອຳນວຍຄວາມສະດວກໃຫ້ຕົວແທນແຕ່ລະກຸ່ມບ້ານທັງຍິງ-ຊາຍ ແລະ ຜູ້ທຸກຍາກທຸກໆຊົນເຜົ່າ ມີສ່ວນຮ່ວມໃນການວາງແຜນ ແລະ ສະແດງຄຳຄິດຄຳເຫັນໃນກອງປະຊຸມ | • ການວາງແຜນປບບມີສ່ວນຮ່ວມ<br>• ເຫັນອົກເຫັນໃຈກຸ່ມບ້ານທີ່ທຸກຍາກກ່ອນ |

| ຂັ້ນຕອນ | ການສົ່ງເສີມສິດສີເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງກຸ່ມຜູ້ດ້ອຍໂອກາດ | ເຄື່ອງມືທີ່ໃຊ້ |
|---|---|---|
| **ແຜນຂັ້ນເມືອງ** | ຂັ້ນເມືອງ,<br>• ຍອມຮັບໃນການສະເໜີຄໍາຄິດຄໍາເຫັນຂອງຕົວແທນແຕ່ລະກຸ່ມບ້ານ<br>• ຮັບປະກັນວ່າ 60% ຂອງງົບປະມານກຸ່ມບ້ານຕ້ອງຕົກໃສ່ບ້ານທຸກ, 66% ຂອງຈໍານວນໂຄງການຍ່ອຍ ຕ້ອງຕົກໃສ່ບ້ານທຸກ. | • ດຶງເອົາຄໍາຄິດຄໍາເຫັນຂອງຕົວແທນກຸ່ມບ້ານທຸກໆຄົນ ຈາກທຸກໆກຸ່ມບ້ານ |
| **ສໍາຫລວດອອກແບບ** | • ຮັບປະກັນໄດ້ວ່າ ບູລິມະສິດຂອງຜູ້ທຸກຍາກ, ຊົນເຜົ່າ, ຍິງ-ຊາຍ ເຂົ້າໃນແຜນການລົງທຶນຂອງໂຄງການ ແລະ ສາມາດແກ້ໄຂຄວາມທຸກຍາກຂອງເຂົາເຈົ້າຢ່າງແທ້ຈິງ,<br>• ສໍາຫລວດລະອຽດ ເພື່ອປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນຜູ້ທຸກຍາກ ແລະ ຊົນເຜົ່າ ຊຶ່ງມັນອາດເກີດຂຶ້ນໃນຊ່ວຍໄລຍະສໍາຫລວດ,<br>• ຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ທັງຍິງຊາຍ ແລະ ຜູ້ທຸກຍາກ ໃນການກໍານົດພື້ນທີ່ການກໍ່ສ້າງທີ່ແນ່ນອນ, | ແຜນການລົງທຶນທີ່ເອົາໃຈໃສ່ສິດສະເໝີພາບ ແລະ ຄວາມເປັນທໍາຂອງຜູ້ທຸກຍາກ, ຊົນເຜົ່າ ແລະ ຍິງ-ຊາຍ.<br>ແບບຟອມສໍາຫລວດທີ່ເອົາໃຈໃສ່ຜົນກະທົບທີ່ອາດເກີດຂຶ້ນຕໍ່ຜູ້ທຸກຍາກ, ຍິງ-ຊາຍ ທັງກ່ອນ ແລະ ຫລັງ ການກໍ່ສ້າງໂຄງການ. |
| **ຮັບຮອງເອົາໂຄງການຍ່ອຍ** | • ຮັບປະກັນວ່າ ໂຄງການໄດ້ຖືກຮັບຮອງເອົາຈາກທັງຍິງ-ຊາຍ, ຜູ້ທຸກຍາກ ຊຶ່ງເປັນຜູ້ກໍານົດຄວາມຕ້ອງການຂອງເຂົາເຈົ້າເອງ, | ແບບຂອງໂຄງການສະແດງໃຫ້ຊຸມຊົນເຫັນ ທັງອະທິບາຍລະອຽດ |
| **ການຈັດຕັ້ງປະຕິບັດ** | • ທັງຍິງຊາຍ, ຊົນເຜົ່າ ແລະ ຜູ້ທຸກຍາກ ເປັນເຈົ້າການ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການດ້ວຍເຂົາເຈົ້າເອງ,<br>• ກໍານົດໃຫ້ແມ່ຍິງເປັນຫົວໜ້າທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ. | ຄູ່ມືການຈັດຊື້ຈັດຈ້າງ, ບໍລິຫານການເງິນ, ວິຊາການ ແລະ ການຕິດຕາມຄວາມຄືບໜ້າ ແລະ ຝຶກອົບຮົມ |
| **ການຕິດຕາມກວດກາ ແລະ ລາຍງານ** | • ຮັບປະກັນວ່າຍິງ-ຊາຍ ໄດ້ປະກອບຄໍາຄິດຄໍາເຫັນ ເພື່ອລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ລວມທັງບັນຫາຂອງທັງຍິງ ແລະ ຊາຍ, ຜູ້ທຸກຍາກໃນທຸກໆຊົນເຜົ່າ ເອົາເຂົ້າໃນບົດລາຍງານ.<br>• ຈັດກອງປະຊຸມສະຫລຸບ ແລະ ຕິດຕາມຄວາມຄືບໜ້າໂຄງການຍ່ອຍຂັ້ນບ້ານ | ວິທີການຈັດກອງປະຊຸມ ແລະ ນໍາໃຊ້ແບບຟອມ SPIM.<br>ໃຊ້ແບບຟອມ CKM ໃນການຢ້ຽມຢາມ ແລະ ແລກ ປ່ຽນບົດຮຽນ. |
| **ການປະເມີນຜົນ** | • ຮັບປະກັນວ່າຄໍາຄິດຄໍາເຫັນຂອງທັງ ຍິງ-ຊາຍ ໂດຍສະເພາະແມ່ນຜູ້ທຸກຍາກໃນທຸກໆຊົນເຜົ່າ ໄດ້ປະກອບເຂົ້າໃນບົດລາຍງານການປະເມີນຜົນໂຄງການ. | ຕາຕະລາງວິເຄາະແບບແຍກເພດ<br>ຮ່າງປະເມີນຜູ້ໄດ້ຮັບຜົນປະໂຫຍດ |

## ❖ ວິທີການສອນໃນພາກທີ IV:



1) ປະເມີນເບິ່ງການເຮັດວຽກຕົວຈິງຂອງຜູ້ປະສານງານກຸ່ມບ້ານໃນໄລຍະຜ່ານມາໂດຍການແບ່ງກຸ່ມຄົ້ນຄ້ວາເປັນ 3-4 ກຸ່ມ (ກຸ່ມຍິງ, ກຸ່ມຊາຍ, ກຸ່ມປະສົມ) ຄົ້ນຄວ້າ 3 ຄໍາຖາມ, ກຸ່ມລະ 1 ຄໍາຖາມ ຊຶ່ງມີຄໍາຖາມຄື:
   1. ທ່ານຈະສາມາດສົ່ງເສີມສິດສະເໝີພາບຍິງ-ຊາຍເຂົ້າໃນການຈັດຕັ້ງປະຕິບັດກອງປະຊຸມວາງແຜນພັດທະນາຂັ້ນບ້ານໄດ້ແນວໃດ?
   2. ຜ່ານມາທ່ານໄດ້ເຮັດແນວໃດແນ່ເພື່ອໃຫ້ແມ່ຍິງ ແລະ ຜູ້ທຸກຍາກເຂົ້າມາຮ່ວມ ແລະ ມີຄໍາຄິດຄໍາເຫັນໃນກອງປະຊຸມຕ່າງໆຢູ່ຂັ້ນບ້ານ?
   3. ໃນການຈັດຕັ້ງປະຕິບັດວຽກງານພັດທະນາຕົວຈິງ ທ່ານຈະໝັ້ນໃຈໄດ້ແນວໃດວ່າ ຍິງ ແລະ ຊາຍ ມີສິດສະເໝີພາບກັນໃນວຽກງານພັດທະນາ ແລະ ໄດ້ຮັບຜົນປະໂຫຍດຢ່າງມີຄວາມເປັນທໍາ ແລະ ເທົ່າທຽມກັນ.
2) ຕາງໜ້າກຸ່ມຂຶ້ນນໍາສະເໜີຜົນການຄົ້ນຄ້ວາ
3) ຄູຝຶກສະຫລຸບຜົນການຄົ້ນຄ້ວາ ແລະ ນໍາທິດສະດີໃນພາກທີ IV ແລະ ພາກອື່ນໆໃນຄູ່ມືນີ້ມາປະກອບໃສ່,
4) ນໍາສະເໜີບົດຮຽນທີ່ 1 ໃນພາກນີ້ ໃສ່ Power Point ພ້ອມທັງທວນຄືນບົດຮຽນໃນພາກທີ III, ບົດທີ 2,

## ❖ ອຸປະກອນໃນພາກທີ IV:



1) ສາມຮູບພາບຂອງສິດສະເໝີພາບຂະໜາດ A3 ຈໍານວນ 3 ຊຸດ
2) Power point ສໍາລັບສະຫລຸບໃຫ້ເຫັນທິດສະດີປະກອບ
3) ເຈ້ຍແຜນໃຫຍ່
4) ເຟີດ 2 ຫົວ
5) ກະດານຂາວ

# ພາກທີ V
# ທັກສະຜູ້ພາກຸ່ມສົນທະນາໃນເວລາປະຊຸມ/ຝຶກອົບຮົມ/ຜູ້ດຳເນີການສຳມະນາ (Role and Skill of Facilitator of focus group discussion)

## ບົດທີ 1:
## ທັກສະຜູ້ພາກຸ່ມສົນທະນາໃນເວລາປະຊຸມ/ຄູຝຶກ (Role and Skill of Facilitator of focus group discussion)

- ເປັນຜູ້ຕັ້ງຄຳຖາມໃຫ້ກຸ່ມສົນທະນາກັນ, ພາທຸກຄົນໃນກຸ່ມດຳເນີນການສົນທະນາຮ່ວມກັນ
- ບໍ່ຕັດສິນບັນຫາ, ບໍ່ມີຄຳຕອບໃຫ້ກຸ່ມ,
- ຊັກຊວນໃຫ້ກຸ່ມໃຫ້ຄຳຕອບຕໍ່ກັນເອງ
- ເປີດໂອກາດໃຫ້ທຸກຄົນໃນກຸ່ມໄດ້ເວົ້າຕາມທີ່ແຕ່ລະຄົນຄິດຕາມໃຈຂອງແຕ່ລະຄົນ, ບໍ່ວິຈານຄຳເຫັນວ່າຖືກ ຫລື ຜິດ, ທຸກຄຳຄິດຄຳເຫັນລ້ວນແຕ່ມີຄວາມສຳຄັນ.

### 1) **ຜູ້ພາກຸ່ມສົນທະນາ** (Facilitator of group discussion)

➢ **ບົດບາດ:**

- ເປັນຜູ້ຕັ້ງຄຳຖາມໃຫ້ກຸ່ມສົນທະນາກັນ, ພາທຸກຄົນໃນກຸ່ມດຳເນີນການສົນທະນາຮ່ວມກັນ
- ບໍ່ຕັດສິນບັນຫາ, ບໍ່ມີຄຳຕອບໃຫ້ກຸ່ມ,
- ຊັກຊວນກຸ່ມໃຫ້ຄຳຕອບຕໍ່ກັນເອງ
- ເປີດໂອກາດໃຫ້ທຸກຄົນໃນກຸ່ມໄດ້ເວົ້າຕາມທີ່ແຕ່ລະຄົນຄິດຕາມໃຈຂອງແຕ່ລະຄົນ, ບໍ່ວິຈານ.

➢ **ການວາງຕົວ:**

- ເປັນກາງ, ຖ້າບໍ່ຈຳເປັນ - ບໍ່ຄວນເວົ້າວ່າ "ເຫັນດີ" ຕໍ່ຄຳເຫັນຂອງຜູ້ໃດຜູ້ໜຶ່ງ, ແລ້ວ ຫລື "ບໍ່ເຫັນດີ" ຕໍ່ຄຳເຫັນຂອງຜູ້ໃດຜູ້ໜຶ່ງ,
- ບໍ່ຟັງແຕ່ຜູ້ດຽວເວົ້າ ຫລື ລົມນຳແຕ່ຜູ້ທີ່ເວົ້າໄດ້ດີ.

➢ **ການຟັງ :**

- ຟັງໃຫ້ເຂົ້າໃຈເລື່ອງຕາມຜູ້ເວົ້າໆໃຫ້ຟັງ, ບໍ່ສະຫລຸບເລື້ອງໃດໜຶ່ງດ້ວຍຄວາມເຂົ້າໃຈຂອງຕົນເອງໂດຍທີ່ຕົນເອງບໍ່ໄດ້ຢູ່ໃນເລື້ອງນັ້ນ.

- ຟັງທຸກຄົນໃນກຸ່ມເວົ້າຈົບແລ້ວ,
- ຟັງແລ້ວຄວນຮູ້ວ່າຕ້ອງສະຫລຸບສັງລວມຄຳຄິດເຫັນທັງຫລາຍໃນຈຸດໜຶ່ງກ່ອນໆຈະກ້າວໄປຈຸດໃຫມ່ທີ່ຕໍ່ເນື່ອງກັນ,
- ສັງລວມການສົນທະນາຕອນຈົບ. ຖ້າມີຄຳເຫັນບໍ່ລົງລອຍກັນກໍສະຫລຸບໃຫ້ເຫັນຄຸນຄ່າຂອງຄວາມແຕກຕ່າງກັນຂອງຄຳເຫັນເຫລົ່ານັ້ນ.

➢ **<u>ສະແດງຕົນເປັນນັກຟັງທີ່ດີ :</u>**

- ຟັງດ້ວຍການງຶກຫົວຟັງ, ຈ້ອງຕາເບິ່ງຜູ້ເວົ້າດ້ວຍຄວາມສົນໃຈ.
- ຟັງໄປນຳ ແລະ ບອກໄປນຳວ່າ "ຫນ້າສົນໃຈດີ"
- ຟັງແລ້ວຕົບມືຊົມເຊີຍໄປນຳບາງຄັ້ງຄາວເພື່ອເປັນການຜ່ອນຄາຍບັນຍາກາດ, ແຕ່ບໍ່ແມ່ນຊົມເຊີຍຄຳຕອບຂອງຜູ້ໃດໜຶ່ງສະເພາະ.
- ເມື່ອຜູ້ໜຶ່ງເວົ້າຈົບແລ້ວກໍຄວນຊວນໃຫ້ມີຜູ້ເວົ້າຜູ້ຕໍ່ໄປອີກ.
- ເມື່ອມີແຕ່ຜູ້ດຽວເວົ້າຫລາຍໂພດ, ດົນໂພດ, ຈົນເຮັດໃຫ້ການສົນທະນາກັນຂອງກຸ່ມບໍ່ສາມາດເກີດຂຶ້ນໄດ້, ຄວນຂໍດ້ວຍວິທີນີ້ມນວນເຊັ່ນ: ສະເໜີໃຫ້ຜູ້ນັ້ນເຊົາເວົ້າຈັກຄາວກ່ອນ ແລະຂໍໃຫ້ຜູ້ອື່ນເວົ້າຕໍ່ໄປ; ຖ້າຍັງແກ້ບໍ່ຕົກ, ຜູ້ຊ່ວຍໃນທີມຄວນພາຜູ້ກ່ຽວແຍກໄປສົນທະນານອກກຸ່ມຕາມທີ່ເໝາະສົມຫລືພັກຜ່ອນການສົນທະນາກ່ອນໄລຍະໜຶ່ງ.

➢ **<u>ການເວົ້າ :</u>**

- ເວົ້າດ້ວຍສຽງແຈ້ງ, ບໍ່ແຮງບໍ່ຄ່ອຍເກີນໄປ
- ບໍ່ເວົ້າໄວແລະບໍ່ເວົ້າຊ້າຈົນຜູ້ຟັງມີຄວາມສັບສົນ
- ເວົ້າເປັນວັກເປັນຕອນ.
- ຖ້າຄິດວ່າການເວົ້າອາດບໍ່ໃຫ້ຄວາມຈະແຈ້ງພຽງພໍກໍຄວນໃຊ້ການຂຽນຄຳສັບຫລັກ ຫລືແຕ້ມ, ຂີດ ແບບໃດໜຶ່ງຂອງເລື້ອງທີ່ເວົ້ານັ້ນໄປພ້ອມກັບເວລາເວົ້າເພື່ອຊ່ວຍໃຫ້ຜູ້ຟັງເຂົ້າໃຈເລື້ອງທີ່ເວົ້ານັ້ນໄດ້ງ່າຍຂຶ້ນ ແລະ ມອງເຫັນພາບໄດ້ໃນສະຫມອງ. (ເວົ້າແບບຮູບປະທຳ)
- ໃຊ້ພາສາເວົ້າໃນລະດັບເປັນແບບກັນເອງກັບຜູ້ເຂົ້າຮ່ວມສົນທະນາໃນກຸ່ມ, ບໍ່ໃຊ້ພາສາເອກກະສານ, ບໍ່ໃຊ້ພາສາຕ່າງປະເທດປົນເປໃສ່ນຳ, ບໍ່ໃຊ້ພາສາວິຊາການ.
- ໃຊ້ບາງຄຳສັບທ້ອງຖິ່ນ (ຂອງເຜົ່າ) ຂອງກຸ່ມເພື່ອສ້າງຄວາມສະບາຍໃຈແລະບັນຍາກາດໃຫ້ກຸ່ມຮູ້ສຶກສະບາຍໃຈ, ບໍ່ເຄັ່ງຕຶງ. ແຕ່ບໍ່ໝາຍຄວາມວ່າຈະໃຊ້ພາສາຊົນເຜົ່າເປັນເລື້ອງຕະຫລົກທີ່ຫຍໍ້ຫຍັນຊົນເຜົ່າ.
- ໃຊ້ປະໂຫຍກສັ້ນໆແລະງ່າຍດາຍ, ຟັງແລ້ວຫລາຍຄົນເຂົ້າໃຈໄດ້ງ່າຍດີ, ບໍ່ສັບສົນຜູ້ຟັງ.

- ເວົ້າແຕ່ລະປະໂຫຍກໃຫ້ຈົບ, ຊັດເຈນ, ແລະເປັນວັກເປັນຕອນ.
- ທັງເວົ້າທັງຫລຽວເບິ່ງຜູ້ຟັງ, ສັງເກດວ່າຜູ້ຟັງເຂົ້າໃຈບໍ່, ຍັງຟັງຢູ່ບໍ່.

➢ **ຊຸກຍູ້ໃຫ້ທຸກຄົນໄດ້ອອກຄຳເຫັນ :**

- ເມື່ອມີຄົນໃດໜຶ່ງມິດງຽບແລະບໍ່ຍອມປາກເວົ້າເລີຍຄວນສະເໜີໃຫ້ລາວເວົ້າດ້ວຍວິທີຖາມວ່າຈາກປະສົບການຂອງລາວເອງຕົວຢ່າງ: ຖາມລາວວ່າເລື້ອງແບບນັ້ນລາວເຄີຍພົບມາແລ້ວ ຫລື ຍັງແລະຂໍໃຫ້ລາວເລົ່າໃຫ້ຟັງ.
- ຖ້າໃນກຸ່ມມີຫລາຍຄົນບໍ່ມັກອອກຄຳເຫັນເລີຍຄວນໃຊ້ວິທີການຮ້ອງຊື່ແຕ່ລະຄົນໃຫ້ເປັນຜູ້ຕອບທຳອິດຕາມລຳດັບ; ຫລື ຈະໃຊ້ວິທີການໃດໜຶ່ງເພື່ອໃຫ້ພວກຜູ້ບໍ່ມັກອອກຄຳເຫັນນັ້ນໄດ້ເວົ້າເປັນພວກຜູ້ເວົ້າທຳອິດ.

➢ **ກ່າວຄຳຂອບໃຈ :**

ສະແດງຄວາມຂອບໃຈກັບກຸ່ມຫລັງຈາກການສົນທະນາແຕ່ລະວັກ, ແລະຕອນຈົບ. ແລະຄວນສະເໜີໃຫ້ກຸ່ມຖາມຄືນໄດ້, ຫລືຈະຖາມເລື້ອງໃດກໍໄດ້.

ຜູ້ອຳນວຍຄວາມສະດວກ:

- ຕາໃຫຍ່: ສັງເກດເບິ່ງໃຫ້ເຫັນວ່າ ທຸກຄົນໃນກຸ່ມສົນໃຈສົນທະນານຳກັນ
- ຫູໃຫຍ່: ງ່ຽງຫູຟັງຄຳຄິດເຫັນຂອງທຸກຄົນໃນກຸ່ມ, ຟັງທຸກເລື້ອງ, ບໍ່ແມ່ນຟັງແຕ່ເລື້ອງຂະແໜງການຂອງຕົນເອງ ຫລື ຟັງແຕ່ເລື້ອງທີ່ຕົນຢາກຟັງ;
- ຈິງໃຈ: ຈິງໃຈວ່າຢາກຟັງສຽງຈາກທຸກຄົນ, ເປີດໃຈຮັບຟັງຄຳເຫັນຂອງທຸກຄົນ;
- ມືເຖິງ: ບໍ່ໃຊ້ມືໄວ້ຊີ້ຕີນຊີ້ມືອອກຄຳສັ່ງກັບຄົນໃນກຸ່ມ;
- ຂາເຖິງ: ຍ່າງເຂົ້າໄປນັ່ງໃກ້ກັບຄອບຄົວຜູ້ທຸກຈົນ, ແມ່ຍິງຜູ້ລຳບາກ, ແມ່ຍິງຜູ້ເຂັ້ມແຂງ, ຜູ້ໃຫຍ່ ແລະເດັກນ້ອຍ;
- ປາກ : ຖາມແບບກະຕຸ້ນໃຫ້ຄົນຄິດ, ບໍ່ໃຫ້ຄຳອະທິບາຍ ຫລືສອນຜູ້ອື່ນຫລາຍໂພດ.

## 2) ການກະກຽມ:

- ຜູ້ຈະພາກຸ່ມສົນທະນາຈຳເປັນຕ້ອງໃຊ້ເວລາກະຕຽມຕົນເອງແລະທີມຂອງຕົນເອງໃຫ້ເຂົ້າໃຈຫົວຂໍ້ເລື່ອງແລະຈຸດປະສົງທີ່ຕ້ອງການໃຫ້ກຸ່ມສົນທະນາ. ສະມາຊິກຄວນຮູ້ໄວ້ກ່ອນວ່າໜ້າວຽກ

ຂອງຕົນເອງທີ່ຈະເຮັດນັ້ນແມ່ນຫຍັງ. ການກະຕຽມຕົວເອງກ່ອນ, ຊ້ອມຕົວເອງໄວ້ກ່ອນ ເປັນເລື່ອງທີ່ຈະຮັບປະກັນເຮັດໃຫ້ການເຮັດຕົວຈິງໄດ້ດີ.

- ກ່ອນຈະຈັດການສົນທະນາກັບກຸ່ມຕ້ອງຈັດສະຖານທີ່ໄວ້ກ່ອນ, ກວດເບິ່ງວ່າຈະມີບ່ອນນັ່ງສະດວກສຳລັບທຸກຄົນບໍ່, ເປັນບ່ອນຈະສົນທະນາກັນໄດ້ໂດຍບໍ່ມີສິ່ງລົບກວນຫລືບໍ່ມີຜູ້ລັກຟັງ (ຖ້າເປັນກໍລະນີຈຳເປັນ).
- ຄວນຈັດສະຖານທີ່ໄວ້ກ່ອນເພື່ອໃຫ້ທຸກຄົນໄດ້ນັ່ງແຖວດຽວກັນ ເຊັ່ນນັ່ງເປັນຮູບກົ່ງວົງເດືອນ ເພາະທຸກຄົນຈະໄດ້ເຫັນໜ້າກັນດີແລະຮູ້ວ່າສຶກວ່າທຸກຄົນເທົ່າທຽມກັນເພື່ອຈະຮ່ວມກັນສົນທະນາ.

## 3) <u>ທີມງານ :</u>

ທີມງານທີ່ຈະພາກຸ່ມດຳເນີນການສົນທະນາ, ສ່ວນຫລາຍປະກອບມີ 3 ຄົນຄື: ຜູ້ຖາມ, ຜູ້ບັນທຶກຄຳຄິດເຫັນຈາກການສົນທະນາຂອງກຸ່ມ, ຜູ້ສັງເກດການທີ່ຈະຊ່ວຍຕິດຕາມວ່າການຖາມໄປຕາມຈຸດປະສົງທີ່ຢາກຖາມ, ເບິ່ງບັນຍາກາດການສົນທະນາເພື່ອຊ່ວຍປັບ, ເພື່ອເຕືອນໃຫ້ພັກຜ່ອນໃນເວລາເໝາະສົມ.

## 4) ທັດສະນະການວາງຕົວຂອງຜູ້ພາກຸ່ມສົນທະນາ :

- ບໍ່ວາງຕົວແບບຂົ່ມຂູ່, ຫລືຖືໂຕເອງວ່າສຳຄັນກວ່າຜູ້ອື່ນຢູ່ໃນທີມ ຫລື ຢູ່ໃນກຸ່ມສົນທະນາ;
- ແຕ່ງຕົວສະອາດງ່າຍດາຍ ແລະ ໃກ້ກັບລະດັບດຽວກັນກັບຜູ້ຕອບ ຫລື ບໍ່ຕ່າງກັບຜູ້ຕອບຈົນເກີນໄປ (ບໍ່ແຕ່ງໂຕໂອ້ອວດລົດນິຍົມ ຫລື ໃສ່ເງິນຄຳຫລາຍຈົນເກີນໄປ);
- ວາງຕົວແບບເປັນກັນເອງກັບທຸກຄົນໃນກຸ່ມດ້ວຍທ່າທາງສະບາຍໆ;
- ສະແດງຄວາມສົນໃຈແບບເປັນເພື່ອນກັບທຸກຄົນໃນກຸ່ມ;
- ບໍ່ສ້າງບັນຍາກາດທາງການໂພດແບບໃດໜຶ່ງ ເພື່ອເລີ່ມຕົ້ນການສົນທະນາ ແລະ ຕະຫລອດການສົນທະນາ;
- ໃຊ້ພາສາຮ່າງກາຍ (ສາຍຕາ, ຮອຍຍິ້ມ, ແບບນັ່ງ, ແລະອື່ນໆ...) ທີ່ສ້າງຄວາມໝັ້ນໃຈໃຫ້ຜູ້ຕອບໃນກຸ່ມເຫັນແລ້ວ ມີສັດທາຢາກຕອບ ແລະ ຕອບດ້ວຍຄວາມຈິງໃຈ ແລະ ກ້າທີ່ຈະຕອບ, ກ້າທີ່ຈະເປີດໃຈສົນທະນານຳກຸ່ມ.

## 5) ເຕັກນິກການຖາມ:

### 5.1) <u>ການຖາມ :</u>

ເປັນຄວາມສາມາດທີ່ຈຳເປັນສະເພາະຜູ້ຈະເປັນຜູ້ພາກມຸ່ດຳເນີນການສົນທະນາ. ເພື່ອຈະເຮັດໃຫ້ກຸ່ມເກີດການສົນທະນາແລ້ວໃຫ້ຄຳຕອບຕໍ່ຄຳຖາມໃດໜຶ່ງນັ້ນ. ຄວນເຂົ້າໃຈກ່ອນວ່າ

ການສົນທະນາກັນ ບໍ່ແມ່ນການບອກຄຳຕອບທີ່ວ່າ ເຫັນດີ ຫລື ບໍ່ເຫັນດີ, ຫລື ວ່າແມ່ນ ແລະ ບໍ່ແມ່ນ.



ການສົນທະນາກັນແມ່ນການແລກ ປ່ຽນຄຳຄິດຄຳເຫັນຂອງທຸກຄົນໃນກຸ່ມກ່ຽວກັບເລື້ອງທີ່ຕັ້ງຂື້ນ, ໝາຍຄວາມວ່າກ່ຽວກັບເລື້ອງໃດໜຶ່ງທີ່ຕັ້ງຄຳຖາມຂື້ນ. ດັ່ງນັ້ນ, ຜູ້ຈະພາກຸ່ມດຳເນີນການສົນທະນາຂອງທຸກຄົນໃນກຸ່ມນັ້ນ, ກໍຕ້ອງຮູ້ໄວ້ກ່ອນວ່າຈະມີຈັກຄຳຖາມທີ່ຢາກຖາມກ່ຽວກັບເລື້ອງໃດໜຶ່ງ, ຕົວຢ່າງວ່າຢາກຮູ້ກ່ຽວກັບການສຶກສາຂອງເດັກນ້ອຍຢູ່ຂັ້ນບ້ານ, ຈະຕ້ອງຖາມເລື້ອງຫຍັງແດ່, ທີ່ລາວຄິດແລະຕຽມເປັນຫົວຂໍ້ເລື້ອງໄວ້, ທີ່ເອີ້ນວ່າ**ຫົວຂໍ້ຄຳຖາມຫລືຄຳຖາມຫລັກ.**ຫົວຂໍ້ຄຳຖາມຫລືຄຳຖາມຫລັກບໍ່ຄືກັນກັບຄຳຖາມທັງຫລາຍທີ່ມີລະອຽດໃນໃບສອບຖາມສະຖິຕິ (questionnaire) ທີ່ຕ້ອງຖາມຕາມລຳດັບທີ່ບັງຄັບໄວ້.

- ການພາກຸ່ມສົນທະນາບໍ່ບັງຄັບໃຫ້ຖາມຕາມລຳດັບຫົວຂໍ້ເລື້ອງຫລືຕາມຫົວຂໍ້ຄຳຖາມຫລັກ ເພາະແລ້ວແຕ່ ຄຳຕອບທີ່ຈະອອກມາຈາກກຸ່ມ, ແລ້ວຜູ້ຖາມກໍສາມາດຖາມເຈາະຈີ້ມໄດ້ຕະຫລອດ.
- ໂດຍປົກກະຕິແລ້ວ, ຄຳຖາມເຈາະຈີ້ມ (probing question) ສາມາດເປັນໄດ້ທັງຄຳຖາມປິດ ແລະ ຄຳຖາມເປີດ
- ຄຳຖາມເປີດແມ່ນພວກຄຳຖາມທີ່ລົງທ້າຍດ້ວຍຄຳວ່າ ແມ່ນຫຍັງແດ່, ມີແນວໃດແດ່, ເປັນຫຍັງ ແລະເຮັດແນວໃດ, ໃຜແດ່, ຍາມໃດຫລືຕອນໃດ, ຢູ່ບ່ອນໃດ, ເປັນຫຍັງຈິ່ງແມ່ນແບບນັ້ນ. ໃນພາສາອັງກິດແມ່ນເລີ່ມຕົ້ນດ້ວຍອັກສອນ W 5 ໂຕເຊັ່ນ : What, Why and how, Who, When, Where, why it is like that.

5.2) <u>ຕອນເລີ່ມຕົ້ນກ່ອນຖາມ :</u>

- ກ່ອນຈະເລີ່ມຕົ້ນຄວນອະທິບາຍຈຸດປະສົງວ່າຢາກຟັງຄຳຄິດເຫັນຂອງຊາວບ້ານກ່ຽວກັບເລື້ອງໃດແລະເປັນຫຍັງຈິ່ງຢາກຟັງເລື້ອງນັ້ນ. ຖ້າໃຊ້ວິທີອະທິບາຍດ້ວຍຮູບພາບຫລື

ແຕ້ມອະທິບາຍໄປພ້ອມກັບເວລາເວົ້າໄດ້ກໍ່ຍິ່ງດີເພາະຜູ້ຟັງຈະເຂົ້າໃຈໄດ້ງ່າຍແລະໄວກວ່າວິທີທີ່ມີແຕ່ເວົ້າໃຫ້ຟັງ.

- ຄວນບອກກັບກຸ່ມວ່າທຸກເລື່ອງທີ່ຈະສົນທະນາກັນນັ້ນແມ່ນເປັນການຟັງຄຳຄິດເຫັນຂອງແຕ່ລະຄົນເຊິ່ງມັນຍ່ອມແຕກຕ່າງກັນໄດ້ເພາະແຕ່ລະຄົນມີວິທີຄິດຕາມແບບ ຂອງໃຜຂອງລາວເພາະຕ່າງຄົນຕ່າງມີປະສົບການຊີວິດຕ່າງກັນ. ດັ່ງນັ້ນຈຶ່ງຂໍໃຫ້ທຸກຄົນສະບາຍໃຈທີ່ຈະສົນທະນາທຸກເລື້ອງ, ແລະຈະບໍ່ມີການເວົ້າວ່າຄຳຄິດເຫັນໃດໜຶ່ງຜິດຫລືຖືກ, ວ່າສະຫລາດຫລືໂງ່.
- ອະທິບາຍໃຫ້ກຸ່ມເຫັນວ່າການໃຫ້ຄຳຄິດເຫັນຂອງເຂົາເຈົ້ານັ້ນມີຄວາມສຳຄັນແນວໃດ, ແລ້ວສະເໜີຂໍຄວາມຮ່ວມມືໃຫ້ກຸ່ມສະແດງຄຳຄິດຄຳເຫັນດ້ວຍຄວາມສັດຊື່ແລະຈິງໃຈ.(ຕົວຢ່າງ: ການໃຫ້ຄຳຄິດເຫັນຂອງເຂົາເຈົ້າແມ່ນການເຂົ້າຮ່ວມໃນວຽກງານອັນໜຶ່ງທີ່ສຳຄັນກ່ຽວກັບເຂົາເຈົ້າແລະສັງຄົມທັງໝົດຄືແນວໃດ).
- ກ່າວຄຳຂອບໃຈທີ່ທຸກຄົນໃນກຸ່ມສະລະເວລາໃຫ້ເພື່ອມາຮ່ວມກັນເຮັດວຽກຂອງໂຄງການ.
- ໃຫ້ແຕ່ລະຄົນໃນທີມສະເໜີຕົນເອງເທື່ອລະຄົນ, ດ້ວຍການສະເໜີແບບເປັນກັນເອງແລະແຈ້ງບອກເລື້ອງທີ່ບໍ່ລື່ນກາຍຄົນໃນກຸ່ມຈົນເກີນໄປ. ແລ້ວສະເໜີໃຫ້ແຕ່ລະຄົນໃນກຸ່ມສະເໜີຕົນເອງ. ຄວນໃຊ້ວິທີເຮຮາແດ່, ແຕ່ບໍ່ຄວນແກ່ຍາວເວລາດົນ, ຄວນເຫັນໃຈຊາວບ້ານຜູ້ບໍ່ມີເວລາຫລາຍ.

5.3) <u>ເລີ່ມໃຊ້ຄຳຖາມ:</u>

- ສ້າງປະໂຫຍກຄຳຖາມທີ່ບໍ່ສັບສົນແລະບໍ່ຍາວ, ຟັງແລ້ວເຂົ້າໃຈງ່າຍແລະຖືກຕ້ອງຕາມຈຸດປະສົງທີ່ຢາກຖາມ.
- ຖາມແລະເວົ້າປະໂຫຍກຄຳຖາມຄືນອີກ, ຖ້າເຫັນວ່າຜູ້ຟັງມີຄວາມສັບສົນ, ຍ້ອນຄຳຖາມບໍ່ແຈ້ງ, ຄວນອະທິບາຍຄືນເປັນວັກເປັນຕອນ.
- ຖ້າຖາມແລະອະທິບາຍຄຳຖາມແລ້ວແຕ່ຜູ້ຟັງຍັງສັບສົນຍ້ອນພາສາຫລືປະໂຫຍກທີ່ໃຊ້ຖາມ, ຄວນຂໍໃຫ້ຜູ້ໃດໜຶ່ງໃນກຸ່ມນັ້ນຊ່ວຍອະທິຍາຍຄຳຖາມດ້ວຍພາສາຫລືວິທີເວົ້າຕາມແບບຂອງພວກຜູ້ຟັງທີ່ມາຈາກທ້ອງຖິ່ນດຽວກັນ.
- ຕັ້ງຄຳຖາມແລ້ວກໍເຊີນທຸກຄົນຕອບແຕ່ຕ້ອງບອກກັບກຸ່ມໂລດວ່າໝົດທຸກຄຳຕອບມີຄຸນຄ່າຄືກັນ,ໜ້າສົນໃຈເພື່ອສົນທະນາກັນ.
- ຖາມແລ້ວປ່ອຍເວລາໃຫ້ຜູ້ຕອບທັງຫລາຍຄິດກ່ອນ, ບໍ່ເລັ່ງໃຫ້ກຸ່ມຟ້າວຟັ່ງຫລືບໍ່ເວົ້າຄຳຖາມຄືນຢູ່ເລື້ອຍໆ/ຖີ່ໆໂພດຈົນເຮັດໃຫ້ຜູ້ຕອບສະມາທິບໍ່ໄດ້, ຄິດຫາຄຳຕອບບໍ່ໄດ້.
- ບໍ່ປ່ຽນປະໂຫຍກຄຳຖາມ, ເວົ້າປະໂຫຍກຄຳຖາມດຽວຄືນຢູ່ທຸກເທື່ອທີ່ຢາກຖາມຄືນ.

- ບາງຄັ້ງຖາມແລ້ວຄວນຍິ້ມຕອນທ້າຍຄຳຖາມເພື່ອຜ່ອນຄາຍບັນຍາກາດ, ຫລືໃຊ້ບາງຄຳເວົ້າຜ່ອຍຄາຍໄປນຳ.
- ເມື່ອຮູ້ສຶກວ່າຖາມຫລາຍຄຳຖາມແລ້ວ, ແລະດົນແລ້ວຄວນຊວນກຸ່ມພັກຜ່ອນກ່ອນ, ແລ້ວຈຶ່ງສົນທະນາຕໍ່ໄປ.

  ໝາຍເຫດ:ບາງຄົນມັກວາງໂມງເວລາໄວ້ກ່ອນວ່າຈະມີການພັກຜ່ອນໃນເວລາແນ່ນອນໃດໜຶ່ງ (ຕົວຢ່າງ : ຕອນ 10 ໂມງຫລືອື່ນໆ); ວິທີນີ້ມັນອາດບໍ່ເໝາະສົມທຸກຄັ້ງເພາະມັນຄວນຂຶ້ນກັບບັນຍາກາດຂອງການສົນທະນາແລະຫົວຂໍ້ທີ່ກຳລັງສົນທະນາຂອງກຸ່ມ.

## ບົດທີ 2:
## ບັນຫາທີ່ຜູ້ພາກຸ່ມສົນທະນາ/ຄູຝຶກອາດປະເຊີນ

### 1. ຜູ້ເຂົ້າຮ່ວມທີ່ງຽບ/ອາຍ



**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ປະສານສາຍຕາ
- ປຸ່ງນຄຳຖາມໃຫ້ງ່າຍຂຶ້ນ
- ມອບໝາຍໃຫ້ເຂົ້າຮ່ວມໃນການສົນທະນາກຸ່ມຍ່ອຍ
- ສະແດງການຮັບຮູ້/ຍ້ອງຍໍການປະກອບສ່ວນຂອງຜູ້ກ່ຽວ
- ຖາມ ແລະ ໂອ້ລົມເປັນການສ່ວນຕົວໃນລະຫວ່າງພັກຜ່ອນ
- ສະເໜີໃຫ້ອອກຄຳເຫັນເປັນບາງຄັ້ງ ເມື່ອເວລາ ເໝາະສົມທີ່ຈະເປັນຜຽນຂອງລາວ.

### 2. ຜູ້ເຂົ້າຮ່ວມທີ່ເວົ້າຫລາຍ



**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ເບິ່ງໂມງຂອງທ່ານ
- ໃຊ້ຈັງຫວະຢຸດຫາຍໃຈ
- ເນັ້ນເຖິງຈຸດທີ່ສອດຄ່ອງແລະເວລາທີ່ມີຈຳກັດ
- ສະເໜີໃຫ້ອະທິບາຍວ່າຄຳເຫັນຂອງລາວເພີ່ມຄຸນຄ່າໃຫ້ກັບຫົວຂໍ້ແນວໃດ
- ໂຍນຄຳເຫັນກັບໃຫ້ກັບກຸ່ມຄືນ
- ຢ້ຳເຖິງກຳນົດເວລາທີ່ມີຈຳກັດ

## 3. ຜູ້ເຂົ້າຮ່ວມທີ່ຮູ້ໝົດທຸກຢ່າງ



**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ກ່າວຄຳຂອບໃຈສຳລັບການປະກອບສ່ວນທີ່ມີຄ່າ; ຂຽນຄຳເຫັນດັ່ງກ່າວລົງໃສ່ກະດານ
- ທວນຄຳເວົ້າຄືນ ແລະ ຖືຄຳເຫັນດັ່ງກ່າວເທົ່າທຽມກັບຄຳເຫັນອື່ນໆ
- ໂຍນຄຳເຫັນ (ຂໍ້ຖົກຖຽງ) ໄປຫາກຸ່ມ
- ຫລີກລ້ຽງການອ້າງອີງເຖິງທັດສະນະສ່ວນຕົວຂອງທ່ານ
- ແຍກທັດສະນະຄະຕິ (ຄຳເຫັນ) ອອກຈາກສິ່ງທີ່ເກີດຂຶ້ນຕົວຈິງ

## 4. ຜູ້ເຂົ້າຮ່ວມເຮັດໂຕເປັນເຈົ້ານາຍ



**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ປ່ອຍໃຫ້ລາວອອກຄຳເຫັນ/ຄຳແນະນຳຕ່າງໆ
- ມອບໝາຍໜ້າທີ່ໃຫ້ເປັນຜູ້ອຳນວຍຄວາມສະດວກນຳພາການສົນທະນາໃນກຸ່ມຍ່ອຍ
- ໃຫ້ລາວເປັນເລຂາ
- ມອບໜ້າທີ່ພິເສດອື່ນໆ

## 5. ຜູ້ເຂົ້າຮ່ວມມັກລົມກັນ

**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**



- ສະເໜີໃຫ້ສຳມະນາກອນແລກປ່ຽນຄຳເຫັນທີ່ລົມກັນນັ້ນກັບໝົດກຸ່ມ
- ຍ່າງໄປຫາຜູ້ເຂົ້າຮ່ວມທີ່ກຳລັງລົມກັນ
- ເອີ້ນຊື່ຜູ້ເຂົ້າຮ່ວມດັ່ງກ່າວ ແລະ ຖາມວ່າເຂົາເຈົ້າຢາກເພີ່ມເຕີມ/ເສີມຄຳເຫັນຫຍັງບໍ່ກ່ຽວກັບຫົວຂໍ້ທີ່ກຳລັງອະທິບາຍ
- ຍ້ຳຄືນຈຸດທີ່ຫາກໍ່ອະທິບາຍຜ່ານໄປ ແລະ ຖາມຄຳເຫັນຂອງຜູ້ເຂົ້າຮ່ວມ.

## 6. ຜູ້ເຂົ້າຮ່ວມທີ່ຂັດຄ້ານຕະຫລອດ - ແຂງກະດ້າງ



**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ໃຈເຢັນ, ປ່ອຍໃຫ້ອາລົມສະທ້ອນອອກມາເປັນຄຳເວົ້າ (“ຂ້າພະເຈົ້າຮູ້ວ່າ ຫົວຂໍ້ນີ້ເປັນສິ່ງທີ່ທ່ານເປັນຫວ່ງ”)
- ທວນຄຳເວົ້າຄືນ, ສະຫລຸບໃຫ້ຈະແຈ້ງ ແລະ ເປັນຄຳເວົ້າ ທີ່ມີລັກສະນະເປັນກາງ;
- ສະເໜີໃຫ້ຍົກຕົວຢ່າງທີ່ເຈາະຈົງ ສຳລັບຄຳເຫັນທີ່ຍົກຂຶ້ນມາ
- ຊອກຫາດ້ານດີໃນຄຳເຫັນທີ່ຍົກຂຶ້ນ, ສະແດງຄຳເຫັນດີ, ແລະ ຜ່ານໄປ
- ຕອບຄຳເຫັນດັ່ງກ່າວ, ແຕ່ບໍ່ໃຫ້ເປັນການບຸກຕອບໂຕ້ຄືນ
- ເປີດກວ້າງໃຫ້ກຸ່ມສົນທະນາ
- ຊີ້ໃຫ້ເຫັນກຳນົດເວລາທີ່ມີຈຳກັດ, ຍົກການສົນທະນາຫົວຂໍ້ດັ່ງກ່າວໄວ້ຄັ້ງໜ້າ

## 7. ຜູ້ເຂົ້າຮ່ວມຕະຫລົກ



**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ຮ່ວມຂະບວນຫົວນຳຜູ້ກ່ຽວ
- ສອດແຊກເອົາເລື່ອງຊວນຫົວຂອງລາວ ໃຫ້ເຂົ້າກັບຫົວຂໍ້, ອາດຖືເປັນຫົວຂໍ້ໜຶ່ງ
- ນຳເອົາກຸ່ມກັບເຂົ້າມາສູ່ວຽກ
- ພະຍາຍາມບໍ່ສົນໃຈ/ມອງຂ້າງຄຳເວົ້າຕະຫລົກທີ່ບໍ່ເໝາະສົມ
- ທົບທວນຄຳເວົ້າຄືນ ແລະ ປ່ຽນເປັນຄຳເວົ້າ ທີ່ມີລັກສະນະເປັນກາງ.

## 8. ວິທີຈັດການກັບສິ່ງລົບກວນ, ສິ່ງບົ່ງເບນຄວາມສົນໃຈ




**ວິທີການແກ້ໄຂທີ່ອາດນຳໃຊ້ໄດ້...?**

- ເລືອກບ່ອນທີ່ເປັນຈຸດໃຈກາງ
- ຫ້ອງທີ່ເໝາະສົມ
- ຈັດໃຫ້ມີອາຫານຫວ່າງ
- ອາດພິຈາລະນາໃຫ້ມີ ອາຫານທ່ຽງ
- ຕົກລົງກ່ຽວກັບລະບຽບ: ເວລາ, ໂທລະສັບ
- ຈັດການກັບສຽງລົບກວນພາຍນອກ
- ຮັບປະກັນໃຫ້ມີສະພາບແວດລ້ອມ ແລະ ບັນຍາກາດທີ່ດີ.

## ບົດທີ 3:
## ກົດເກນ 10 ຢ່າງຂອງການເປັນຜູ້ພາກຸ່ມສົນທະນາ/ຄູຝຶກ

ເປົ້າໝາຍ: ເພື່ອປັບປຸງທັກສະການອຳນວຍຄວາມສະດວກໃຫ້ກຸ່ມຂອງທ່ານ.

1) ຟັງຫລາຍກວ່າເວົ້າ.

ຈົ່ງຢ່າບັນລະຍາຍ. ວາງຕົວແບບມີປະຕິກິລິຍາສອງສົ້ນໃນການສົນທະນາ. ສະເໜີແນວຄວາມຄິດຫລັກແລະຈຸດປະສົງໃນຕອນເລີ່ມຕົ້ນປະຊຸມ, ສະນັ້ນຈົ່ງປ່ອຍໃຫ້ສຳມະນາກອນເປັນຜູ້ປາກເວົ້າເກືອບທັງໝົດ.

2) ຮັບປະກັນການມີສ່ວນຮ່ວມຢ່າງເຕັມສ່ວນ.

ປະຕິບັດຕໍ່ສຳມະນາກອນຢ່າງສະເໝີພາບແລະໃຫ້ການນັບຖື. ໝັ້ນໃຈວ່າຜູ້ທີ່ບໍ່ມັກເວົ້າຈະໄດ້ໂອກາດໃນການກ່າວເວົ້າ. ຈົ່ງຢ່າປ່ອຍໃຫ້ຜູ້ໃດໜຶ່ງມີອິດທິພົນເໜືອກອງປະຊຸມ (ໂດຍການໃຊ້ສຽງດັງ, ໃຊ້ພາສາທີ່ແຂງກະດ້າງ, ເວົ້າຫລາຍໂພດ) - ເຖິງແມ່ນວ່າຈະແມ່ນພະນັກງານລັດ, ກຸ່ມບ້ານຫລືຄະນະບ້ານ. ນຳໃຊ້ "ໄມ້ສັນຍາລັກປ່ຽນຜຽນເວົ້າ" ເພື່ອຊ່ວຍເຮັດໃຫ້ກຸ່ມຮັກສາຈຸດສຸມຄວາມສົນໃຈ.

3) ໝັ້ນໃຈວ່າຈະໄດ້ຍິນສຽງຂອງແມ່ຍິງ ໂດຍສະເພາະແມ່ນແມ່ຍິງຊົນເຜົ່າ ແລະ ແມ່ຍິງທີ່ງຽບ.

ຊຸກຍູ້ແມ່ຍິງຢ່າງເປີດເຜີຍແລະກຸ່ມຊົນເຜົ່າໃຫ້ອອກຄຳຄິດເຫັນຂອງເຂົາເຈົ້າ. ຈັດການປະຊຸມແຍກຕ່າງຫາກສຳລັບແມ່ຍິງ, ຖ້າຫາກຕ້ອງການ. ( ຖ້າຫາກຈຳເປັນ, ໝັ້ນໃຈວ່າມີການແປພາສາສຳລັບຜູ້ທີ່ປາກເວົ້າພາສາຊົນເຜົ່າ.)

4) ນຳໃຊ້ອຸປະກອນຊ່ວຍ ດ້ານທັດສະນະວິໄສ (ແບບເຮັດໃຫ້ເຫັນ/ປະຈັກຕາ).

ອຸປະກອນເຊັ່ນຮູບພາບ, ຮູບແຕ້ມ, ສັນຍາລັກເຮັດໃຫ້ກອງປະຊຸມໜ້າສົນໃຈຂຶ້ນຕື່ມ, ໂດຍສະເພາະຢູ່ບ່ອນທີ່ມີອັດຕາການກືກໜັງສືສູງ. ນຳໃຊ້ອຸປະກອນເຫລົ່ານີ້ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້.

5) ຮັບປະກັນ ການເຂົ້າໃຈເປັນລັກສະນະດຽວກັນ ກ່ຽວກັບຂໍ້ຄິດເຫັນຕົ້ນຕໍ.

ກວດກາຄືນວ່າທຸກຄົນເຂົ້າໃຈແນວຄວາມຄິດຕົ້ນຕໍ. ເຊື້ອເຊີນໃຫ້ສຳມະນາກອນອະທິບາຍຈຸດຕົ້ນຕໍຊຶ່ງທ່ານເອງປະສົງຢາກສື່ຄວາມໝາຍ ( ຕົວຢ່າງ "ທ່ານເຂົ້າໃຈແນວໃດເມື່ອຂ້າພະເຈົ້າກ່າວຄຳວ່າ "ການພັດທະນາແບບມີສ່ວນຮ່ວມ"). ຈົ່ງໃຊ້ຄຳສັບຕາມທີ່ທ່ານເອງເຂົ້າໃຈເພື່ອອະທິບາຍຈຸດທີ່ຜູ້ເຂົ້າປະຊຸມໄດ້ຖ່າຍທອດໃຫ້ຟັງ.

6) ຈົ່ງກະກຽມເປັນຢ່າງດີ.

- ໝັ້ນໃຈວ່າທ່ານຮູ້ຈັກເປັນການລ່ວງໜ້າວ່າກອງປະຊຸມຈະຈັດຂຶ້ນຢູ່ໃສ.
- ໝັ້ນໃຈວ່າອຸປະກອນທຸກຢ່າງທີ່ທ່ານຕ້ອງການມີພ້ອມໃຊ້ (ແຜ່ນເຈັ້ຍ, ປາກກາຂຽນ , ອຸປະກອນໂຄສະນາເຜີຍແຜ່ ( IEC), ເຄື່ອງມືຮັບໃຊ້ການນັບ/ກະຕ່າ).
- ປະພຶດເປັນແບບຢ່າງທີ່ດີໂດຍການມາປະຊຸມຖືກຕາມເວລາ.
- ຮູ້ຂະໜາດກຸ່ມທີ່ທ່ານຈະເຮັດວຽກນໍາແລະວ່າທ່ານປະສົງຢາກແຍກອອກເປັນກຸ່ມຍ່ອຍຫລືບໍ່( ຖ້າເປັນເຊັ່ນນັ້ນ, ບົນພື້ນຖານອັນໃດທີ່ທ່ານຈະແບ່ງກຸ່ມຕົວຢ່າງແບ່ງຕາມເພດ, ອາຍຸ, ຊົນເຜົ່າ).

7) ມີຜູ້ບັນທຶກໜຶ່ງຄົນ.

ມອບໝາຍໃຫ້ຜູ້ໜຶ່ງ ( ອາດຈະແມ່ນຜູ້ອຳນວຍຄວາມສະດວກຂອງກຸ່ມບ້ານ) ເພື່ອເຮັດໜ້າທີ່ເປັນບັນທຶກ. ຜູ້ກ່ຽວບັນທຶກການຕັດສິນໃຈຕົ້ນຕໍໃນກອງປະຊຸມ, ຈົດກ່າຍເອົາແຜນທີ່ ( ຈາກການສ້າງແຜນວາດ) ແລະຮັກສາເວລາ (ບອກເຕືອນຜູ້ອຳນວຍຄວາມສະດວກເມື່ອໃດໄລຍະປະຊຸມຫາກພົດເວລາແລ້ວ).

8) ບໍລິຫານເວລາຢ່າງສະຫລາດ.

ຮັກສາກອງປະຊຸມໃຫ້ຢູ່ໃນຂອບເຂດເວລາແລະເນື້ອຫາ, ແຕ່ກໍຕ້ອງປ່ອຍໃຫ້ມີຄວາມຍືດຍຸ່ນ. ຮູ້ຈັກວ່າເມື່ອໃດຄວນເຂົ້າແຊກແຊງໃນການຄົ້ນຄວ້າເພື່ອເຮັດໃຫ້ກອງປະຊຸມດຳເນີນໄປຕາມກຳນົດການ.

9) ເລັງເປົ້າໝາຍໃສ່ກຸ່ມທີ່ມີຂະໜາດນ້ອຍກວ່າ.

ຈົ່ງພະຍາຍາມຮັກສາຂະໜາດຂອງກຸ່ມບໍ່ໃຫ້ກາຍ 25 ຄົນ. ຖ້າຫາກຈຳເປັນ, ໃຫ້ພິຈາລະນາແບ່ງອອກເປັນກຸ່ມຍ່ອຍແລະແຕ່ງຕັ້ງຜູ້ອຳນວຍຄວາມສະດວກແລະຜູ້ບັນທຶກຢ່າງລະໜຶ່ງຄົນສຳລັບແຕ່ລະກຸ່ມ. ພິຈາລະນາແບ່ງຜູ້ຊາຍແລະແມ່ຍິງອອກເປັນກຸ່ມຕ່າງຫາກແລະ, ຖ້າຫາກເພາະສົມຍ້ອນເຫດຜົນທາງພາສາ, ຈົ່ງແຍກກຸ່ມສະເພາະຊົນເຜົ່າ. ອາດເປັນປະໂຫຍດທີ່ຈະແບ່ງກຸ່ມອີງຕາມອາຍຸ ( ຕົວຢ່າງທີ່ແຕ່ງງານແລ້ວແລະຍັງເປັນໂສດ).

10) ຮັກສາການມີອາລົມເບີກບານ ສະນຸກສະໜານ.

ການມີສ່ວນຮ່ວມຈະດີກວ່າຖ້າຫາກການປະຊຸມເຕັມໄປດ້ວຍຄວາມມ່ວນຊື່ນ!

## ❖ ວິທີການສອນໃນພາກທີ V:



1) ປະເມີນເບິ່ງການເຮັດວຽກຕົວຈິງຂອງຜູ້ປະສານງານກຸ່ມບ້ານໃນໄລຍະຜ່ານມາໂດຍ ການແບ່ງກຸ່ມຄົ້ນຄ້ວາ ເປັນ 3-4 ກຸ່ມ (ກຸ່ມຍິງ, ກຸ່ມຊາຍ, ກຸ່ມປະສົມ)
   ຄົ້ນຄວ້າ 3ຄຳຖາມຄື:
   1. ໃນການຈັດກອງປະຊຸມຕ່າງໆຢູ່ຂັ້ນບ້ານທ່ານໄດ້ພົບເຈີບັນຫາຫຍັງແນ່ ແລະ ທ່ານມີວິທີແກ້ໄຂບັນຫານັ້ນໆ ແນວໃດແນ່?
   2. ທ່ານຈະເຮັດແນວໃດແນ່ເພື່ອໃຫ້ແມ່ຍິງ ແລະ ຜູ້ທຸກຍາກ ແລະ ທຸກຊົນເຜົ່າ ເຂົ້າມາຮ່ວມ ແລະມີຄຳຄິດຄຳເຫັນໃນກອງປະຊຸມຕ່າງໆຢູ່ຂັ້ນບ້ານໆ.
2) ຕາງໜ້າກຸ່ມຂຶ້ນນຳສະເໜີຜົນການຄົ້ນຄ້ວາ
3) ຄູຝຶກສະຫລຸບຜົນການຄົ້ນຄ້ວາ ແລະ ນຳທິດສະດີໃນພາກທີ IV ແລະພາກອື່ນໆໃນ ຄູ່ມືນີ້ມາປະກອບໃສ່;
4) ນຳສະເໜີບົດຮຽນທີ 2 ແລະ 3 ໃນພາກນີ້ ໃສ່ Power Point;
5) ຫລັງຈາກນັ້ນສະແດງບົດບາດຕົວຈິງ ໃນການຈັດກອງປະຊຸມວາງແຜນຂັ້ນບ້ານ: ມີ ປະຊາຊົນ ແລະ ຜູ້ພາກຸ່ມສົນທະນາ (ປະຊາຊົນ ເປັນຜູ້ສ້າງບັນຫາທີ່ອາດເກີດຂຶ້ນ ອີງຕາມທິດສະດີບົດທີ 2 ໃນພາກນີ້, ຜູ້ທີ່ສະແດງເປັນຜູ້ພາກຸ່ມສົນທະນາເປັນຜູ້ຫາ ວິທີແກ້ໄຂບັນຫາ).

## ❖ ອຸປະກອນຮັບໃຊ້ V:



1) ສາມຮູບພາບຂອງສິດສະເໜີພາບຂະໜາດ A3 ຈຳນວນ 3 ຊຸດ
2) Power point ສຳລັບສະຫລຸບໃຫ້ເຫັນທິດສະດີປະກອບ
3) ເຈ້ຍແຜນໃຫຍ່
4) ເຟີດ 2 ຫົວ
5) ກະດານຂາວ





**ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ**
**ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ**

**FROM THE PEOPLE, BY THE PEOPLE,**
**FOR THE PEOPLE**


ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ

**ຫ້ອງການ ທລຍ ສູນກາງ**
ຖະໜົນນາໄຮ່ດ່ຽວ, ບ້ານສີສະຫວາດໃຕ້, ເມືອງຈັນທະບູລີ,
P.O BOX 4625, ນະຄອນຫລວງວຽງຈັນ

**GOVERNMENT'S OFFICE**
**National Committee for Rural Development**
**& Poverty Eradication**
**POVERTY REDUCTION FUND**

Nahaidiao Road,
Sisavathtai Village,
Chanthaboury District,
P.O Box 4625,

+856 021 261 479 / 261 480
+856 021 261 481
info@prflaos.org
www.prflaos.org





ສະໜັບສະໜູນໂດຍ/ SUPPORTED BY:

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

Australian AID